# ບົດລາຍງານການປະເມີນພາຍໃນ

## ວິທະຍາໄລຄູ ສະຫວັນນະເຂດ




15 ສິງຫາ 2018


ທີ່ຕັ້ງ: ຖະໜົນເລກ 9 (km7) ບ້ານ ອຸດົມວິໄລ ນະຄອນໄກສອນພົມວິຫານ ແຂວງ ສະຫວັນນະເຂດ
ໂທ: 041-212180
ແຟັກ: 041-213667
E-mail: Savanttc@yahoo.com
Website: Savannakhet-ttc.edu.la

# ຄຳນຳ

ເພື່ອໃຫ້ສອດຄ່ອງກັບການປະຕິຮູບການສຶກສາແຫ່ງຊາດ ແລະ ແຜນການພັດທະນາຄຸນນະພາບຂອງກົມສ້າງຄູ ດັ່ງນັ້ນ, ວິທະຍໄລຄູ ສະຫວັນນະເຂດ ໄດ້ຖືເອົາການປະກັນຄຸນນະພາບການສຶກສາຂອງສະຖາບັນເປັນວຽກງານທີ່ມີບົດບາດສຳຄັນໃນການກະຕຸກຊຸກຍູ້ວຽກງານຕ່າງໆຂອງສະຖາບັນໃຫ້ມີຄວາມເຂັ້ມແຂງ ແລະ ພັດທະນາຢ່າງຕໍ່ເນື່ອງ ສະນັ້ນ, ສະຖາບັນສ້າງຄູ ຈຶ່ງໄດ້ຈັດຕັ້ງຄະນະຮັບຜິດຊອບເກັບກຳ, ລວບລວມ ແລະ ຊອກຫາຂໍ້ມູນຕ່າງໆຈາກຫ້ອງການ, ໜ່ວຍງານ ແລະ ພາກສ່ວນທີ່ກ່ຽວຂ້ອງເພື່ອສະໜອງໃຫ້ແກ່ການປະເມີນຄຸນນະພາບພາຍໃນ.

ສຳລັບການປະເມີນຄຸນນະພາບພາຍໃນຄັ້ງນີ້ ວິທະຍາໄລຄູ ສະຫວັນນະເຂດ ໄດ້ມີການປະຕິບັດ ແລະ ເອົາໃຈໃສ່ຕໍ່ກັບວຽກການປະເມີນຄຸນນະພາບພາຍໃນເປັນຢ່າງດີ ເຊິ່ງໄດ້ຮັບການແນະນຳຈາກພະແນກປະເມີນຜົນຂອງກົມສ້າງຄູ, ຜູ້ຊ່ຽວຊານ ແລະ ວິຊາການຈາກສູນປະກັນຄຸນນະພາບກະຊວງສຶກສາທິການ ແລະ ກິລາ ທີ່ໄດ້ຕິດຕາມ, ກວດກາ, ຊຸກຍູ້ຂະບວນການປະເມີນຜົນພາຍໃນ ພ້ອມນັ້ນ ຍັງໄດ້ຮັບການຊີ້ນຳເປັນຢ່າງດີຂອງຄະນະອຳນວຍການ, ຄະນະຫ້ອງການ, ຄະນະໜ່ວຍງານ ແລະ ອົງການຈັດຕັ້ງມະຫາຊົນພາຍໃນວິທະຍາໄລຄູ ສະຫວັນນະເຂດ.

ເຖິງວ່າບົດສັງລວມການກວດກາຄຸນນະພາບພາຍໃນຈະເປັນບົດທີ່ສົມບູນແລ້ວກໍຕາມ ກໍຍັງບໍ່ສາມາດປະສະຈາກໄດ້ເຖິງຄວາມບົກຜ່ອງທາງດ້ານເນື້ອໃນ ແລະ ການຈັດພິມ ສະນັ້ນ, ຈຶ່ງຮຽກຮ້ອງມາຍັງບັນດາທ່ານຜູ້ທີ່ໄດ້ສຶກສາ ແລະ ອ່ານບົດສັງລວມການກວດກາຄຸນນະພາບສະບັບນີ້ ເພື່ອຊ່ວຍປັບປຸງເຮັດໃຫ້ການປະເມີນຜົນຄັ້ງນີ້ໄດ້ຮັບໝາກຜົນຕາມຄາດໝາຍ.

ນະໂອກາດນີ້ ຂໍສະແດງຄວາມຂອບໃຈມາຍັງທຸກພາກສ່ວນທີ່ໄດ້ເຂົ້າຮ່ວມ ໂດຍສະເພາະແມ່ນທຸກໆຄຳເຫັນ ແລະ ຂໍ້ສະເໜີຕ່າງໆທີ່ເປັນປະໂຫຍດໃນການປັບປຸງບົດສັງລວມການປະເມີນຄຸນນະພາບພາຍໃນວິທະຍາໄລຄູ ສະຫວັນນະເຂດ. ທ້າຍສຸດນີ້ ທາງຄະນະຮັບຜິດຊອບຂໍສະແດງຄວາມຂອບໃຈ ແລະ ຂໍອວຍພອນໃຫ້ບັນດາທ່ານຈົ່ງມີແຕ່ຄວາມຜາສຸກ, ຄວາມຈະເລີນສີວິໄລ, ປະສົບຜົນສຳເລັດໃນໜ້າທີ່ການງານ ແລະ ມີຄວາມຢູ່ເຢັນເປັນສຸກຕະຫຼອດໄປ.

# ສາລະບານ

**ເນື້ອໃນ** **ໜ້າ**


ຄຳນຳ ........................................................................ I

ສາລະບານ .................................................................... II

I. ປະຫວັດຄວາມເປັນມາ ........................................................ 1

II. ຂະບວນການປະເມີນຕົນເອງ ..................................................... 3

- ຂໍ້ສະດວກ ................................................................ 3
- ຂໍ້ຫຍຸ້ງຍາກ .............................................................. 4

III. ບົດສັງລວມຫຍໍ້ (ມາດຕະຖານ 1-10) ............................................ 4

1. ດ້ານດີ ................................................................... 4
2. ຂໍ້ຄົງຄ້າງ ................................................................ 5
3. ຕາຕະລາງສັງລວມຜົນການປະເມີນຕົນເອງ ........................................... 6

IV. ຜົນການປະເມີນຕົນເອງ (ມາດຕະຖານທີ I ຫາ ມາດຕະຖານທີ X) ............................ 6

ມາດຕະຖານທີ I: ວິໄສທັດ, ພາລະກິດ ແລະ ຈຸດໝາຍ ........................................ 6

ມາດຕະຖານທີ II: ການຄຸ້ມຄອງ ແລະ ບໍລິຫານ ............................................ 9

ມາດຕະຖານທີ III: ການພັດທະນາບຸກຄະລາກອນ ......................................... 12

ມາດຕະຖານທີ IV: ຫຼັກສູດ ........................................................ 14

ມາດຕະຖານທີ V: ປະສິດທິຜົນຂອງການຮຽນ-ການສອນ ...................................... 17

ມາດຕະຖານທີ VI: ການສົ່ງເສີມນັກສຶກສາ ............................................. 19

ມາດຕະຖານທີ VII: ສະພາບແວດລ້ອມ ແລະ ແຫຼ່ງຮຽນຮູ້ .................................... 22

ມາດຕະຖານທີ VIII: ລະບົບຂໍ້ມູນຂ່າວສານ ............................................ 24

ມາດຕະຖານທີ IX: ລະບົບປະກັນຄຸນນະພາບພາຍໃນ ........................................ 27

ມາດຕະຖານທີ X: ການຄົ້ນຄວ້າວິທະຍາສາດ ແລະ ບໍລິການວິຊາການ ............................ 29

V. ການວິເຄາະຜົນການປະເມີນ ແລະ ແຜນພັດທະນາ ........................................ 31

1. ການວິເຄາະ (ການນຳໃຊ້ SWOT) ................................................ 31

1.1. ຈຸດແຂງ (Strength) ...................................................... 31

1.2. ຈຸດອ່ອນ (Weakness) ..................................................... 33

1.3. ໂອກາດ (Opportunity) .................................................... 33

1.4. ສິ່ງທ້າທາຍ (Treat) ....................................................... 34

2. ແຜນພັດທະນາ ແລະ ປັບປຸງ ........................................................................ 34
3. ຂໍ້ສະເໜີ ........................................................................ 35
VI. ເອກະສານຊ້ອນທ້າຍ ........................................................................ 36

# ບົດລາຍງານການປະເມີນຕົນເອງ ປະຈຳປີ 2018

## I. ປະຫວັດຄວາມເປັນມາ

ວິທະຍາໄລຄູ ສະຫວັນນະເຂດ ສ້າງຕັ້ງຂຶ້ນເມື່ອປີ 1969 ໂດຍໃສ່ຊື່ໃນເບື້ອງຕົ້ນວ່າ: ວິທະຍາໄລຄູ ສະຫວັນນະເຂດ ເຊິ່ງເອີ້ນຕາມພາສາຝຣັ່ງວ່າ: “Ecole Normale Savannakhet” ແລະ ມີການປ່ຽນແປງແຕ່ລະໄລຍະດັ່ງນີ້:

- **ໄລຍະທີ1**: ລະຫວ່າງປີ 1969-1975 ເອີ້ນວ່າວິທະຍາໄລຄູສະຫວັນນະເຂດ ເປັນໂຮງຮຽນກໍ່ສ້າງຄູຊັ້ນຕົ້ນໃນລະບົບ 6+2 (ລະບົບເລັ່ງລັດ) ແລະ ລະບົບ 6+4 ເປັນຄູປະຖົມສົມບູນ.
- **ໄລຍະທີ 2**: ເລີ່ມແຕ່ປີ 1975-1989 ປ່ຽນຊື່ເປັນໂຮງຮຽນກໍ່ສ້າງຄູຊັ້ນກາງເລກ 5 (ສຄ 5) ເຊິ່ງຮຽນໃນລະບົບ 8+3 ຮັບເອົານັກຮຽນຈົບມັດທະຍົມຕົ້ນ ແລະ ພະນັກງານຄູຊັ້ນຕົ້ນມາຮຽນຕໍ່ເອົາວຸດທິຄູຊັ້ນກາງ.
- **ໄລຍະທີ 3**: ລະຫວ່າງປີ 1984-1989, ໃນນີ້ເລີ່ມຈາກສົກຮຽນ 1984-1985 ໄດ້ສ້າງຕັ້ງ ສາຂາມະຫາວິທະຍາໄລສ້າງຄູ ສະຫວັນນະເຂດ (ມສຄ ສະຫວັນນະເຂດ) ໂດຍແຍກເອົາອາຄານສ່ວນໜຶ່ງຂອງ ສຄ 5 ໄປນຳໃຊ້, ມີຄະນະອຳນວຍການຂອງໃຜລາວ, ມີລະບົບຫຼັກສູດການຮຽນແຕກຕ່າງກັນຄື: ສາຂາ ມສຄ ຮຽນໃນລະບົບ (11+4) ຮັບເອົານັກຮຽນຈົບມັດທະຍົມປາຍ ແລະ ພະນັກງານຄູຊັ້ນກາງມາຮຽນຕໍ່ ເມື່ອສຳເລັດການສຶກສາຈະໄດ້ຮັບວຸດທິຄູປະລິນຍາຕີ. ເຊິ່ງສາຂາ ມສຄ ມີໜ້າທີ່ກໍ່ສ້າງຄູໃຫ້ 6 ແຂວງໃນເຂດພາກກາງ ແລະ ໃຕ້ຄື: ຄຳມ່ວນ, ສະຫວັນນະເຂດ, ຈຳປາສັກ, ສາລະວັນ, ອັດຕະປື ແລະ ເຊກອງ, ສ່ວນ ສຄ 5 ກໍ່ສືບຕໍ່ເປີດລະບົບ 8+3 ເພື່ອກໍ່ສ້າງຄູຊັ້ນກາງ.
- **ໄລຍະທີ 4:** ປະຕິບັດຕາມຂໍ້ຕົກລົງຂອງລັດຖະມົນຕີກະຊວງສຶກສາທິການ ແລະ ກິລາ (ກະຊວງສຶກສາວັດທະນະທຳ ແລະ ກິລາ) ສະບັບເລກທີ 226/ສວກ/89, ລົງວັນທີ 29/3/89 ສຄ 5 ແລະ ມສຄ ໄດ້ໂຮມເຂົ້າເປັນສະຖາບັນການສຶກສາ ດຽວກັນ ແລະ ປ່ຽນຊື່ມາເປັນວິທະຍາໄລຄູສະຫວັນນະເຂດ (ວຄສ). ເປີດຮຽນໃນຫຼັກສູດລະບົບ 11+1 ແລະ 11+3 ຮັບເອົານັກຮຽນມັດທະຍົມຕອນປາຍມາຮຽນຕໍ່.
- **ໄລຍະທີ 5**: ສົກຮຽນ 2009-2011 ໄດ້ປ່ຽນລະບົບ 11+1 ເປັນ 11+2 ສາຍຄູອະນຸບານ ແລະ ຄູປະຖົມ, ເປີດຕື່ມປະລິນຍາຕີລະບົບ 11+5, ລະບົບ 11+3+2 ແລະ ສົກຮຽນ 2010-2011 ເປີດສາຍຄູຊັ້ນກາງ 9+3 ຄູອະນຸບານ ແລະ ປະຖົມ, ລະບົບ 11+3+3 ຄູປະລິນຍາຕີພາກພັກທ້າຍປີຮຽນ.
- **ໄລຍະທີ 6**: ສົກຮຽນ 2011-2012 ເລີ່ມເປີດລະບົບການຮຽນການສອນຄູປະຖົມ ແລະ ຄູອະນຸບານລະດັບຊັ້ນສູງລະບົບ 12+2, ປະລິນຍາຕີ ລະບົບ 12+4 ຮັບເອົານັກຮຽນທີ່ຮຽນຈົບມັດທະຍົມຕອນປາຍມາຮຽນຕໍ່.
- **ໄລຍະທີ 7:** ສົກຮຽນ 2014-2015 ເຖິງປັດຈຸບັນ ວິທະຍາໄລຄູ ສະຫວັນນະເຂດໄດ້ສ້າງຄູລະດັບປະລິນຍາຕີມີທັງໝົດ 22 ສາຂາວິຊາ.

### ຈຸດພິເສດ

ວິທະຍາໄລຄູ ສະຫວັນນະເຂດ ເປັນວິທະຍາໄລສ້າງຄູພຽງແຫ່ງດຽວຂອງພາກກາງເຊິ່ງມີຈຸດພິເສດແຕກຕ່າງຈາກວິທະຍາໄລຄູອື່ນໆຄື: ຕັ້ງຢູ່ໃນເຂດເທດສະບານເມືອງ ໄກສອນ ພົມວິຫານຕາມແລວເສດຖະກິດພິເສດສະຫວັນນະເຂດ-ເຊໂນ ເຊິ່ງອ້ອມຮອບດ້ວຍສະຖານທີ່ບໍລິການທີ່ສຳຄັນຕ່າງໆເຊັ່ນ: ໄປສະນີ, ທະນາຄານ,

ຕະຫຼາດ, ຄລີນິກ, ໂຮງຮຽນອະນຸບານ, ປະຖົມ ແລະ ມັດທະຍົມ ເຊິ່ງເປັນເງື່ອນໄຂສະດວກໃນການລົງເຝິກປະສົບການ ແລະ ເຝິກຫັດວິຊາຊີບ. ວິທະຍາໄລຄູ ສະຫວັນນະເຂດມີເນື້ອທີ່ກ້ວາງຂວາງເຖິງ 44 ເຮັກຕາ ເຊິ່ງພຽງພໍກັບການຮອງຮັບແຜນພັດທະນາພື້ນຖານໂຄງລ່າງ ເພື່ອຮັບໃຊ້ໃຫ້ແກ່ການຮຽນ-ການສອນ ແລະ ການດຳເນີນກິດຈະກຳຕ່າງໆທີ່ປິ່ນອ້ອມວຽກງານວິຊາການເຊັ່ນ: ການປຸກສ້າງອາຄານຮຽນ, ຫ້ອງທົດລອງ, ຫ້ອງສະໝຸດ, ຫ້ອງຄອມພິວເຕີ, ຫ້ອງຟັງສຽງ ແລະ ຫ້ອງເຝິກສອນ.

## ສະຖິຕິພະນັກງານ, ຄູ-ອາຈານ

| ລ/ດ | ພາກສ່ວນ | ວຸດທິ | | | | | | | | | | | | | | | | | | | | | | | | ລວມ | | | |
|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|
| | | ປ.ເອກ | | | | ປ.ໂທ | | | | ປ.ຕຣີ | | | | ອະນຸປະລິນຍາ | | | | ຊັ້ນກາງ | | | | ຊັ້ນຕົ້ນ | | | | | | | |
| | | ລ | ຍ | ລ/ລຕ່ | ຍ | ລ | ຍ | ລ/ລຕ່ | ຍ | ລ | ຍ | ລ/ລຕ່ | ຍ | ລ | ຍ | ລ/ລຕ່ | ຍ | ລ | ຍ | ລ/ລຕ່ | ຍ | ລ | ຍ | ລ/ລຕ່ | ຍ | ລ | ຍ | ລ/ລຕ່ | ຍ |
| 1 | ພະນັກງານບໍລິຫານ | 0 | 0 | 0 | 0 | 0 | 0 | 0 | 0 | 5 | 4 | 1 | 1 | 4 | 1 | 0 | 0 | 0 | 0 | 0 | 0 | 1 | 0 | 0 | 0 | 10 | 5 | 1 | 1 |
| 2 | ຄູສອນ ວຄສ | 1 | 0 | 5 | 1 | 52 | 18 | 31 | 11 | 118 | 59 | 8 | 8 | 21 | 17 | 0 | 0 | 0 | 0 | 0 | 0 | 0 | 0 | 0 | 0 | 192 | 94 | 44 | 20 |
| 3 | ຄູສອນປະຖົມສາທິດ | 0 | 0 | 0 | 0 | 0 | 0 | 0 | 0 | 1 | 1 | 0 | 0 | 4 | 4 | 0 | 0 | 0 | 0 | 0 | 0 | 0 | 0 | 0 | 0 | 5 | 5 | 0 | 0 |
| 4 | ຄູສອນອະນຸບານ-ລ້ຽງເດັກ | 0 | 0 | 0 | 0 | 0 | 0 | 0 | 0 | 0 | 0 | 0 | 0 | 6 | 6 | 0 | 0 | 1 | 1 | 0 | 0 | 0 | 0 | 0 | 0 | 7 | 7 | 0 | 0 |
| **ລວມຍອດ:** | | **1** | **0** | **5** | **1** | **52** | **18** | **31** | **11** | **124** | **64** | **9** | **9** | **35** | **28** | **0** | **0** | **1** | **1** | **0** | **0** | **1** | **0** | **0** | **0** | **214** | **111** | **45** | **21** |

## ລະບົບການຈັດຕັ້ງ




## ຜົນງານທີ່ປະຕິບັດໄດ້ໃນໄລຍະຜ່ານມາ

ພາຍໃຕ້ການຊີ້ນຳນຳພາຂອງຄະນະພັກ, ຄະນະອຳນວຍການ ແລະ ການມີສ່ວນຮ່ວມທີ່ຫ້າວຫັນຂອງບັນດາຄູອາຈານ-ພະນັກງານ ວິທະຍາໄລຄູ ສະຫວັນນະເຂດ ໄດ້ຮັບຫຼຽນໄຊອິດສະຫຼະຊັ້ນ II ດີເດັ່ນທາງດ້ານການລຶບລ້າງການບໍ່ຮູ້ໜັງສືທົ່ວ ແຂວງ ສະຫວັນນະເຂດ ໃນປີ 1984 ແລະ ຫຼຽນໄຊແຮງງານຊັ້ນ II ດີເດັ່ນການພັດທະນາການສຶກສາ 10 ປີໃນປີ 1985, ທຸງໄຊນຳໜ້າຂອງສະຖາບັນສ້າງຄູດ້ານການປົກປັກຮັກສາສິ່ງແວດລ້ອມໃນສິກຮຽນ

2002-2003, ທຸງໄຊດີເດັ່ນຮອບດ້ານຂອງສະຖາບັນສ້າງຄູ 3 ປີຊ້ອນໃນສົກຮຽນ 2003-2006, ຂັນກຽດຕິຍົດສະຖາບັນສ້າງຄູດີເດັ່ນຮອບດ້ານໃນສົກຮຽນ 2006-2007, ໃບຍ້ອງຍໍສະຖາບັນສ້າງຄູດີເດັ່ນຮອບດ້ານໃນສົກຮຽນ 2007-2008, ທຸງໄຊນໍາໜ້າສະຖາບັນສ້າງຄູດີເດັ່ນ ໃນສົກຮຽນ 2008-2009, ທຸງໄຊນໍາໜ້າສະຖາບັນສ້າງຄູດີເດັ່ນດ້ານການປົກປັກຮັກສາສິ່ງແວດລ້ອມ ໃນສົກຮຽນ 2011-2012, ແຕ່ລະໜ່ວຍພັກໄດ້ປະກາດເປັນໜ່ວຍພັກເຂັ້ມແຂງຮູ້ນໍາພາຮອບດ້ານ 9 ສະໄໝຕິດຕໍ່ກັນ (2007-2015).

### ຂໍ້ມູນການຕິດຕໍ່

ວິທະຍາໄລຄູ ສະຫວັນນະເຂດຕັ້ງຢູ່ບ້ານອຸດົມວິໄລ, ເມືອງ ໄກສອນພົມວິຫານ, ແຂວງ ສະຫວັນນະເຂດ, ມີຂອບເຂດເນື້ອທີ່ທັງໝົດ 44 ເຮັກຕາ, ເນື້ອທີ່ດິນທີ່ນອນໃນໂຄງການສໍາຫຼວດແລ້ວ 42 ເຮັກຕາ, ມີທາງເຂົ້າ-ອອກ 4 ດ້ານ ເຊິ່ງຕິດແປະກັບເສັ້ນທາງເລກ 9. ໂທລະສັບ: (041) 212 180 ແຟັກ: (041) 213 667, E-mail: savanttc@yahoo.com, Website: www.savannakhet-ttc.edu.la

## II. ຂະບວນການປະເມີນຕົນເອງ

ການປະເມີນຄຸນນະພາບພາຍໃນຄັ້ງນີ້ໄດ້ຮັບການແນະນໍາ ແລະ ຊີ້ນໍາ ນໍາພາຈາກຫຼາຍພາກສ່ວນທີ່ມີສ່ວນກ່ຽວຂ້ອງໃນການພັດທະນາສະຖາບັນເຊິ່ງປະກອບດ້ວຍ: ທ່ານຜູ້ອໍານວຍການພ້ອມດ້ວຍຄະນະ, ທ່ານຫົວໜ້າຫ້ອງການ, ຄະນະຫ້ອງການ, ຫົວໜ້າໜ່ວຍງານ, ຮອງໜ່ວຍງານ, ອົງການຈັດຕັ້ງກໍາມະບານ, ອົງການຈັດຕັ້ງແມ່ຍິງ, ອົງການຈັດຕັ້ງຊາວໜຸ່ມ ແລະ ຄະນະນັກສຶກສາ.

ວິທະຍາໄລຄູ ສະຫວັນນະເຂດພວກເຮົາໄດ້ມີຂໍ້ຕົກລົງໃນການແຕ່ງຕັ້ງຄະນະຮັບຜິດຊອບວຽກງານປະເມີນພາຍໃນຂອງສະຖາບັນ ໂດຍແມ່ນທ່ານຜູ້ອໍານວຍການ ເປັນປະທານຊີ້ນໍາລວມ, ຮອງຜູ້ອໍານວຍການຝ່າຍວັດຜົນ-ປະເມີນຜົນ ແລະ ພັດທະນາຄູ ເປັນຮອງປະທານ, ບັນດາຫົວໜ້າຫ້ອງການ, ຄະນະຫ້ອງການ ແລະ ຄູອາຈານໄດ້ມີສ່ວນຮ່ວມໃນການປະເມີນ (ຕາມຂໍ້ຕົກລົງເລກທີ 0040/ວຄສ/2011 ລົງວັນທີ 25/1/2011 ວ່າດ້ວຍການແຕ່ງຕັ້ງຄະນະຮັບຜິດຊອບກວດກາຄຸນະພາບພາຍໃນ).

ການປະເມີນຄຸນນະພາບພາຍໃນຄັ້ງນີ້ ວິທະຍາໄລຄູ ສະຫວັນນະເຂດ ໄດ້ດໍາເນີນການປະເມີນປີລະຄັ້ງ ໃນລະຫວ່າງເດືອນ ມິຖຸນາ ຫາເດືອນ ສິງຫາ ຂອງແຕ່ລະສົກຮຽນ.

### ຂໍ້ສະດວກ

ການປະເມີນຄຸນນະພາບພາຍໃນຄັ້ງນີ້ ໄດ້ຮັບການໃຫ້ທິດແນະນໍາ ແລະ ໃກ້ຊິດຕິດແທດຈາກພະແນກປະເມີນຜົນກົມສ້າງຄູ, ຜູ້ຊ່ຽວຊານ ແລະ ວິຊາການຈາກສູນປະກັນຄຸນນະພາບກະຊວງສຶກສາທິການ ແລະ ກິລາ. ຜູ້ອໍານວຍການ, ຄະນະອໍານວຍການ ເຫັນໄດ້ເຖິງຄວາມສໍາຄັນຂອງວຽກງານກວດກາ ແລະ ປະກັນຄຸນນະພາບຈຶ່ງໄດ້ອໍານວຍຄວາມສະດວກດ້ານງົບປະມານໃນການຈັດຕັ້ງປະຕິບັດ.

ຄະນະອໍານວຍການ, ຄະນະຫ້ອງການ, ຄະນະໜ່ວຍງານ, 3 ອົງການຈັດຕັ້ງມະຫາຊົນ ຕະຫຼອດຮອດຄູອາຈານ ໄດ້ໃຫ້ການຮ່ວມມືເປັນຢ່າງດີໃນການໃຫ້ຂໍ້ມູນ, ເອກະສານຕ່າງໆ ເພື່ອຮຽບຮຽງທາງດ້ານເນື້ອໃນ, ເປັນຫຼັກຖານປະກອບໃສ່ແຕ່ລະມາດຕະຖານ ແລະ ຕົວຊີ້ວັດ.

## ຂໍ້ຫຍຸ້ງຍາກ

ເຖິງຢ່າງໃດກໍຕາມທາງສະຖາບັນ ແລະ ຄະນະຮັບຜິດຊອບວຽກງານປະເມີນຄຸນນະພາບພາຍໃນ ຍັງພົບຂໍ້ຫຍຸ້ງຍາກບາງປະການເນື່ອງຈາກວ່າ: ການສະໜອງຂໍ້ມູນຂອງຄູ-ອາຈານ ໃນແຕ່ລະຫ້ອງການຍັງຊັກຊ້າ, ຄວາມເຂົ້າໃຈ ແລະ ເວລາໃນການຂຽນບົດລາຍງານມີໜ້ອຍ, ບາງເອກະສານທີ່ເປັນຫຼັກຖານໃຫ້ແກ່ການປະເມີນຄຸນນະພາບພາຍໃນ ຍັງກະແຈກກະຈາຍຢູ່ຕາມແຕ່ລະຫ້ອງການ ສະນັ້ນ, ຈິ່ງເປັນບັນຫາໃນການຮຽບຮຽງທາງດ້ານເນື້ອໃນ, ການຊອກຫາຫຼັກຖານ ເພື່ອມາປະກອບໃສ່ແຕ່ລະມາດຕະຖານ ແລະ ຕົວຊີ້ວັດໃນການປະເມີນຄັ້ງນີ້.

# III. ບົດສັງລວມຫຍໍ້ (ມາດຕະຖານ 1-10)

## 1. ດ້ານດີ

ຜ່ານການຈັດຕັ້ງປະຕິບັດວຽກງານຕ່າງໆ ວິທະຍາໄລຄູ ສະຫວັນນະເຂດ ສາມາດສັງລວມຈຸດດີໄດ້ 4 ດ້ານ ຄື: ການຄຸ້ມຄອງ-ບໍລິຫານ, ການພັດທະນາບຸກຄະລາກອນ, ສະພາບແວດລ້ອມ-ແຫຼ່ງຮຽນຮູ້ ແລະ ລະບົບຂໍ້ມູນຂ່າວສານ ເຊິ່ງລາຍລະອຽດດັ່ງນີ້:

ດ້ານການຄຸ້ມຄອງ ແລະ ບໍລິຫານ: ມີໂຄງຮ່າງການຈັດຕັ້ງຈະແຈ້ງ, ຜູ້ບໍລິຫານມີຄວາມສາມາດ ແລະ ວິໄສທັດໃນການບັນຈຸພະນັກງານເໝາະສົມກັບຕຳແໜ່ງງານ, ຄວາມຮັບຜິດຊອບ ແລະ ໜ້າວຽກຢ່າງລະອຽດ ເຮັດໃຫ້ຂະບວນການຮຽນ-ການສອນມີຄວາມສະດວກເປັນໄປຕາມແຜນພັດທະນາໃນແຕ່ລະໄລຍະ ເຊິ່ງສອດຄ່ອງກັບວິໄສທັດ, ພາລະກິດ ແລະ ຈຸດໝາຍທີ່ກຳນົດໄວ້ ເຊິ່ງສາມາດຍາດໄດ້ຫຼຽນໄຊອິດສະຫຼະຊັ້ນ 2, ຫຼຽນໄຊແຮງງານຊັ້ນ 2, ທຸງໄຊນຳໜ້າຂອງສະຖາບັນສ້າງຄູດ້ານການປົກປັກຮັກສາສິ່ງແວດລ້ອມ, ທຸງໄຊດີເດັ່ນຂອງສະຖາບັນສ້າງຄູໃນ 3 ສົກຮຽນຕິດຕໍ່ກັນ.

ດ້ານການພັດທະນາບຸກຄະລາກອນ: ວິທະຍາໄລຄູ ສະຫວັນນະເຂດໄດ້ຖືເອົາວຽກງານການພັດທະນາບຸກຄະລາກອນເປັນວຽກງານສຳຄັນເຊັ່ນ: ການບັນຈຸ ແລະ ສັບຊ້ອນພະນັກງານແມ່ນຖືກຕ້ອງ, ເໝາະສົມກັບວິຊາສະເພາະ ແລະ ຄວາມສາມາດ ຈິ່ງເຮັດໃຫ້ການຈັດຕັ້ງປະຕິບັດໜ້າທີ່ວຽກງານບັນລຸຕາມຈຸດປະສົງ ແລະ ມີປະສິດທິຜົນ. ມີການເຝິກອົບຮົມ ແລະ ຍົກລະດັບໃຫ້ແກ່ຄູທັງພາຍໃນ ແລະ ຕ່າງປະເທດ ເຫັນໄດ້ຈາກ 2 ສົກຮຽນຜ່ານມາມີຄູອາຈານໄດ້ຮັບການເຝິກອົບຮົມຈຳນວນ 35 ເທື່ອຄົນ, ເຮັດໃຫ້ຄູມີຄວາມສາມາດຖ່າຍທອດຄວາມຮູ້, ມີເຕັກນິກການສອນຫຼາກຫຼາຍທີ່ສົ່ງເສີມການຮຽນຮູ້ແບບເອົານັກຮຽນເປັນໃຈກາງ ແລະ ຄູອາຈານໄດ້ຮັບການຍົກລະດັບປະລິນຍາເອກ 1 ຄົນ, ຍິງ 0 ຄົນ, (ກຳລັງສຶກສາຕໍ່ 5 ຄົນ, ຍິງ 1 ຄົນ), ປະລິນຍາໂທ 52 ຄົນ, ຍິງ 18 ຄົນ, (ກຳລັງສຶກສາຕໍ່ 31 ຄົນ, ຍິງ 11 ຄົນ).

ດ້ານສິ່ງແວດລ້ອມ ແລະ ແຫຼ່ງຮຽນຮູ້: ວິທະຍາໄລຄູ ສະຫວັນນະເຂດ ມີສະພາບແວດລ້ອມທີ່ເອື້ອອຳນວຍໃຫ້ແກ່ການຮຽນຮູ້ເຊັ່ນ: ມີຕົ້ນໄມ້ ແລະ ພືດພັນຫຼາກຫຼາຍ, ມີລະບົບການຈັດການສິ່ງແວດລ້ອມທີ່ດີ ເຮັດໃຫ້ມີສະພາບອາກາດດີ, ມີອາຄານຮຽນທີ່ສະອາດ ແລະ ພຽງພໍໃນການຈັດການຮຽນ-ການສອນ, ມີສູນອຸປະກອນການສຶກສາ, ມີສູນອາຫານ, ມີສະຖານທີ່ຈອດລົດໃຫ້ແກ່ຄູອາຈານ ແລະ ນັກສຶກສາຢ່າງເປັນລະບຽບ ແລະ ປອດໄພ. ນອກຈາກນີ້ ຄູ-ອາຈານ ແລະ ນັກສຶກສາ ສາມາດນຳໃຊ້ຫ້ອງສະໝຸດ, ຫ້ອງທົດລອງ, ຫ້ອງເຝິກສອນ, ຫ້ອງຟັງສຽງ, ຫ້ອງຄອມພິວເຕີ, ຫ້ອງພູມສາດ ແລະ ອຸປະກອນທີ່ທັນສະໄໝເຂົ້າໃນການສຶກສາຄົ້ນຄວ້າ, ເຮັດໃຫ້ນັກສຶກສາໄດ້ປະຕິບັດຕົວຈິງ ສົ່ງຜົນໃຫ້ການຮຽນ-ການສອນມີປະສິດທິພາບດີຂຶ້ນ.

ດ້ານລະບົບຂໍ້ມູນຂ່າວສານ: ວິທະຍາໄລຄູ ສະຫວັນນະເຂດ ໄດ້ພັດທະນາເວັບໄຊ, ລະບົບຖານຂໍ້ມູນ, ບັນດາໂປຣແກຣມ ແລະ ຂໍ້ມູນຂ່າວສານຢ່າງຕໍ່ເນື່ອງ ສາມາດເຂົ້າເຖິງຂໍ້ມູນຂ່າວສານຜ່ານເວັບໄຊຂອງສະຖາບັນເຊັ່ນ: ຕາຕະລາງຮຽນ, ແຜນທີ່ຫ້ອງຮຽນ, ຮ່າງຕິດຕາມການຮ່ວມຮຽນ, ຮ່າງໃຫ້ຄະແນນ, ນັກສຶກສາສາມາດເບິ່ງຄະແນນແບບອອນລາຍ ແລະ ສາມາດຕິດຕາມຜົນງານການຄົ້ນຄວ້າວິໄຈຂອງຄູອາຈານໄດ້.

ນອກຈາກນີ້ ຍັງໄດ້ພັດທະນາໂປຣແກຣມຕ່າງໆເຊັ່ນ: ໂປຣແກຣມຫ້ອງສະໝຸດ ເພື່ອໃຫ້ຄູ-ອາຈານ ແລະ ນັກສຶກສາສາມາດຄົ້ນຫາປື້ມໃນຫ້ອງສະໝຸດໄດ້ຢ່າງສະດວກ ແລະ ວ່ອງໄວ. ໂປຣແກຣມການຄຸ້ມຄອງເອກະສານ ແບບ E-file ສາມາດເຂົ້າດາວໂຫຼດຜ່ານເວັບໄຊຂອງສະຖາບັນໄດ້. ໂປຣແກຣມລະບົບອອກປະກາສະນິຍະບັດ ແລະ ໃບຄະແນນນັກສຶກສາ ໂດຍຜ່ານລະບົບດັ່ງກ່າວ ສາມາດພິມປະກາສະນິຍະບັດ ແລະ ໃບຄະແນນໃຫ້ແກ່ນັກສຶກສາປີສຸດທ້າຍໃນແຕ່ລະສົກຮຽນໄດ້ຢ່າງຖືກຕ້ອງ ແລະ ທັນເວລາ. ໂປຣແກຣມລະບົບຂໍ້ມູນ ແລະ ຖານຂໍ້ມູນລາຍການຊັບສິນ ຜ່ານລະບົບດັ່ງກ່າວສາມາດບໍລິຫານ, ຄຸ້ມຄອງເຄື່ອງໃນສາງສະດວກສະບາຍ ແລະ ຮັບປະກັນການຕົກເຮ່ຍເສຍຫາຍ ຊ່ວຍໃຫ້ກົມການເງິນ ແລະ ພາກສ່ວນທີ່ກ່ຽວຂ້ອງສາມາດກວດສອບໄດ້. ນອກຈາກນີ້ ຍັງມີໂປຣແກຣມຄຸ້ມຄອງສະຖິຕິພະນັກງານ, ໂປຣແກຣມຄຸ້ມຄອງ-ຕິດຕາມນັກສຶກສານອນໃນ ແລະ ນອກຫໍພັກ, ໂປຣແກຣມເກັບກຳຂໍ້ມູນວຽກງານເຝິກປະສົບການ ແລະ ເຝິກຫັດວິຊາຊີບ.

## 2. ຂໍ້ຄົງຄ້າງ

ເຖິງແມ່ນວ່າວິທະຍາໄລຄູ ສະຫວັນນະເຂດໄດ້ມີພື້ນຖານໂຄງລ່າງທີ່ດີ ແລະ ສິ່ງອຳນວຍຄວາມສະດວກຫຼາຍສິ່ງຫຼາຍຢ່າງໃນການປະຕິບັດຫຼັກສູດການຮຽນ-ການສອນແລ້ວກໍຕາມ ແຕ່ພວກເຮົາຍັງມີບາງຂໍ້ຄົງຄ້າງດັ່ງນີ້: ວຸດທິການສຶກສາຂອງຄູ-ອາຈານບາງຄົນຍັງບໍ່ສອດຄ່ອງກັບບາງວິຊາທີ່ສອນ (ຄູວິຊາ ICT ແລະ ຄູວິຊາປ້ອງກັນຊາດ), ຄູ-ອາຈານບາງຄົນຍັງມີວຸດທິຕ່ຳກວ່າສາຂາບາງວິຊາທີ່ເປີດສອນ (ຄູສອນວິຊາລວມ) ແລະ ຍັງບໍ່ມີແພດປະຈຳໃນການປະຖົມພະຍາບານຂັ້ນພື້ນຖານເພື່ອຊ່ວຍເຫຼືອນັກສຶກສາໃນເວລາເຈັບເປັນ. ການເຮັດການວິໄຈຄູ-ອາຈານຈຳນວນໜຶ່ງ ຍັງບໍ່ທັນເຂົ້າໃຈເລິກເຊິ່ງກ່ຽວກັບຂະບວນການວິໄຈ ຍ້ອນພວກກ່ຽວຍັງບໍ່ທັນມີປະສົບການໃນການເຮັດບົດວິໄຈ, ແຫຼ່ງຂໍ້ມູນຂ່າວສານ, ເອກະສານອ້າງອີງ, ປື້ມຕຳລາກ່ຽວກັບການວິໄຈຍັງບໍ່ສາມາດຕອບສະໜອງຢ່າງພຽງພໍ.

### 3. ຕາຕະລາງສັງລວມຜົນການປະເມີນຕົນເອງ

| ລ/ດ | ມາດຕະຖານ | ຜົນການປະເມີນ | | | | |
|---|---|---|---|---|---|---|
| | | 1 | 2 | 3 | 4 | 5 |
| 1 | ວິໄສທັດ, ພາລະກິດ ແລະ ຈຸດໝາຍ | | | | 4.5 | |
| 2 | ການຄຸ້ມຄອງ ແລະ ບໍລິຫານ | | | | **4** | |
| 3 | ການພັດທະນາບຸກຄະລາກອນ | | | | **4.5** | |
| 4 | ຫຼັກສູດ | | | | **4** | |
| 5 | ປະສິດທິຜົນຂອງການຮຽນ-ການສອນ | | | | **4** | |
| 6 | ການສົ່ງເສີມນັກສຶກສາ | | | | **4.5** | |
| 7 | ສະພາບແວດລ້ອມ ແລະ ແຫຼ່ງຮຽນຮູ້ | | | | **4.5** | |
| 8 | ລະບົບຂໍ້ມູນຂ່າວສານ | | | | **4.5** | |
| 9 | ລະບົບປະກັນຄຸນນະພາບພາຍໃນ | | | | **4** | |
| 10 | ການຄົ້ນຄວ້າວິທະຍາສາດ ແລະ ບໍລິການວິຊາການ | | | | **4.5** | |
| | ຕີລາຄາລະດັບຄຸນນະພາບໂດຍລວມ (ເປັນເລກຖ້ວນ 1-5) | **4.30** | | | | |

## IV. ຜົນການປະເມີນຕົນເອງ (ມາດຕະຖານທີ I ຫາ ມາດຕະຖານທີ X)

### ມາດຕະຖານທີ I: ວິໄສທັດ, ພາລະກິດ ແລະ ຈຸດໝາຍ

### 1. ການຈັດຕັ້ງປະຕິບັດ

ການສຶກສາເປັນເຄື່ອງມືທີ່ສໍາຄັນໃນການພັດທະນາຊັບພະຍາກອນມະນຸດເປັນພື້ນຖານ ແລະ ປັດໃຈຂອງການພັດທະນາທາງດ້ານເສດຖະກິດ, ການເມືອງ ແລະ ສັງຄົມ (ກະຊວງສຶກສາທິການ ແລະ ກິລາ). ລັດຖະບານແຫ່ງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ໄດ້ມີແນວທາງໃນການພັດທະນາການສຶກສາຊັ້ນສູງໃຫ້ມີຄຸນນະພາບ ແລະ ມີມາດຕະຖານໂດຍເນັ້ນໃສ່ການເປັນພົນລະເມືອງດີ, ມີການສຶກສາ, ມີຄວາມຮູ້ດ້ານວິຊາຊີບ, ມີຫົວຄິດປະດິດສ້າງ, ມີຄວາມຕື່ນຕົວໃນການພັດທະນາຕົນເອງໃນການພັດທະນາປະເທດຊາດ. ເພື່ອໃຫ້ໄດ້ບຸກຄະລາກອນທີ່ມີຄຸນະພາບນັ້ນ (ກະຊວງສຶກສາທິການ ແລະ ກິລາ, 2010 ໜ້າທີ 23) ພົນລະເມືອງລາວທຸກຄົນຕ້ອງໄດ້ຮັບການພັດທະນາພາຍໃຕ້ 5 ຫລັກມູນການສຶກສາແຫ່ງຊາດ. ພາຍໃຕ້ວິໄສທັດທີ່ວ່າ "ຮອດປີ 2030 ພົນລະເມືອງລາວທຸກຄົນຕ້ອງໄດ້ຮັບການສຶກສາທີ່ມີຄຸນະພາບຢ່າງສະເໝີພາບ ແລະ ເທົ່າທຽມກັນ ເພື່ອໃຫ້ເຂົາເຈົ້າໄດ້ພັດທະນາຕົນເອງ ໃຫ້ກາຍເປັນພົນລະເມືອງດີຂອງຊາດ, ມີຄຸນສົມບັດ, ມີສຸຂະພາບເຂັ້ມແຂງ, ມີຄວາມຮູ້ຄວາມສາມາດສູງ, ມີຄວາມເປັນມືອາຊີບ ເພື່ອພັດທະນາປະເທດຊາດໃຫ້ສີວິໄລທີ່ຍືນຍົງ, ສາມາດເຊື່ອມໂຍງກັບພາກພື້ນ ແລະ ສາກົນໄດ້" ເພື່ອຜັນຂະຫຍາຍວິໄສທັດຂອງກະຊວງສຶກສາທິການ ແລະ ກິລາ ວາງອອກ, ວິທະຍາໄລຄູ ສະຫວັນນະເຂດ ຈຶ່ງໄດ້ບຸກໜ້າບົນໂຕ ສ້າງນັກສຶກສາທີ່ຈະໄປເປັນຄູໃນຂອບເຂດຮັບຜິດຊອບຄື: "ຕອບສະໜອງຄູໃຫ້ພຽງພໍຕາມຄວາມຕ້ອງການທາງດ້ານຄຸນະພາບ ແລະ

ປະລິມານ ຢ່າງເທົ່າທຽມກັນລະຫວ່າງຕົວເມືອງ ແລະ ຊົນນະບົດ; ສາມາດເຊື່ອມໂຍງເຂົ້າກັບພາກພື້ນ ແລະ ສາກົນ, ຄູມີຈັນຍາບັນຂອງຄວາມເປັນຄູ, ມີນ້ຳໃຈຮັກອາຊີບແພງເດັກທີ່ແທ້ຈິງ, ມີຄວາມທະນົງໃຈໃນອາຊີບຄູ, ສາມາດຮຽນຮູ້ດ້ວຍຕົນເອງ, ວິເຄາະປະເມີນຜົນຢ່າງປະດິດສ້າງ, ມີຄວາມຮູ້ໃນວິຊາທີ່ສອນເລິກເຊິ່ງ ແລະ ກວ້າງຂວາງ, ມີທັກສະ ແລະ ເຕັກນິກການສອນທີ່ກ້າວໜ້າ, ມີທັກສະໃນການສື່ສານ, ມີທັກສະຂອງຄວາມເປັນຜູ້ນໍາ, ສາມາດນໍາໃຊ້ເຕັກໂນໂລຢີເຂົ້າໃນການສອນ ແລະ ເວົ້າພາສາຕ່າງປະເທດໄດ້ຢ່າງໜ້ອຍໜຶ່ງພາສາ, ໄດ້ຮັບການນັບຖືຮັກແພງຈາກຊຸມຊົນ-ສັງຄົມ, ມີຈິດໃຈສາມັກຄີທັງພາຍໃນ ແລະ ສາກົນ" (ວິທະຍາໄລຄູ ສະຫວັນນະເຂດ, 2016) ພາຍໃຕ້ວິໄສທັດທີ່ວ່າ:

***"ວິທະຍາໄລຄູ ສະຫວັນນະເຂດ ເປັນສູນກາງແຫ່ງການພັດທະນາວິຊາຊີບຄູທີ່ມີຄຸນນະພາບ ແລະ ຈັນຍາບັນ, ເອົາໃຈໃສ່ການວິໄຈ, ສາມາດເຊື່ອມໂຍງໄດ້ກັບສາກົນ"***

ວິໄສທັດນີ້ໄດ້ຖືກສ້າງຂຶ້ນມາພາຍໃຕ້ການຊີ້ນໍາຂອງຄະນະພັກ ແລະ ຄະນະອໍານວຍການ ເຊິ່ງໄດ້ສຸມທຸກສະຕິປັນຍາໃນການຄົ້ນຄວ້າ ເພື່ອໃຫ້ສອດຄ່ອງກັບແຜນຍຸດທະສາດການສຶກສາ 5 ປີ ແຕ່ປີ 2016-2020 ຂອງກະຊວງສຶກສາທິການ ແລະ ກິລາ ແລະ ຄູ່ມືໃນການສ້າງສູນແຫ່ງການພັດທະນາ-ສູນແຫ່ງຄວາມເປັນເລີດຂອງກົມສ້າງຄູ, ກະຊວງສຶກສາທິການ ແລະ ກິລາວາງອອກເປັນບ່ອນອີງເຊິ່ງປະກອບດ້ວຍຄະນະອໍານວຍການ 4 ທ່ານ, ຄະນະຫ້ອງການ 10 ຫ້ອງການ ແລະ ຕາງໜ້າ 3 ອົງການຈັດຕັ້ງມະຫາຊົນໄດ້ເຂົ້າຮ່ວມຈັດຕັ້ງ ແລະ ກໍານົດວິໄສທັດ, ພາລະກິດ ແລະ ຈຸດໝາຍການກໍ່ສ້າງຂອງວິທະຍາໄລຄູ ສະຫວັນນະເຂດຂຶ້ນ (ວິທະຍາໄລຄູ ສະຫວັນນະເຂດ, 2016).

ຂະບວນການສ້າງແຜນຍຸດທະສາດປະກອບດ້ວຍ: ວິໄສທັດ, ພາລະກິດ ແລະ ຈຸດໝາຍ.

1. **ວິໄສທັດ:** "ວິທະຍາໄລຄູ ສະຫວັນນະເຂດ ເປັນສູນກາງແຫ່ງການພັດທະນາວິຊາຊີບຄູທີ່ມີຄຸນນະພາບ ແລະ ມີຈັນຍາບັນ, ເອົາໃຈໃສ່ການວິໄຈ, ສາມາດເຊື່ອມໂຍງໄດ້ກັບສາກົນ"
2. **ພາລະກິດ:** ສ້າງວິທະຍາໄລຄູ ສະຫວັນນະເຂດ ໃຫ້ເປັນສະຖາບັນແຫ່ງການພັດທະນາຄູມືອາຊີບທີ່ມີຄຸນນະພາບລະດັບຂົງເຂດ ແລະ ສາກົນ, ສາມາດຕອບສະໜອງຄູໃຫ້ໄດ້ຕາມຄວາມຕ້ອງການຂອງສັງຄົມຢ່າງຕໍ່ເນື່ອງ ເພື່ອປະກອບສ່ວນພັດທະນາການສຶກສາຂັ້ນສາມັນຂອງຊາດໃຫ້ມີຄຸນນະພາບ.
3. **ຈຸດໝາຍ:** ສ້າງຄູທຸກສາຂາໃຫ້ມີຄຸນນະພາບໃຫ້ເປັນທີ່ຍອມຮັບຂອງສັງຄົມ ໂດຍສະເພາະຄູຄະນິດສາດ ແລະ ຄູວິທະຍາສາດ ຄຽງຄູ່ກັບການສົ່ງເສີມການຄົ້ນຄວ້າວິໄຈຂອງຄູ ແລະ ນັກສຶກສາ ເພື່ອສ້າງວິທະຍາໄລຄູສະຫວັນນະເຂດ ໃຫ້ເປັນສະຖາບັນສ້າງຄູໃນປີ 2018.

ຜ່ານການຈັດຕັ້ງປະຕິບັດ, ລະດົມຄວາມຄິດ, ຄົ້ນຄວ້າ, ດັດແປງແກ້ໄຂ ແລະ ນໍາສະເໜີຄະນະກວດກາຂັ້ນວິທະຍາໄລ, ກົມ, ແລະ ກະຊວງເປັນຂັ້ນໆມາ ຈຶ່ງໄດ້ວິໄສທັດຂ້າງເທິງນັ້ນ. ເພື່ອສ້າງຄວາມຮູ້ຄວາມເຂົ້າໃຈໃຫ້ແກ່ຄູ-ອາຈານ, ນັກຮຽນ-ນັກສຶກສາ ແລະ ມະຫາຊົນທົ່ວໄປ ວິທະຍາໄລຄູ ສະຫວັນນະເຂດ ຈຶ່ງໄດ້ເຮັດການໂຄສະນາດ້ວຍການຈັດພິມປຶ້ມແນະນໍາກ່ຽວກັບວິໄສທັດ, ພິມແຜ່ນພັບແຈກຢາຍໃນວາລະກອງປະຊຸມຕ່າງໆ, ຕິດປ້າຍໂຄສະນາຕາມສະຖານທີ່ຕ່າງໆ ແລະ ລົງເວັບໄຊຂອງສະຖາບັນ.

ວິໄສທັດຂອງວິທະຍາໄລຄູ ສະຫວັນນະເຂດ ໃນປັດຈຸບັນເປັນວິໄສທັດທີ່ຫາກໍໄດ້ປັບປຸງໃໝ່ຈາກຄໍາຂວັນ ແລະ ວິໄສທັດທີ່ໄດ້ນໍາໃຊ້ໃນເມື່ອກ່ອນ, ຕາມທິດທາງຂອງວິທະຍາໄລຄູ ສະຫວັນນະເຂດ ຈະໄດ້ຂຶ້ນແຜນ

ງົບປະມານການສຳຫຼວດວິໄຈກ່ຽວກັບຄວາມຮັບຮູ້ເນື້ອໃນຄວາມໝາຍອັນແທ້ຈິງຂອງວິໄສທັດໃນເດືອນມັງກອນ 2018 ໂດຍຫ້ອງການບໍລິຫານ, ສົ່ງເສີມວິຊາການ ແລະ ພັດທະນາຄູ. ຈາກນັ້ນ, ກໍຈະນຳຜົນການວິໄຈດັ່ງກ່າວມາປັບປຸງເປັນແຕ່ລະໄລຍະ.

## 2. ຈຸດດີ

ວິທະຍາໄລຄູ ສະຫວັນນະເຂດ ໄດ້ສ້າງແຜນຍຸດທະສາດການບໍລິຫານຂອງວິທະຍາໄລ ໂດຍມີການກຳນົດວິໄສທັດທີ່ໃຫ້ຮູ້ວ່າ ວິທະຍາໄລຄູຈະພັດທະນາຄຸນນະພາບຂອງການສຶກສາໃນທຸກສາຍຮຽນ ແຕ່ພິເສດແມ່ນສາຍຄະນິດສາດ ແລະ ວິທະຍາສາດ ໃຫ້ໄປຕາມຂອບພັດທະນາ 4 ດ້ານ (ວິໄສທັດ) ຄື: ການພັດທະນາວິຊາຊີບຄູໃຫ້ມີຄຸນນະພາບ, ຈັນຍາບັນຂອງຄູ, ການວິໄຈ, ແລະ ເຊື່ອມໂຍງໄດ້ກັບສາກົນ ໂດຍໄດ້ມີກຳນົດຄວາມໝາຍ ແລະ ທິດທາງຂອງແຕ່ລະດ້ານ ຫຼື ອະລິຂອງວິໄສທັດເພື່ອຄວາມເຂົ້າໃຈຢ່າງຈະແຈ້ງໃນການຜັນຂະຫຍາຍ ແລະ ສາມາດບັນລຸໄດ້ໃນຕໍ່ໜ້າດັ່ງນີ້:

**# ການພັດທະນາວິຊາຊີບຄູທີ່ມີຄຸນນະພາບ**

ວິທະຍາໄລຄູ ສະຫວັນນະເຂດໄດ້ສົ່ງເສີມຄູໃຫ້ມີຄວາມສາມາດໃນການຖ່າຍທອດຄວາມຮູ້ ແລະ ປະສົບການຕ່າງໆສູ່ຜູ້ຮຽນເປັນສິ່ງທີ່ສຳຄັນ ເພື່ອຂະບວນການຮຽນ-ການສອນທີ່ມີປະສິດທິພາບ. ຢາກເຮັດໄດ້ດັ່ງທີ່ກ່າວມາຂ້າງເທິງນັ້ນ ມີຄວາມຈຳເປັນທີ່ຈະຕ້ອງສ້າງ ແລະ ພັດທະນານັກຮຽນຄູໃຫ້ມີຄວາມຮູ້, ທັກສະ ແລະທັດສະນະຄະຕິໃນດ້ານວິຊາຊີບຄູອັນປະກອບດ້ວຍ: ຄວາມຮູ້ໃນດ້ານພັດທະນາການຂອງນັກສຶກສາ, ດ້ານຈິດຕະວິທະຍາການຮຽນຮູ້, ຄວາມຮູ້ດ້ານຫຼັກສູດ ແລະ ການຈັດກິດຈະກຳການຮຽນ-ການສອນ, ທັກສະໃນການຄວບຄຸມຫ້ອງ, ຄວາມສາມາດຜະລິດ-ນຳໃຊ້ສື່ການຮຽນ-ການສອນ ແລະ ຄວາມຮູ້ດ້ານວັດຜົນ-ປະເມີນຜົນ.

**# ດ້ານຈັນຍາບັນຂອງຄູ**

ວິທະຍາໄລຄູ ສະຫວັນນະເຂດໄດ້ເນັ້ນຄວາມສາມາດໃນການຖ່າຍທອດຄວາມຮູ້, ທັກສະ, ປະສົບປະການ, ທັດສະນະຄະຕິທີ່ດີສູ່ຜູ້ຮຽນ ແລະ ສິ່ງສຳຄັນໄປກວ່ານັ້ນຄື: ຄວາມສາມາດໃນການສ້າງຄົນໃຫ້ເປັນຄົນດີ, ຄິດດີ, ກ້າເຮັດໃນສິ່ງທີ່ດີ ແລະ ການເຮັດເປັນຕົວຢ່າງທີ່ດີ ນັ້ນແມ່ນການສອນດີທີ່ສຸດ. ສະນັ້ນ ເຮົາມີຄວາມຈຳເປັນໃນການສ້າງໃຫ້ຄູໄດ້ຮູ້ຈັກ, ເຂົ້າໃຈ ແລະ ເຄົາລົບໃນຈັນຍາບັນຂອງຄູ: ຊື່ສັດບໍລິສຸດ, ຮັກອາຊີບຄູ, ຮັກແພງຜູ້ຮຽນ, ເປັນແບບຢ່າງນຳໜ້າ ແລະ ພັດທະນາຕົນເອງ.

**# ເອົາໃຈໃສ່ການວິໄຈ**

ນອກຈາກວຽກງານພັດທະນາວິຊາຊີບຄູ ແລະ ຈັນຍາບັນຄູແລ້ວ, ວິທະຍາໄລຄູ ສະຫວັນນະເຂດຍັງຖືເອົາການຄົ້ນຄວ້າວິໄຈເປັນວຽກທີ່ຈຳເປັນເຂົ້າໃນການພັດທະນາສະຖາບັນ. ສະນັ້ນ, ຄູ-ອາຈານ ແລະ ນັກສຶກສາຕ້ອງມີຄວາມຮູ້ ແລະ ຄວາມສາມາດໃນການວິໄຈດ້ານຕ່າງໆໄດ້ເຊັ່ນ: ຄູ-ອາຈານໄດ້ດຳເນີນການວິໄຈພາກປະຕິບັດ, ປັບປຸງ ແລະ ພັດທະນາການວິໄຈ. ສ້າງເງື່ອນໄຂໃຫ້ຄູ-ອາຈານມີບົດວິໄຈ (ສົ່ງບົດວິໄຈເຂົ້າຮ່ວມນຳສະເໜີໃນລະດັບສະຖາບັນ, ລະດັບຊາດ ແລະ ລະດັບນາໆຊາດຢ່າງໜ້ອຍ 2 ບົດຕໍ່ສົກຮຽນ) ແລະ ນັກສຶກສາປີສຸດທ້າຍຕ້ອງໄດ້ເຮັດບົດວິໄຈ ແລະ ລາຍງານການວິໄຈ.

# ສາມາດເຊື່ອມໂຍງໄດ້ກັບສາກົນ

ວິທະຍາໄລຄູ ສະຫວັນະເຂດ ໄດ້ກຽມເງື່ອນໄຂໃນທຸກດ້ານເຊັ່ນ: ຍົກສູງທາງດ້ານວຸດທິ, ເຕັກນິກ, ທັກສະ, ຄວາມຮູ້ຄວາມສາມາດທາງດ້ານວິຊາສະເພາະຂອງຄູ-ອາຈານ, ປັບປຸງສະພາບແວດລ້ອມໃນການສຶກສາຮຽນຮູ້ ແລະ ກໍ່ສ້າງພື້ນຖານໂຄງລ່າງໃຫ້ທັນສະໄໝຂຶ້ນເທື່ອລະກ້າວ, ຍົກບົດບາດຄູ-ອາຈານ ແລະ ສະຖາບັນໃນເອທີ ຕ່າງໆໃນພາກພື້ນ ແລະ ສາກົນ ເພື່ອກຽມຄວາມພ້ອມໃນການຮ່ວມມືທາງດ້ານການພັດທະນາການສຶກສາ.

ວິໄສທັດ, ພາລະກິດ ແລະ ຈຸດໝາຍດັ່ງກ່າວ ສາມາດເປັນບ່ອນອີງໃນການຈັດຕັ້ງປະຕິບັດ ເພື່ອເຮັດໃຫ້ ວິທະຍາໄລຄູ ສະຫວັນນະເຂດພວກເຮົາກ້າວໄປສູ່ສູນແຫ່ງການພັດທະນາ, ສູນແຫ່ງຄວາມເປັນເລີດ ແລະ ກາຍເປັນສະຖາບັນໄດ້.

ວິທະຍາໄລຄູສະຫວັນນະເຂດໄດ້ມີການເຜີຍແຜ່ວິໄສທັດຂອງຕົນຜ່ານຫຼາຍຊ່ອງທາງເຊັ່ນ: ຈັດກອງປະຊຸມ ຍ່ອຍ, ລິງ Website/WebPage ຂອງວິທະຍາໄລຄູ, ວາລະສານວິຊາການ, ແຜ່ນພັບ, ປ້າຍໂຄສະນາ, ເຜີຍແຜ່ໃນພິທີເຄົາລົບທຸງ, ລົງເຝິກຫັດ/ເຝິກປະສົບການ ແລະ ທາງໂທລະໂຄ່ງ ວຄສ.

## 3. ຂໍ້ຄົງຄ້າງ ແລະ ສາເຫດ

ວິໄສທັດຍັງບໍ່ທັນມີການທົບທວນ ເນື່ອງຈາກຢູ່ໃນໄລຍະການຈັດຕັ້ງປະຕິບັດຕາມເນື້ອໃນ.

## 4. ຂໍ້ແນະນຳຂອງຄະນະປະເມີນພາຍນອກ

- ກຳນົດວາລະໃນການທົບທວນວິໄສທັດ ພາລະກິດ ແລະ ແຜນພັດທະນາຂອງ ວຄສ ໃຫ້ມີສ່ວນຮ່ວມໃນ ການຮັບຟັງຄວາມຄິດເຫັນຈາກຫຼາຍພາກສ່ວນ ເພື່ອເຮັດການທົບທວນວິໄສທັດຄືນເປັນແຕ່ລະໄລຍະ ແລະ ເພີ່ມການເຜີຍແຜ່ໃຫ້ສັງຄົມຮັບຮູ້ຜ່ານຫຼາຍຊ່ອງທາງ ພ້ອມໃຫ້ມີການເກັບກຳຫຼັກຖານການປະຊຸມທີ່ ກ່ຽວຂ້ອງກັບວິໄສທັດ.
- ເພີ່ມທະວີການເຜີຍແຜ່ໃຫ້ແກ່ຄູອາຈານ ບຸກຄະລາກອນພາຍໃນໃຫ້ມີຄວາມເປັນເອກະພາບກັນ ແລະ ຜັນ ຂະຫຍາຍເຂົ້າໄປສູ່ການເຄື່ອນໄຫວທີ່ຕົນເອງຮັບຜິດຊອບ.

## 5. ທິດທາງໃນການປັບປຸງ

- ອອກຂໍ້ຕົກລົງແຕ່ງຕັ້ງຄະນະຮັບຜິດຊອບການທົບທວນ, ກຳນົດວາລະການປະຕິບັດ, ສ້າງແບບສອບຖາມ ເພື່ອເກັບກຳຂໍ້ມູນ, ສັງລວມຂໍ້ມູນ, ວິເຄາະ ແລະ ເປີດກອງປະຊຸມທົບທວນ.
- ກຳນົດເວລາເພື່ອເຜີຍແຜ່ໃຫ້ທຸກພາກສ່ວນຮັບຮູ້ ໂດຍຜ່ານຫຼາຍຊ່ອງທາງ ເຊັ່ນ: ຈັດກອງປະຊຸມຍ່ອຍ, Website/WebPage ຂອງວິທະຍາໄລຄູ, ວາລະສານວິຊາການ, ແຜ່ນພັບ, ປ້າຍໂຄສະນາ, ເຜີຍແຜ່ໃນ ເວລາເຄົາລົບທຸງ, ລົງເຝິກຫັດ/ເຝິກປະສົບການ ແລະ ທາງໂທລະໂຄ່ງ ວຄສ.

# ມາດຕະຖານທີ II: ການຄຸ້ມຄອງ ແລະ ບໍລິຫານ

## 1. ການຈັດຕັ້ງປະຕິບັດ

ສະພາບໍລິຫານສະຖາບັນມີບົດບາດ ແລະ ປະຕິບັດໜ້າທີ່ຮັບຜິດຊອບທີ່ກຳນົດໄວ້ໂດຍສອດຄ່ອງກັບບັນດາ ດຳລັດ ແລະ ລະບຽບທີ່ມີຢູ່ວິທະຍາໄລຄູ ສະຫວັນນະເຂດ, ມີການຄຸ້ມຄອງ-ບໍລິຫານຕາມລະບຽບການ ປະຕິບັດຕາມລະບອບລວມສູນປະຊາທິປະໄຕ ມີຄວາມເປັນເອກະພາບກັນແລ້ວຈຶ່ງນຳໄປປະຕິບັດ, ມີການສ່ອງ ແສງ ລາຍງານ ແລະ ຫາວິທີແກ້ໄຂບັນດາຂໍ້ຄົງຄ້າງໃນແຕ່ລະອາທິດ. ວິທະຍາໄລຄູ ສະຫວັນນະເຂດມີໂຄງຮ່າງ ການຈັດຕັ້ງ, ໄດ້ບັນຈຸພະນັກງານເຂົ້າໃສ່ໃນແຕ່ລະຕຳແໜ່ງງານຄົບຖ້ວນ ເຊິ່ງແຕ່ລະຄົນທີ່ບັນຈຸໃນແຕ່ລະຕຳ ແໜ່ງງານໄດ້ປະຕິບັດໜ້າທີ່ ແລະ ສິດ ຕາມປື້ມຄູ່ມືວິທີເຮັດວຽກຂອງວິທະຍາໄລຄູສະບັບທີ 1 ປີ 2010

ຜູ້ອຳນວຍການ ແລະ ຮອງຜູ້ອຳນວຍການໄດ້ຮັບການແຕ່ງຕັ້ງຈາກລັດຖະມົນຕີກະຊວງສຶກສາທິການ ແລະ ກິລາ, ຫົວໜ້າຫ້ອງການ, ຮອງຫົວໜ້າຫ້ອງການ, ຫົວໜ້າໜ່ວຍງານ ແລະ ຮອງຫົວໜ້າໜ່ວຍງານແມ່ນຫົວໜ້າກົມສ້າງຄູເປັນຜູ້ແຕ່ງຕັ້ງ. ແຕ່ລະທ່ານເຮັດໜ້າທີ່ຊຸກຍູ້, ນຳພາຕາມໜ້າທີ່ຮັບຜິດຊອບຂອງແຕ່ລະຕຳແໜ່ງງານຕາມແຜນພັດທະນາຂອງສະຖາບັນ ທີ່ສອດຄ່ອງກັບແຜນນະໂຍບາຍຂອງກົມສ້າງຄູ ແລະ ແຜນແບ່ງປັນງົບປະມານຂອງກົມການເງິນກະຊວງສຶກສາທິການ ແລະ ກິລາ.

ວິທະຍາໄລຄູ ສະຫວັນນະເຂດມີໂຄງຮ່າງການຈັດຕັ້ງຈະແຈ້ງ ແລະ ມີການບັນຈຸພະນັກງານທີ່ມີວຸດທິເໝາະສົມທີ່ມີຄວາມສາມາດເຂົ້າໃນທຸກຕຳແໜ່ງງານທີ່ຖືກສ້າງຕັ້ງຂຶ້ນຄື: ມີຜູ້ອຳນວຍການ 1 ທ່ານຮັບຜິດຊອບລວມພ້ອມທັງຊີ້ນຳຫ້ອງການຈັດຕັ້ງ ແລະ ຫ້ອງການບໍລິຫານ, ຮອງຜູ້ອຳນວຍການ 3 ທ່ານ, ທ່ານທີ 1 ຮັບຜິດຊອບຊີ້ນຳຫ້ອງການກິດຈະການນັກສຶກສາ, ທ່ານທີ 2 ຮັບຜິດຊອບຊີ້ນຳຫ້ອງການສົ່ງເສີມວິຊາການ ແລະ ຫ້ອງການສາຍຮຽນ (ມີ 4 ຫ້ອງການ), ທ່ານທີ 3 ຮັບຜິດຊອບຊີ້ນຳຫ້ອງການວັດຜົນ-ປະເມີນຜົນ ແລະ ພັດທະນາຄູ. ວິທະຍາໄລຄູ ສະຫວັນນະເຂດປະກອບມີ 10 ຫ້ອງການເຊັ່ນ: ຫ້ອງການບໍລິຫານ, ຫ້ອງການຈັດຕັ້ງ-ພະນັກງານ, ຫ້ອງການສົ່ງເສີມວິຊາການ, ຫ້ອງການພັດທະນາຄູ, ຫ້ອງການກິດຈະການນັກສຶກສາ, ຫ້ອງການວິທະຍາສາດທຳມະຊາດ, ຫ້ອງການວິທະຍາສາດສັງຄົມ, ຫ້ອງການຄູອະນຸບານ-ປະຖົມ ແລະ ຫ້ອງການພາສາຕ່າງປະເທດ ມີ 33 ໜ່ວຍງານ ເຊິ່ງລະບົບການຈັດຕັ້ງດັ່ງກ່າວໄດ້ພິມເຜີຍແຜ່ໃສ່ແຜ່ນພັບ ແລະ ຕິດໃສ່ສະຖານທີ່ສຳຄັນຕາມອາຄານຕ່າງໆ.

ວິທະຍາໄລຄູ ສະຫວັນນະເຂດມີແຜນພັດທະນາເປັນແຕ່ລະໄລຍະ ໂດຍສອດຄ່ອງກັບວິໄສທັດ, ພາລະກິດແລະ ຈຸດໝາຍທີ່ກຳນົດໄວ້ເຊັ່ນ: ແຜນພັດທະນາວິທະຍາໄລຄູ ສະຫວັນນະເຂດ 5 ປີ (2016-2020), ແຜນປະຈຳສົກຮຽນໃນແຕ່ລະສົກຮຽນ, ແຜນປະຈຳພາກຮຽນ, ແຜນປະຈຳເດືອນ, ແຜນປະຈຳອາທິດ ເຊິ່ງແຕ່ລະອາທິດມີການສ່ອງແສງລາຍງານ (ຄະນະອຳນວຍການຮັບລາຍງານຈາກຄະນະຫ້ອງການ) ພ້ອມກັນສັງລວມວາງແຜນປະຈຳອາທິດ ແລ້ວນຳເອົາແຜນປະຈຳອາທິດໄປເຜີຍແຜ່ໃຫ້ຄູ-ອາຈານ ແລະ ນັກສຶກສາໃນເວລາເຄົາລົບທຸງທຸກໆເຊົ້າວັນຈັນ, ແຕ່ລະເດືອນມີການລວມພະນັກງານຄູ-ອາຈານທັງໝົດເຂົ້າຮ່ວມສະຫຼຸບປະຈຳເດືອນ, ລາຍງານການເຄື່ອນໄຫວພ້ອມທັງແຜນການໃຫ້ກົມສ້າງຄູ ແລະ ແຂວງສະຫວັນນະເຂດ.

ວິທະຍາໄລຄູ ສະຫວັນນະເຂດມີນະໂຍບາຍ, ລະບຽບການ ແລະ ຂັ້ນຕອນຄຸ້ມຄອງທີ່ຈະແຈ້ງ, ໄດ້ນຳໃຊ້ນິຕິກຳກ່ຽວກັບລະບຽບການເງິນກະຊວງສຶກສາທິການ ແລະ ກິລາ (ກົມການເງິນ) ປີ 2016, ໄດ້ຮັບງົບປະມານແຕ່ລະສົກຮຽນໂດຍຜ່ານການອະນຸມັດຈາກກົມການເງິນກະຊວງສຶກສາທິການ ແລະ ກິລາ ອີງໃສ່ລັດຖະດຳລັດຂອງປະທານປະເທດວ່າດ້ວຍຄ່າທຳນຽມ ແລະ ຄ່າບໍລິການສະບັບເລກທີ 003/ປປທ ລົງວັນທີ 26 ທັນວາ 2012. ປະຕິບັດການຈ່າຍງົບປະມານອີງໃສ່ຂໍ້ຕົກລົງຂອງລັດຖະມົນຕີວ່າດ້ວຍກຳນົດໝາຍໃຊ້ຈ່າຍງົບປະມານຂອງລັດສະບັບເລກທີ 2066/ກງ ລົງວັນວັນທີ 25/6/2015. ວິທະຍາໄລຄູ ສະຫວັນນະເຂດໄດ້ສ້າງແຜນດ້ານການເງິນດັ່ງນີ້: ໄດ້ສ້າງແຜນລາຍຮັບ-ຈ່າຍປະຈຳແຕ່ລະສົກຮຽນ ເພື່ອຂໍອະນຸມັດຈາກກົມການເງິນກະຊວງສຶກສາທິການ ແລະ ກິລາ. (ມີແຜນລາຍຮັບ-ຈ່າຍປະຈຳແຕ່ລະສົກປີ), ລາຍຮັບວິຊາການໃນແຕ່ລະສົກຮຽນໄດ້ແບ່ງເປັນຮ່ວງ ໂດຍມອບໃຫ້ຫ້ອງການທີ່ກ່ຽວຂ້ອງເປັນຜູ້ຄຸ້ມຄອງລາຍຮັບ-ຈ່າຍ ພາຍໃຕ້ລະບົບຜ່ານປະຕູດຽວ.

ວິທະຍາໄລຄູ ສະຫວັນນະເຂດມີນະໂຍບາຍ, ລະບຽບການ ແລະ ຂັ້ນຕອນບໍລິຫານການເງິນທີ່ໂປ່ງໃສໂດຍໃຊ້ລະບົບຜ່ານປະຕູດຽວ ລາຍຮັບງົບປະມານ ແລະ ລາຍຮັບວິຊາການແມ່ນຮັບເຂົ້າຜ່ານຄັງເງິນສ່ວນກາງບ່ອນດຽວ, ສ່ວນລາຍຈ່າຍແມ່ນປະຕິບັດຕາມແຜນ ແລະ ໂຄງການ ຫຼື ກິດຈະກຳທີ່ແຕ່ລະໜ່ວຍງານ, ແຕ່ລະຫ້ອງການໄດ້ສ້າງຂຶ້ນ ແລະ ໄດ້ຮັບອະນຸມັດໃນແຕ່ລະສົກຮຽນ. ຂະບວນການຖອນເງິນ ເລີ່ມຈາກຜູ້ສະເໜີ ຜ່ານຫ້ອງການທີ່ກ່ຽວຂ້ອງ, ການເງິນ ແລະ ຮອງຜູ້ອຳນວຍການ, ຈາກນັ້ນ ຈຶ່ງນຳເອົາສຳນວນເອກະສານຂໍ

ຖອນເງິນໃຫ້ໜ່ວຍງານການເງິນສະເໜີຂໍຖອນເງິນ ໂດຍການເຊັນອະນຸມັດຈາກຜູ້ອຳນວຍການ, ເງິນທີ່ໄດ້ອະນຸມັດແລ້ວຜູ້ສະເໜີຂໍຖອນເປັນຜູ້ຮັບໄປເບີກຈ່າຍ ຫຼື ນຳໄປໃຊ້ເຂົ້າໃນໂຄງການ, ກິດຈະກຳຕ່າງໆ. ລະບົບການເງິນຍັງໄດ້ມີການສະຫຼຸບປະຈຳເດືອນ ແລະ ແຈກຢາຍໃຫ້ພາກສ່ວນກ່ຽວຂ້ອງຮັບຊາບ, ວັດສະດຸອຸປະກອນທີ່ຊື້ໃໝ່ນັບທັງຊັບສິນບັດຄົງທີ່ ແລະ ພາຫະນະ ໄດ້ມີການຂຶ້ນບັນຊີເປັນສະຖິຕິ ພ້ອມທັງປ້ອນເຂົ້າຖານຂໍ້ມູນ, ໃນແຕ່ລະສົກປີງົບປະມານ ກົມການເງິນຍັງໄດ້ລົງຕິດຕາມການໃຊ້ຈ່າຍງົບປະມານ ແລະ ການຄຸ້ມຄອງການນຳໃຊ້ວັດສະດຸ.

ວິທະຍາໄລຄູ ສະຫວັນນະເຂດ ໄດ້ຮັບການຊຸກຍູ້ຊ່ວຍເຫຼືອທາງດ້ານການເງິນ ແລະ ອຸປະກອນຈາກຊຸມຊົນ, ທັງພາກລັດ ແລະ ເອກະຊົນໃນເຂດບໍລິການຂອງ 2 ແຂວງຄື: ແຂວງສະຫວັນນະເຂດ ແລະ ແຂວງຄຳມ່ວນທັງໝົດມີ 25 ຕົວເມືອງ ເພື່ອບູລະນະ ແລະ ພັດທະນາສະຖາບັນ. ນອກຈາກນັ້ນ, ຍັງມີສະຖານະການເງິນທີ່ຍືນຍົງ ແລະ ໝັ້ນຄົງຄື: ມີງົບປະມານໃນແຕ່ລະສົກຮຽນຈາກກົມການເງິນກະຊວງສຶກສາທິການ ແລະ ກິລາພ້ອມທັງຍັງມີລາຍຮັບວິຊາການຈຳນວນໜຶ່ງໃນແຕ່ລະສົກຮຽນ.

**2. ຈຸດດີ**

ສະພາບໍລິຫານວິທະຍາໄລຄູ ສະຫວັນນະເຂດ ປະຕິບັດໜ້າທີເຮັດວຽກຕາມຫຼັກການລວມສູນປະຊາທິປະໄຕ ບຸກຄົນຮັບຜິດຊອບ ແລະ ປະຕິບັດລະບອບຫົວໜ້າດຽວ ເຮັດໃຫ້ການປະຕິບັດວຽກງານມີຄວາມສະດວກຄ່ອງແຄ້ວ ເພາະວ່າສິ່ງຈະນຳໄປປະຕິບັດ ແລະ ຜັນຂະຫຍາຍນັ້ນ ໄດ້ຜ່ານການຕົກລົງເປັນເອກະພາບກັນແລ້ວ. ມີໂຄງຮ່າງການຈັດຕັ້ງ, ບັນຈຸບຸກຄະລາກອນໃນແຕ່ລະຕຳແໜ່ງງານຕາມປື້ມຄູ່ມືວິທີເຮັດວຽກຂອງວິທະຍາໄລຄູ, ມີຄວາມສະດວກເໝາະສົມເພາະໃນປື້ມຄູ່ມືໄດ້ອະທິບາຍລະອຽດກ່ຽວກັບໜ້າທີ່ ແລະ ສິດຂອງແຕ່ລະຕຳແໜ່ງງານ ເຊິ່ງສອດຄ່ອງກັບໜ້າວຽກທີ່ເຮັດຕົວຈິງ, ຜູ້ອຳນວຍການ ແລະ ຮອງຜູ້ອຳນວຍການໄດ້ແບ່ງຄວາມຮັບຜິດຊອບຊີ້ນຳໃນຫ້ອງການທີ່ຮັບຜິດຊອບຢ່າງລະອຽດ ແລະ ສະດວກໃນການປະຕິບັດ.

ວິທະຍາໄລຄູ ສະຫວັນນະເຂດ ມີໂຄງຮ່າງການຈັດຕັ້ງຈະແຈ້ງ, ການບັນຈຸພະນັກງານເໝາະສົມກັບວຸດທິຄວາມສາມາດຂອງຕຳແໜ່ງງານ, ມີການແບ່ງຄວາມຮັບຜິດຊອບໃນຄະນະອຳນວຍການ ສອດຄ່ອງໃນການຕິດຕາມຊຸກຍູ້, ສາມາດເຫັນບັນຫາ, ຜົນງານ ແລະ ຂໍ້ຄົງຄ້າງໄດ້ຢ່າງທັນເວລາ. ລະບົບການຈັດຕັ້ງໄດ້ພິມເຜີຍແຜ່ໃນແຜ່ນພັບ ແລະ ຕິດໃສ່ສະຖານທີ່ສຳຄັນຕາມອາຄານຕ່າງໆ ເຮັດໃຫ້ຜູ້ທີ່ມາພົວພັນວຽກງານ, ນັກສຶກສາ, ຄູ-ອາຈານໄດ້ເຂົ້າໃຈເຖິງສາຍກ່ຽວພັນ, ຄວາມກ່ຽວຂ້ອງຕ່າງໆຂອງລະບົບການຈັດຕັ້ງເຊິ່ງສະດວກໃນການປະສານງານ.

ວິທະຍາໄລຄູ ສະຫວັນນະເຂດ ມີແຜນພັດທະນາເປັນແຕ່ລະໄລຍະສອດຄ່ອງກັບວິໄສທັດ, ພາລະກິດ ແລະ ຈຸດໝາຍທີ່ກຳນົດໄວ້ ເຮັດໃຫ້ການປະຕິບັດແຕ່ລະກິດຈະກຳຖືກຕາມປະຕິທິນທີ່ກຳນົດໄວ້ເຊັ່ນ: ແຜນກຳນົດຈຳນວນການຍົກລະດັບວຸດທິຄູອາຈານ-ພະນັກງານຮອດປີ 2020 ຈຶ່ງເຮັດໃຫ້ວິທະຍາໄລຄູປະສົບຜົນສຳເລັດເປັນແຕ່ລະຂັ້ນຕະຫຼອດມາເຊັ່ນ: ໄດ້ຮັບຫຼຽນໄຊອິດສະຫຼະຊັ້ນ 2, ຫຼຽນໄຊແຮງງານຊັ້ນ 2, ທຸງໄຊນຳໜ້າຂອງສະຖາບັນສ້າງຄູດ້ານການປົກປັກຮັກສາສິ່ງແວດລ້ອມ, ທຸງໄຊດີເດັ່ນຂອງສະຖາບັນສ້າງຄູໃນ 3 ສົກຮຽນຕິດຕໍ່ກັນ.

ບັນດານິຕິກຳກ່ຽວກັບລະບຽບການເງິນຂອງກົມການເງິນກະຊວງສຶກສາທິການ ແລະ ກິລາເປັນບ່ອນອີງທີ່ສຳຄັນໃນການບໍລິຫານການຄຸ້ມຄອງລະບົບການເງິນ ແລະ ການຄຸ້ມຄອງຊັບສິນ ມີຄວາມສະດວກຊັດເຈນຮັບປະກັນການຄຸ້ມຄອງເງິນ, ສະດວກໃນການສະຫຼຸບກວດກາ, ມີການກຳນົດເວລາລະອຽດໃນການຂຶ້ນແຜນງົບປະມານ.

ວິທະຍາໄລຄູ ສະຫວັນນະເຂດ ມີນະໂຍບາຍ, ລະບຽບການ ແລະ ຂັ້ນຕອນບໍລິຫານການເງິນທີ່ໂປ່ງໃສ ໂດຍໃຊ້ລະບົບຜ່ານປະຕູດຽວ ເຊິ່ງການບໍລິການຜ່ານປະຕູດຽວ ສາມາດກວດສອບໄດ້ງ່າຍ ມີການກໍານົດຂັ້ນຕອນລະບົບເອກະສານໃນການຖອນເງິນລະອຽດ ສະແດງໃຫ້ເຫັນເຖິງຄວາມໂປ່ງໃສ. ກົມການເງິນໄດ້ຕິດຕາມ, ແນະນໍາວິທີປະຕິບັດເຊັ່ນ: ວິທີຂຶ້ນງົບປະມານ, ແບ່ງເງິນຕາມຮ່ອງ, ແບ່ງໄປຕາມໜ້າວຽກ ສະດວກໃນການເບີກຈ່າຍແກ້ໄຂບັນຫາທັນການ. ວິທະຍາໄລຄູ ສະຫວັນນະເຂດມີຖານຂໍ້ມູນດ້ານບັນຊີຊັບສິນ ເຊິ່ງກົມການເງິນກະຊວງສຶກສາທິການ ແລະ ກິລາ ສາມາດກວດສອບໄດ້.

ນອກຈາກທີ່ໄດ້ຮັບການສະໜອງງົບປະມານຕາມແຜນປະຈໍາປີຈາກກົມການເງິນກະຊວງສຶກສາທິການ ແລະ ກິລາແລ້ວ, ຍັງໄດ້ຮັບການປະກອບສ່ວນຈາກພາກລັດ ແລະ ເອກະຊົນໃນ 25 ຕົວເມືອງຂອງ 2 ແຂວງທີ່ເປັນເຂດບໍລິການຂອງວິທະຍາໄລຄູ ສະຫວັນນະເຂດ.

ສັງລວມແລ້ວ, ວິທະຍາໄລຄູ ສະຫວັນນະເຂດ ມີຄວາມເຂັ້ມແຂງທາງດ້ານການຄຸ້ມຄອງບໍລິຫານ ສາມາດຈັດຕັ້ງປະຕິບັດ ແລະ ຜັນຂະຫຍາຍຕາມແຜນຍຸດທະສາດຂອງກົມສ້າງຄູ ກະຊວງສຶກສາທິການ ແລະ ກິລາວາງອອກ ບັນລຸປະສິດທິຜົນເປັນຢ່າງດີ.

ວຄສ ໄດ້ເຜີຍແຜ່ບົດສະຫຼຸບລາຍຮັບ-ລາຍຈ່າຍປະຈໍາເດືອນ, 3 ເດືອນ, 6 ເດືອນ, 1 ປີ ໃຫ້ແຕ່ລະຫ້ອງການຮັບຮູ້, ໄດ້ສ້າງລະບຽບການຄຸ້ມຄອງບໍລິຫານວັດສະດຸ ພ້ອມກັນນັ້ນກໍ່ໄດ້ອອກຂໍ້ຕົກລົງແຕ່ງຕັ້ງຄະນະຈັດຊື້-ຈັດຈ້າງ ແລະ ໄດ້ຈັດແບ່ງງົບປະມານຕາມຮ່ອງຕ່າງໆໃຫ້ແຕ່ລະຫ້ອງການ.

**3. ຂໍ້ຄົງຄ້າງ ແລະ ສາເຫດ**

- ວຄສ ມີສາງແຕ່ການຄຸ້ມຄອງຍັງບໍ່ທັນຖືກລະບົບສາງ.

**4. ຂໍ້ແນະນໍາຂອງຄະນະປະເມີນພາຍນອກ**

- ສ້າງຕັ້ງສະພາທີ່ເປີກສາໂດຍໃຫ້ປະກອບມີພາກສ່ວນກ່ຽວຂ້ອງທັງພາຍໃນ ແລະ ພາຍນອກໃຫ້ກວ້າງຂວາງ ແລະ ເລິກເຊິ່ງ
- ສະເໜີເຮັດລາຍງານການເງິນປົກກະຕິໃຫ້ພາກສ່ວນກ່ຽວຂ້ອງ ເພື່ອຮັບປະກັນຄວາມໂປ່ງໃສ ແລະ ຄວາມໂລ່ງໃຈໃນການໃຊ້ຈ່າຍງົບປະມານ ແລະ ແຫຼ່ງລາຍຮັບວິຊາການ
- ສ້າງລະບຽບການຄຸ້ມຄອງບໍລິຫານທີ່ເຫັນວ່າຍັງບໍ່ທັນພຽງພໍ ເພື່ອຮອງຮັບວິໄສທັດດັ່ງກ່າວ

**5. ທິດທາງໃນການປັບປຸງ**

- ສ້າງຕັ້ງສະພາທີ່ເປີກສາວິທະຍາໄລຄູ (ລະດັບ ວຄ) ໂດຍການປະກອບບຸກຄະລາກອນໃສ່ໃຫ້ຄົບຖ້ວນຕາມມາດຖານ (ອີງໃສ່ສະພາບຕົວຈິງ)
- ສ້າງລະບຽບການຄຸ້ມຄອງບໍລິຫານ ການເງິນ/ວັດສະດຸ, ສະຫຼຸບລາຍຮັບ-ລາຍຈ່າຍປະຈໍາເດືອນ, 3 ເດືອນ, 6 ເດືອນ, 1 ປີ ແລ້ວສົ່ງໃຫ້ແຕ່ລະຫ້ອງການຮັບຮູ້ຢ່າງທົ່ວເຖິງ ແລະ ທັນເວລາ (ຫຼັກຖານຕ້ອງມີຢູ່ທັງບໍລິຫານ ແລະ ແຕ່ລະຫ້ອງການ)
- ຈັດແບ່ງງົບປະມານຕາມຮ່ອງຕ່າງໆ, ອອກຂໍ້ຕົກລົງແຕ່ງຕັ້ງຄະນະຈັດຊື້ ຈັດຈ້າງ, ລະບົບສາງ ຂອງວິທະຍາໄລຄູ

## ມາດຕະຖານທີ III: ການພັດທະນາບຸກຄະລາກອນ

**1. ການຈັດຕັ້ງປະຕິບັດ**

ວິທະຍາໄລຄູ ສະຫວັນນະເຂດ ໄດ້ກໍານົດແຜນພັດທະນາບຸກຄະລາກອນໃນແຕ່ລະສົກຮຽນ ເຊິ່ງແມ່ນຫ້ອງການຈັດຕັ້ງ-ພະນັກງານເປັນຜູ້ຮັບຜິດຊອບ ໂດຍມີການສົມທົບກັບຫ້ອງການສົ່ງເສີມວິຊາການ ແລະ ບັນດາຫ້ອງການທີ່ກ່ຽວຂ້ອງຄົ້ນຄວ້າແຜນຄວາມຕ້ອງການຄູໃນແຕ່ລະສົກຮຽນ. ໄດ້ບັນຈຸສັບຊ້ອນບຸກຄະລາກອນ

ຕາມວຸດທິການສຶກສາ, ຄວາມສາມາດ, ປະສົບການ ແລະ ວິຊາສະເພາະ. ການຄັດເລືອກບຸກຄະລາກອນ ເພື່ອບັນຈຸໃໝ່ ໄດ້ອີງໃສ່ແຜນຄວາມຕ້ອງການຄູ, ການອະນຸມັດໂກຕ້າ ແລະ ຄຳສັ່ງແນະນຳຂອງກົມຈັດຕັ້ງ-ພະນັກງານ ກະຊວງສຶກສາທິການ ແລະ ກິລາ ກຳນົດໄວ້ໃນແຕ່ລະສົກຮຽນ. ຂະບວນການຄັດເລືອກຄູໃໝ່ໄດ້ປະກາດໃຫ້ຜູ້ສະໝັກຮັບຮູ້ໂດຍຜ່ານສື່ຕ່າງໆເຊັ່ນ: ໂທລະພາບ, ວິທະຍຸກະຈາຍສຽງ ແລະ ເວັບໄຊ-Facebook ຂອງສະຖາບັນ ເພື່ອເປີດໂອກາດໃຫ້ຜູ້ສຳເລັດການສຶກສາວິຊາຊີບທຸກພາກສ່ວນໄດ້ສອບເສັງຄັດເລືອກ, ສຳພາດເພື່ອບັນຈຸ ແລະ ສັບຊ້ອນເຂົ້າເປັນພະນັກງານຂອງວິທະຍາໄລຄູ ສະຫວັນນະເຂດ. ຫຼັງຈາກນັ້ນໄດ້ມີການເຝິກອົບຮົມເຕັກນິກວິຊາການໃຫ້ຄູບັນຈຸໃໝ່ ເພື່ອພັດທະນາຄວາມຮູ້, ຄວາມສາມາດໃນການຖ່າຍທອດຄວາມຮູ້ໃຫ້ແກ່ຜູ້ຮຽນເຊັ່ນ: ສ້າງແຜນການສອນ, ແຕ່ງບົດສອນ, ຜະລິດ ແລະ ນຳໃຊ້ສື່ການສອນເຂົ້າໃນຂະບວນການຮຽນ-ການສອນໃຫ້ແທດເໝາະກັບໂຄງການຫຼັກສູດ. ມີການປະເມີນຜົນການປະຕິບັດໜ້າທີ່ກ່ອນສະເໜີເປັນລັດຖະກອນສົມບູນ.

ໃນ 5 ປີຜ່ານມາວິທະຍາໄລຄູ ສະຫວັນນະເຂດ ໄດ້ສົ່ງຄູອາຈານໄປຍົກລະດັບ ທັງພາຍໃນ ແລະ ຕ່າງປະເທດຈຳນວນ 48 ຄົນ ແລະ ໄປເຝິກອົບຮົມໄລຍະສັ້ນ-ຍາວ ທັງພາຍໃນ ແລະ ຕ່າງປະເທດ ຈຳນວນ 237 ເທື່ອຄົນ. ມີນະໂຍບາຍຊຸກຍູ້ບັນດາຄູ-ອາຈານທີ່ໄປຍົກລະດັບ, ເຝິກອົບຮົມທັງພາຍໃນ ແລະ ຕ່າງປະເທດ ໂດຍປະຕິບັດຕາມຄູ່ມືສະບັບຫຼ້າສຸດເລກທີ 546/ວຄສ.ຈຕ/2016 ລົງວັນທີ 07 ກັນຍາ 2016. ວິທະຍາໄລຄູ ສະຫວັນນະເຂດ ໄດ້ມີການຈັດຕັ້ງປະຕິບັດຫຼັກສູດສອດຄ່ອງ ແລະ ເໝາະສົມໃນດ້ານອັດຕາສ່ວນ ລະຫວ່າງ ຄູກັບນັກສຶກສາ (ຕາມຂໍ້ກຳນົດຂອງກະຊວງສຶກສາທິການ ແລະ ກິລາ, 20-25 ຄົນ/ຫ້ອງຮຽນ). ມີເຄື່ອງມືປະເມີນລັດຖະກອນໃໝ່ 3 ແບບຄື: ແບບຟອມປະເມີນຄູໃໝ່, ປະເມີນລັດຖະກອນບໍລິຫານ ແລະ ຄູສອນທົ່ວໄປ. ຜົນຈາກການປະເມີນທັງສາມດ້ານໄດ້ມີຜົນຕໍ່ການປັບປຸງການຮຽນ-ການສອນ, ການຍ້ອງຍໍ, ການເລື່ອນຊັ້ນ-ຂັ້ນ, ການໄດ້ຮັບໂອກາດໃນການເຝິກອົບຮົມ ແລະ ຍົກລະດັບ.

ການມອບໝາຍວຽກໃຫ້ພະນັກງານໄດ້ປະຕິບັດຕາມຄູ່ມືວິທີການເຮັດວຽກຂອງວິທະຍາໄລຄູ ສະບັບທີ I, ເດືອນ ເມສາ ປີ 2010 ໂດຍອີງໃສ່ຄວາມເໝາະສົມຕາມຄວາມຮູ້ຄວາມສາມາດ ແລະ ຄຸນສົມບັດ. ນອກຈາກນັ້ນ ຍັງມີແຜນພັດທະນາບຸກຄະລາກອນໃນແຕ່ລະສົກຮຽນເຊັ່ນ: ແຜນພັດທະນາບຸກຄະລາກອນໃນສົກຮຽນ 2016-2017 ອີງໃສ່ແຜນສະບັບເລກທີ 186 /ວຄສ/ 2016 ລົງວັນທີ 18 ມີນາ 2016 ແລະ ແຜນຄວາມຕ້ອງການຄູສະບັບລົງວັນທີ 02 ກຸມພາ 2017.

**2. ຈຸດດີ**

ຍ້ອນມີແຜນພັດທະນາບຸກຄະລາກອນ, ວິທະຍາໄລຄູ ສະຫວັນນະເຂດ ຈຶ່ງມີບ່ອນອີງໃນການບັນຈຸ, ສັບຊ້ອນ, ຊຸກຍູ້ສົ່ງເສີມພະນັກງານໃນການຈັດຕັ້ງປະຕິບັດໜ້າທີ່ວຽກງານ, ຍົກລະດັບຄວາມຮູ້ດ້ານວິຊາສະເພາະຂອງພະນັກງານ, ການກຳນົດນະໂຍບາຍ, ການປະເມີນພະນັກງານ, ການຍ້ອງຍໍສັນລະເສີນ ເປັນລະບົບ ແລະ ສອດຄ່ອງກັບສະພາບຄວາມເປັນຈິງຂອງສະຖາບັນ.

ການປະເມີນຜົນການສອນຂອງຄູ, ວິທະຍາໄລຄູ ສະຫວັນນະເຂດ ໄດ້ມີແຜນເຝິກອົບຮົມ ແລະ ຍົກລະດັບໃຫ້ແກ່ຄູເຊິ່ງເຮັດໃຫ້ຂະບວນການເຝິກອົບຮົມ, ຍົກລະດັບ ແລະ ສ້າງບຸກຄະລາກອນຄູຖືກກັບເປົ້າໝາຍຂອງສະຖາບັນ ແລະ ເຮັດໃຫ້ຄູ-ອາຈານໄດ້ຮັບການພັດທະນາຄວາມຮູ້ດ້ານວິຊາການຂອງຕົນຖືກຕ້ອງຕາມໜ້າທີ່ວິຊາສະເພາະ ເຊິ່ງເປັນສາເຫດເຮັດໃຫ້ຄູມີຄວາມສາມາດຖ່າຍທອດຄວາມຮູ້, ຄວາມສາມາດຕາມຫຼັກສູດ, ນຳໃຊ້ເຕັກນິກການສອນເຂົ້າໃນກິດຈະກຳການຮຽນ-ການສອນທີ່ຫຼາກຫຼາຍ ແລະ ສອດຄ່ອງກັບການຮຽນຮູ້ຂອງຜູ້ຮຽນ. ຄຽງຄູ່ກັນນັ້ນ, ຜົນການປະເມີນລັດຖະກອນໃໝ່ ໄດ້ເຮັດໃຫ້ສະຖາບັນ ໄດ້ບຸກຄະລາກອນ

ທີ່ມີຄຸນນະພາບ. ນອກຈາກນັ້ນ, ຜົນການປະເມີນລັດຖະກອນບໍລິຫານ ເຮັດໃຫ້ສະຖາບັນເຫັນໄດ້ຈຸດທີ່ຈະຕ້ອງປັບປຸງແກ້ໄຂ ເພື່ອເຮັດໃຫ້ວຽກງານບໍລິຫານພາຍໃນສະຖາບັນດີຂຶ້ນ.

ວິທະຍາໄລຄູ ສະຫວັນນະເຂດ ໄດ້ມີການບັນຈຸ ແລະ ສັບຊ້ອນພະນັກງານຖືກຕ້ອງ ແລະ ເໝາະສົມກັບວິຊາສະເພາະ, ຄວາມຮູ້ ແລະ ຄວາມສາມາດ ຈຶ່ງເຮັດໃຫ້ການຈັດຕັ້ງປະຕິບັດໜ້າທີ່ວຽກງານບັນລຸຕາມຈຸດປະສົງ ແລະ ມີປະສິດທິຜົນ. ນອກນັ້ນ, ການຍ້ອງຍໍ ແລະ ປະຕິບັດນະໂຍບາຍຕໍ່ບຸກຄະລາກອນໃນການໄປຍົກລະດັບ, ເຝິກອົບຮົມ ແລະ ຜູ້ມີຜົນງານດີເດັ່ນ ໄດ້ເຮັດໃຫ້ບຸກຄະລາກອນມີກຳລັງໃຈ, ມີການແຂ່ງຂັນ, ບຸກບືນຕໍ່ການປະຕິບັດໜ້າທີ່ຂອງຕົນ ເຊິ່ງເຮັດໃຫ້ເກີດຜົນສຳເລັດທີ່ດີແກ່ຕົນເອງ ແລະ ສະຖາບັນ.

ຍ້ອນບຸກຄະລາກອນຂອງສະຖາບັນ ມີວຸດທິທີ່ຖືກຕ້ອງຕາມວິຊາສະເພາະ ຈຶ່ງເຮັດໃຫ້ການຈັດຕັ້ງປະຕິບັດການຮຽນ-ການສອນມີປະສິດທິພາບ ແລະ ໄດ້ຮັບຜົນສຳເລັດໃນແຕ່ລະສົກຮຽນ ເຊິ່ງສະແດງອອກໃນສົກຮຽນ 2016-2017 ມີນັກສຶກສາຄູທີ່ຮຽນຈົບ 1,223 ຄົນ, ຍິງ 902 ຄົນ.

ໃນສົກປີ 2016-2017 ຄູອາຈານໃນວິທະຍາໄລຄູ ສະຫວັນນະເຂດ ມີວຸດທິການສຶກສາ ລະດັບປະລິນຍາເອກ 1 ຄົນ, ຍິງ 0 ຄົນ, ລະດັບປະລິນຍາໂທ 52 ຄົນ, ຍິງ 18 ຄົນ, ປະລິນຍາຕີ 119 ຄົນ, ຍິງ 60 ຄົນ, ອະນຸປະລິນຍາ 31 ຄົນ, ຍິງ 26 ຄົນ ແລະ ຊັ້ນກາງ 1 ຄົນ, ຍິງ 1 ຄົນ. ກຳລັງສຶກສາຕໍ່ປະລິນຍາເອກ 5 ຄົນ, ຍິງ 1 ຄົນ, ປະລິນຍາໂທ 31 ຄົນ, ຍິງ 11 ຄົນ, ປະລິນຍາຕີ 9 ຄົນ, ຍິງ 9 ຄົນ.

ໃນສົກປີ 2017-2018 ວຄສ ໄດ້ມີແຜນພັດທະນາບຸກຄະລາກອນປະຈຳປີ, ໄດ້ເຊັນ MoU ເພີ່ມກັບມະຫາວິທະຍາໄລຢູນານ ສປ ຈີນ, ໄດ້ຊຸກຍູ້-ສົ່ງເສີມ ຄູ-ອາຈານທີ່ມີເງື່ອນໄຂໃນການຍົກລະດັບດ້ວຍທຶນຕົນເອງ, ໄດ້ມີແຜນໃນການຊຸກຍູ້ຄູ-ອາຈານໃນການຂຽນຂໍຕຳແໜ່ງວິຊາການ, ຂຽນບົດຄົ້ນຄວ້າວິໄຈ, ແຟ້ມສະສົມຜົນງານ ຂອງຄູ-ອາຈານ.

### 3. ຂໍ້ຄົງຄ້າງ ແລະ ສາເຫດ

- ຄູພະລະສຶກສາ, ຄູສິລະປະສຶກສາ, ຄູຊີວະສາດ, ຄູ ICT ແລະ ຄູສອນວິຊາພື້ນຖານວິຊາຊີບຍັງບໍ່ພຽງພໍ.

### 4. ຂໍ້ແນະນຳຂອງຄະນະປະເມີນພາຍນອກ

- ຊຸກຍູ້ແຜນພັດທະນາບຸກຄະລາກອນໃຫ້ໄດ້ຮັບຜົນ ແລະ ບັນລຸໄດ້ຕາມແຜນການທີ່ວາງໄວ້
- ໃຫ້ມີແຜນການລະອຽດເພື່ອສ້າງໂອກາດໃຫ້ຄູ-ອາຈານໃນການທຽບຕຳແໜ່ງວິຊາການ, ຊຸກຍູ້ໃຫ້ຄູມີການຂຽນ-ຄົ້ນຄວ້າວິໄຈ-ແຟ້ມສະສົມຜົນງານ
- ບັນຈຸຄູທີ່ຍັງຂາດຄື: ຄູພະລະສຶກສາ, ຄູ ICT, ຄູສິລະປະສຶກສາ ແລະ ອື່ນໆ

### 5. ທິດທາງໃນການປັບປຸງ

- ສ້າງແຜນພັດທະນາບຸກຄະລາກອນປະຈຳປີ
- ສົມທົບກັບບັນດາສະຖາບັນການສຶກສາທັງພາຍໃນ ແລະ ຕ່າງປະເທດທີ່ໄດ້ເຊັນ MoU ຮ່ວມກັນ
- ປະສານສົມທົບກັບກະຊວງ ສສກ, ໂຄງການ ເພື່ອຂໍທຶນສະໜັບສະໜູນການພັດທະນາບຸກຄະລາກອນ
- ຊຸກຍູ້-ສົ່ງເສີມ ຄູ-ອາຈານທີ່ມີເງື່ອນໄຂໃນການຍົກລະດັບດ້ວຍທຶນຕົນເອງ
- ສ້າງແຜນລະອຽດການຂໍຕຳແໜ່ງວິຊາການ, ຂຽນບົດຄົ້ນຄວ້າວິໄຈ, ແຟ້ມສະສົມຜົນງານ ຂອງຄູ-ອາຈານໃນແຕ່ລະສົກຮຽນ
- ສະເໜີຂໍໂກຕ້າຄູທີ່ຍັງບໍ່ພໍ: ຄູພະລະສຶກສາ, ຄູສິລະປະສຶກສາ, ຄູ ICT, ຄູຊີວະສາດ.

## ມາດຕະຖານທີ IV: ຫຼັກສູດ

### 1. ການຈັດຕັ້ງປະຕິບັດ

ໃນຂະບວນການພັດທະນາຫຼັກສູດ, ວິທະຍາໄລຄູ ສະຫວັນນະເຂດ ໄດ້ດຳເນີນຕາມທິດທາງ, ວາລະ ແລະ ແຜນການຂອງກົມສ້າງຄູ, ກະຊວງສຶກສາທິການ ແລະ ກິລາ ໂດຍອີງໃສ່ແຜນພັດທະນາຫຼັກສູດທີ່ກະຊວງສຶກສາທິການ ແລະ ກິລາ ວາງອອກແຕ່ລະໄລຍະ ເຊິ່ງມີນັກວິຊາການຈາກກົມສ້າງຄູ, ກົມສາມັນ, ສູນຄົ້ນຄວ້າວິທະຍາສາດການສຶກສາແຫ່ງຊາດ, ວິທະຍາໄລຄູ, ຄະນະສຶກສາສາດ ທຸກແຫ່ງທົ່ວປະເທດ, ພະແນກສຶກສາທິການ ແລະ ກິລາ ແຂວງ ທີ່ມີວິທະຍາໄລຄູຕັ້ງຢູ່ ແລະ ພາກສ່ວນອື່ນໆທີ່ກ່ຽວຂ້ອງເຂົ້າຮ່ວມ ຕາມການແຈ້ງເຊີນຈາກກົມສ້າງຄູ.

ນອກຈາກ ປະຕິບັດຕາມແຜນ ແລະ ວາລະ ການພັດທະນາຫຼັກສູດທີ່ກົມສ້າງຄູໄດ້ກຳນົດໄວ້ແລ້ວ ວິທະຍາໄລຄູ ສະຫວັນນະເຂດ ຍັງໄດ້ມີການແຕ່ງຕັ້ງຄະນະຮັບຜິດຊອບຫຼັກສູດແຕ່ລະສາຂາວິຊາ ຈາກຜູ້ອຳນວຍການ ຕາມແຈ້ງການຂອງກົມສ້າງຄູສະບັບເລກທີ 242/ສຄ, ລົງວັນທີ 21 ເມສາ 2017 ເພື່ອດຳເນີນການທົບທວນຄວາມສອດຄ່ອງຂອງຫຼັກສູດ, ຕິດຕາມ ແລະ ປະເມີນການຈັດຕັ້ງປະຕິບັດຫຼັກສູດ, ຊອກວິທີແກ້ໄຂຈຸດຄ້າງຄາໃຫ້ເປັນເອກະພາບ. ໃນເວລານຳໃຊ້ຫຼັກສູດ, ເມື່ອພົບເຫັນຂໍ້ຄົງຄ້າງ ຫຼື ຄວາມບໍ່ເໝາະສົມຂອງຫຼັກສູດ ຄະນະຮັບຜິດຊອບຫຼັກສູດຂອງສະຖາບັນໄດ້ບັນທຶກສິ່ງດັ່ງກ່າວ ເພື່ອສະເໜີດັດແກ້ໃນກອງປະຊຸມທົບທວນຫຼັກສູດທີ່ກົມສ້າງຄູຈັດຂຶ້ນຕາມຄວາມເໝາະສົມ.

ເພື່ອຕີລາຄາຄວາມສອດຄ່ອງຂອງຫຼັກສູດ, ວິທະຍາໄລຄູ ສະຫວັນນະເຂດ ໄດ້ມີການຕິດຕາມ ແລະ ເກັບກຳຂໍ້ມູນກ່ຽວກັບຫຼັກສູດຈາກນັກສຶກສາຄູທີ່ເປັນນັກຮຽນສາມັນ ແລະ ນັກສຶກສາຄູທີ່ເປັນຄູປະຈຳການມາຮຽນຕໍ່ ເປັນຂໍ້ມູນເພື່ອທົບທວນຫຼັກສູດ.

ຫຼັກສູດສ້າງຄູທີ່ຖືກພັດທະນາຂຶ້ນ ມີຈຸດປະສົງສົ່ງເສີມຄວາມຮູ້ວິຊາການຄູ, ປະສົບການໃນໂຮງຮຽນ ແລະ ກິດຈະກຳຕ່າງໆທີ່ກວມ 3 ລັກສະນະ 5 ຫຼັກມູນການສຶກສາແຫ່ງຊາດ ເຊິ່ງໄດ້ກວມເອົາບັນດາຂອບຄວາມຮູ້ຂອງໝວດວິຊາຕ່າງໆທີ່ສຳຄັນ ແລະ ເໝາະສົມກັບແຜນຍຸດທະສາດການສ້າງຄູ. ໃນໂຄງສ້າງຂອງຫຼັກສູດສ້າງຄູ ໄດ້ກຳນົດຈຳນວນໜ່ວຍກິດລະຫວ່າງທິດສະດີ, ພາກປະຕິບັດ ແລະ ວຽກມອບໝາຍ ຄົບຖ້ວນ ແລະ ຈະແຈ້ງ, ມີສັດສ່ວນໝວດວິຊາຢ່າງຈະແຈ້ງເຊັ່ນ: ຄວາມຮູ້ວິຊາສະເພາະ, ຄວາມຮູ້ພື້ນຖານວິຊາສະເພາະ, ຄວາມຮູ້ວິຊາທົ່ວໄປ, ຄວາມຮູ້ວິຊາຄູ, ວິຊາບັງຄັບ, ວິຊາເລືອກ, ປະສົບປະການ ແລະ ການເຝິກຫັດວິຊາຊີບຄູຢູ່ໂຮງຮຽນສາມັນ. ນອກນັ້ນ, ຫຼັກສູດຍັງໄດ້ເນັ້ນໃສ່ການຮຽນຮູ້ພາສາຕ່າງປະເທດ, ການນຳໃຊ້ IT ພື້ນຖານ ແລະ ການວິໄຈພາກປະຕິບັດ.

ຫຼັກສູດບາງສາຂາວິຊາ ທີ່ມີລະດັບວຸດທິຕ່າງກັນເຊັ່ນ: ຫຼັກສູດຄູອະນຸບານ ແລະ ຄູປະຖົມ ໄດ້ຖືກພັດທະນາໃຫ້ມີຄວາມຕໍ່ເນື່ອງໃນດ້ານລະດັບວຸດທິຈາກຊັ້ນກາງຮອດປະລິນຍາຕີ.

ປັດຈຸບັນ, ວິທະຍາໄລຄູ ສະຫວັນນະເຂດ ໄດ້ຮັບອະນຸຍາດຈາກກົມສ້າງຄູໃຫ້ດຳເນີນການສ້າງບຸກຄະລາກອນຄູ ຕາມ 4 ສາຍຮຽນ ເຊິ່ງລວມມີ 17 ຫຼັກສູດຄື:

- ຫຼັກສູດສ້າງຄູມັດທະຍົມ (ສອນແຕ່ ມ 1 - ມ 7) ປະລິນຍາຕີ ລະບົບ 12+4 ມີ 7 ຫຼັກສູດ: ຄູເຄມີສາດ, ຄູຄະນິດສາດ, ຄູຟີຊິກສາດ, ຄູ ICT ພື້ນຖານວິຊາຊີບ, ຄູພາສາອັງກິດ, ຄູປະຫວັດສາດ ແລະ ຄູພາສາລາວ-ວັນນະຄະດີ.
- ຫຼັກສູດສ້າງຄູມັດທະຍົມ ອະນຸປະລິນຍາ ລະບົບ 12+3 ມີ 1 ຫຼັກສູດ: ຄູພາສາຫວຽດນາມ.
- ຫຼັກສູດສ້າງຄູປະຖົມ ມີ 5 ຫຼັກສູດ: ຊັ້ນກາງ, ອະນຸປະລິນຍາພາກປົກກະຕິ, ພາກພັກທ້າຍປີຮຽນ ແລະ ປະລິນຍາຕີພາກປົກກະຕິ ແລະ ຕໍ່ເນື່ອງ.
- ຫຼັກສູດສ້າງຄູອະນຸບານ ມີ 4 ຫຼັກສູດ: ຊັ້ນກາງ, ອະນຸປະລິນຍາພາກປົກກະຕິ, ພາກພັກທ້າຍປີຮຽນ ແລະ ປະລິນຍາຕີ.

ດ້ານຄວາມສະດວກອື່ນໆ, ວິທະຍາໄລຄູ ສະຫວັນນະເຂດ ມີໂຮງຮຽນລ້ຽງເດັກ-ອະນຸບານສາທິດ, ໂຮງຮຽນປະຖົມສົມບູນສາທິດ ແລະ ມີໂຮງຮຽນສາມັນທີ່ເປັນເຄືອຂ່າຍສຳລັບລົງເຝິກປະສົບການສອນໃຫ້ນັກສຶກສາຄູ 7 ແຫ່ງ. ໃນນັ້ນ, ມີໂຮງຮຽນອະນຸບານ 2 ແຫ່ງ, ໂຮງຮຽນປະຖົມສົມບູນ 4 ແຫ່ງ ແລະ ໂຮງຮຽນມັດທະຍົມສົມບູນ 1 ແຫ່ງ.

ໄລຍະທີ່ຜ່ານມາ, ວິທະຍາໄລຄູ ສະຫວັນນະເຂດ ໄດ້ສົ່ງນັກສຶກສາຄູປີສຸດທ້າຍລົງເຝິກຫັດວິຊາຊີບຄູ ເປັນເວລາ 10 ອາທິດ, ສຳລັບສົກຮຽນ 2016-2017 ໄດ້ເຝິກຫັດ 12 ອາທິດ ຢູ່ໂຮງຮຽນສາມັນ ພາຍໃນ 25 ເມືອງ ຂອງ 2 ແຂວງທີ່ເປັນເຂດບໍລິການເຝິກຫັດວິຊາຊີບຄູຂອງສະຖາບັນ. ນອກຈາກນີ້, ນັກສຶກສາທີ່ຮຽນໃນຫຼັກສູດພາສາຫວຽດນາມຍັງໄດ້ລົງເຝິກຫັດວິຊາຊີບຄູ ທີ່ແຂວງ ກວາງຈີ ສສ. ຫວຽດນາມ ໂດຍມີຂໍ້ຕົກລົງຈາກລັດຖະມົນຕີ ກະຊວງສຶກສາທິການ ແລະ ກິລາ. ຄຽງຄູ່ກັບວຽກງານເຝິກຫັດວິຊາຊີບ, ນັກເຝິກຫັດຍັງໄດ້ເຮັດການວິໄຈໃນຫົວຂໍ້ທີ່ເປັນການສົ່ງເສີມການແກ້ໄຂບັນຫາດ້ານການຮຽນ-ການສອນໃນຫ້ອງຮຽນ, ການພັດທະນາວິຊາຊີບຄູແບບຕໍ່ເນື່ອງ ແລະ ເກີດການຮຽນຮູ້ຕະຫຼອດຊີວິດ.

ປັດຈຸບັນ, ວິທະຍາໄລຄູ ສະຫວັນນະເຂດ ໄດ້ມີສ່ວນຮ່ວມໃນການພັດທະນາຫຼັກສູດສາຂາວິຊາ ຄູຄະນິດສາດ ແລະ ຄູເຄມີສາດ ທີ່ຖືກກຳນົດໃຫ້ເປັນວິຊາ ການສ້າງສູນແຫ່ງການພັດທະນາ ເພື່ອກ້າວເຂົ້າສູ່ສູນແຫ່ງຄວາມເປັນເລີດປະຈຳສະຖາບັນຂອງຕົນ. ນອກຈາກຫຼັກສູດແຫ່ງຊາດແລ້ວ, ຍັງໄດ້ກຳນົດເອົາບາງລາຍວິຊາທີ່ສຳຄັນ ແລະ ຈຳເປັນສຳລັບພັດທະນາວິຊາຊີບເຂົ້າເປັນວິຊາຊີບເສີມໃຫ້ແທດເໝາະກັບຄວາມຕ້ອງການຂອງທ້ອງຖິ່ນເຊັ່ນ: ວິຊາກະເສດສຶກສາ, ປູກຝັງ, ລ້ຽງສັດ, ກ້າເບ້ຍໄມ້, ຕັດຫຍິບ, ປຸງແຕ່ງອາຫານ, ຕັດຜົມ ແລະ ຜະລິດດິນປູ່ອກ.

ເວົ້າລວມແລ້ວ, ການພັດທະນາ ແລະ ນຳໃຊ້ຫຼັກສູດສ້າງຄູ ມີຄວາມສຳຄັນ ແລະ ຈຳເປັນສຳລັບຈັດການຮຽນ-ການສອນຢູ່ໃນສະຖາບັນ, ສອດຄ່ອງກັບທິດທາງລວມຂອງແຜນພັດທະນາການສຶກສາແຫ່ງຊາດ, ມີຄວາມກົມກຽວກັບຫຼັກສູດສາມັນ ແລະ ແທດເໝາະກັບຄວາມຕ້ອງການຂອງທ້ອງຖິ່ນ.

## 2. ຈຸດດີ

ຜ່ານການພັດທະນາ ແລະ ນຳໃຊ້ຫຼັກສູດສ້າງຄູສາຂາວິຊາຕ່າງໆ, ໄດ້ເຮັດໃຫ້ ວິທະຍາໄລຄູ ສະຫວັນນະເຂດ ມີທິດທາງ ແລະ ແຜນການ ເພື່ອເປັນບ່ອນອີງໃນການຈັດຕັ້ງການການຮຽນ-ການສອນພາຍໃນສະຖາບັນ.

ຍ້ອນວ່າຫຼັກສູດສ້າງຄູສາຂາວິຊາຕ່າງໆມີເປົ້າໝາຍທີ່ຊັດເຈນ ຈຶ່ງເຮັດໃຫ້ຜູ້ຮຽນມີຄວາມຮູ້ວິຊາການຄູຕາມສາຂາວິຊາ, ສາມາດນຳໄປຜັນຂະຫຍາຍເຂົ້າໃນການສິດສອນຢ່າງມີປະສິດທິພາບສູງ ແລະ ສາມາດແກ້ໄຂບັນຫາການຮຽນ-ການສອນຢູ່ໃນຂອບເຂດຄວາມຮັບຜິດຊອບຂອງຕົນໄດ້ຢ່າງຕໍ່ເນື່ອງ ແລະ ເປັນລະບົບ.

ເນື້ອໃນຫຼັກສູດສ້າງຄູມີຄວາມສອດຄ່ອງກັບຫຼັກສູດສາມັນໃນທຸກຊັ້ນ ເຊິ່ງສະແດງອອກຢູ່ບ່ອນວ່າ ບັນດາຂອບຄວາມຮູ້ວິຊາຕ່າງໆທີ່ໄດ້ກຳນົດໄວ້ຢູ່ໃນຫຼັກສູດສ້າງຄູ ແມ່ນກົງກັບລາຍວິຊາຂອງຫຼັກສູດສາມັນ ເຮັດໃຫ້ມີຄວາມສະດວກໃນການປະເມີນວຽກງານເຝິກປະສົບການ ແລະ ເຝິກຫັດວິຊາຊີບຂອງນັກສຶກສາຄູໃນໂຮງຮຽນສາມັນ ເຊິ່ງລ້ວນແຕ່ເປັນປັດໄຈສະໜັບສະໜູນໃນການພັດທະນາຄວາມສາມາດດ້ານວິຊາການ, ການຮຽນຮູ້ດ້ວຍຕົນເອງ ແລະ ການນຳໃຊ້ປະສົບການເຂົ້າໃນການສອນເພື່ອພັດທະນາທັກສະວິຊາສະເພາະຂອງຜູ້ຮຽນ ແລະ ພາໃຫ້ເກີດການຮຽນຮູ້ແບບຕໍ່ເນື່ອງ.

ຍ້ອນຫຼັກສູດມີອັດຕາສ່ວນລະຫວ່າງທິດສະດີ, ການປະຕິບັດ ແລະ ວຽກມອບໝາຍ ທີ່ເໝາະສົມ ຈຶ່ງເຮັດໃຫ້ຜູ້ຮຽນ ຮູ້ໝູນໃຊ້ທິດສະດີໃຫ້ສອດຄ່ອງກັບສະພາບຕົວຈິງ, ສາມາດດຳເນີນພາກປະຕິບັດເຊັ່ນ: ເຮັດການທົດລອງ, ແຕ່ງບົດສອນ, ຜະລິດສື່ການສອນ, ກຳນົດກິດຈະກຳການສອນທີ່ເໝາະສົມ ແລະ ດຳເນີນການສອນໄດ້ຢ່າງມີປະສິດທິພາບ ເຊິ່ງສະແດງອອກຢູ່ບ່ອນວ່າ ເວລາລົງເຝິກຫັດວິຊາຊີບຄູຢູ່ໂຮງຮຽນສາມັນ ນັກເຝິກຫັດ

ໄດ້ຖືກຍອມຮັບໃນດ້ານຄວາມຮູ້ວິຊາສະເພາະ, ຄວາມສາມາດດ້ານວິຊາການ, ທັກສະການເຮັດວຽກ ແລະ ການແກ້ໄຂບັນຫາການຮຽນ-ການສອນ ຈາກຄູໃນໂຮງຮຽນສາມັນ.

ຈາກການທົບທວນຫຼັກສູດແຕ່ລະໄລຍະ, ເຮັດໃຫ້ມີຄວາມເປັນເອກະພາບໃນການປະຕິບັດຫຼັກສູດຫຼາຍຂຶ້ນກວ່າເກົ່າ, ການຈັດຕັ້ງປະຕິບັດຫຼັກສູດຄົບຖ້ວນ ແລະ ແທດເໝາະກັບທ້ອງຖິ່ນ ເຮັດໃຫ້ຜູ້ຮຽນມີຄວາມຊໍານິຊໍານານໃນການໝູນໃຊ້ທິດສະດີເຂົ້າໃນພາກປະຕິບັດໃຫ້ສອດຄ່ອງກັບທ້ອງຖິ່ນຕົນ.

ເວົ້າລວມແລ້ວ, ການປະຕິບັດຫຼັກສູດ ໄດ້ເຮັດໃຫ້ວິທະຍາໄລຄູ ສະຫວັນນະເຂດ ມີບ່ອນອີງ ແລະ ຄວາມສະດວກໃນການສ້າງບຸກຄະລາກອນຄູ, ມີບ່ອນອີງໃນການສ້າງແຜນ ແລະ ກໍານົດທິດທາງພັດທະນາຄູ-ອາຈານໃນດ້ານວິຊາການໃຫ້ມີຄຸນນະພາບສູງ ແລະ ນໍາໃຊ້ຫຼັກສູດຢ່າງມີປະສິດທິພາບ ເຮັດໃຫ້ການສ້າງບຸກຄະລາກອນຄູມີຄຸນນະພາບຕາມມາດຕະຖານຂອງຫຼັກສູດແຫ່ງຊາດ ສາມາດສອນວິຊາຂອງຕົນຢູ່ໃນໂຮງຮຽນສາມັນໄດ້ຢ່າງມີປະສິດທິຜົນ. ໃນຫຼາຍສົກຮຽນທີ່ຜ່ານມາ, ວິທະຍາໄລຄູ ສະຫວັນນະເຂດ ໄດ້ສ້າງບຸກຄະລາກອນຄູຕາມຄວາມຕ້ອງການຂອງເມືອງຕ່າງໆໃນ 2 ແຂວງ ເຂດບໍລິການເຊັ່ນ: ຄູອະນຸບານ, ຄູປະຖົມ ແລະ ຄູມັດທະຍົມໃນສາຂາວິຊາຕ່າງໆ.

ເພື່ອປະຕິບັດຕາມຂໍ້ແນະນໍາຈາກຄະນະປະເມີນພາຍນອກ ໃນສົກຮຽນ 2017-2018 ວຄສ ໄດ້ແຕ່ງຕັ້ງຄະນະຮັບຜິດຊອບການປະເມີນຫຼັກສູດ, ໄດ້ສ້າງແຜນດໍາເນີນການປະເມີນຫຼັກສູດ, ໄດ້ສ້າງເຄື່ອງມືເກັບກໍາຂໍ້ມູນການປະເມີນ ແລະ ວິເຄາະຂໍ້ມູນ, ໄດ້ເພີ່ມຊົ່ວໂມງພາສາອັງກິດເຂົ້າໃນຫຼັກສູດປົກກະຕິຂອງແຕ່ລະສາຍ (4 ຊົ່ວໂມງ/ອາທິດ), ໄດ້ເປີດສອນບໍາລຸງພາສາອັງກິດໃຫ້ນັກຮຽນ-ນັກສຶກສາທົ່ວໄປ, ຈັດຕັ້ງບໍາລຸງພາສາອັງກິດໃຫ້ນັກສຶກສາປີທີ 1 ແລະ ພາສາຫວຽດນາມໃຫ້ຄູ-ອາຈານ.

## 3. ຂໍ້ຄົງຄ້າງ ແລະ ສາເຫດ

- ວິຊາຄວາມຮູ້ທ້ອງຖິ່ນທີ່ນໍາໃຊ້ໄລຍະຜ່ານມາຍັງບໍ່ທັນມີຄວາມເປັນເອກະພາບທາງດ້ານເນື້ອໃນ

## 4. ຂໍ້ແນະນໍາຂອງຄະນະປະເມີນພາຍນອກ

- ໃຫ້ເຮັດການປະເມີນຫຼັກສູດຄືນເປັນແຕ່ລະໄລຍະ ເພື່ອເປັນຂໍ້ມູນພື້ນຖານໃນການປັບປຸງ ແລະ ພັດທະນາຫຼັກສູດ ໂດຍໃຫ້ມີຫຼາຍພາກສ່ວນເຂົ້າຮ່ວມໃນຂະບວນການປະເມີນ
- ເຊື່ອມສານທັກສະການຮຽນຮູ້ຕະຫຼອດຊີວິດ ເຊັ່ນ: ການຮຽນຮູ້ດ້ວຍຕົນເອງ, ທັກສະຊີວິດ....ໃຫ້ຫຼາຍຂຶ້ນ
- ວຄສ ຄວນມີຄວາມເປັນເອກະລາດໃນລະດັບທີ່ເໝາະສົມໃນການສ້າງຫຼັກສູດ ທີ່ເປັນຄວາມຕ້ອງການຂອງສັງຄົມ (ພາສາອັງກິດ, ພາສາຫວຽດນາມ...) ອີງຕາມຈຸດພິເສດທາງທີ່ຕັ້ງ

## 5. ທິດທາງໃນການປັບປຸງ

- ແຕ່ງຕັ້ງຄະນະຮັບຜິດຊອບການປະເມີນຫຼັກສູດ, ສ້າງແຜນດໍາເນີນການປະເມີນຫຼັກສູດ, ສ້າງເຄື່ອງມືເກັບກໍາຂໍ້ມູນການປະເມີນ, ວິເຄາະຂໍ້ມູນ ແລະ ເຮັດບົດລາຍງານກົມສ້າງຄູ
- ເພີ່ມຊົ່ວໂມງສອນພາສາອັງກິດເຂົ້າໃນແຕ່ລະສາຍໃຫ້ຫຼາຍຂຶ້ນ
- ນໍາສະເໜີຂັ້ນເທິງໃນການສ້າງຫຼັກສູດທີ່ເປັນຄວາມຕ້ອງການຂອງສັງຄົມ ທີ່ເໝາະສົມກັບທ້ອງຖິ່ນ ເຊັ່ນ: ຫຼັກສູດພາສາອັງກິດທົ່ວໄປ ແລະ ພາສາຫວຽດນາມທົ່ວໄປ (ໃຫ້ອີງຕາມຜົນການປະເມີນ ແລະ ຜົນການສໍາຫຼວດຄວາມຕ້ອງການ)

# ມາດຕະຖານທີ V: ປະສິດທິຜົນຂອງການຮຽນ-ການສອນ

## 1. ການຈັດຕັ້ງປະຕິບັດ

ວິທະຍາໄລຄູສະຫວັນນະເຂດ ໄດ້ມີການຕິດຕາມການຮຽນ-ການສອນ ແລະ ຮັບຟັງຄໍາຄິດເຫັນຈາກພາກສ່ວນຕ່າງໆເຊັ່ນ: ໄດ້ມອບໃຫ້ຫ້ອງການວິຊາການສົມທົບກັບ 4 ຫ້ອງການວິຊາສະເພາະຄື: ຫ້ອງການວິທະຍາສາດທໍາມະຊາດ, ຫ້ອງການວິທະຍາສາດສັງຄົມ, ຫ້ອງການພາສາຕ່າງປະເທດ ແລະ ຫ້ອງການປະຖົມອະນຸບານ ອອກຕາຕະລາງດໍາເນີນການຮຽນ-ການສອນໃນແຕ່ລະສາຍຮຽນ ເພື່ອເປັນບ່ອນອີງໃຫ້ຄູປະຈໍາວິຊາໄດ້ປະຕິບັດການສອນຕາມຕາຕະລາງ ແລະ ແຜນການສອນທີ່ວາງໄວ້. ເພື່ອເຮັດການຮຽນ-ການສອນໄດ້ຮັບປະສິດທິຜົນດີ, ສະນັ້ນ 4 ຫ້ອງການວິຊາສະເພາະຈິ່ງໄດ້ມີການບັນທຶກ ແລະ ຕິດຕາມການຂຶ້ນຫ້ອງສອນແຕ່ລະຄັ້ງຂອງຄູອາຈານ ດ້ວຍການບັນທຶກເພື່ອລົງລາຍເຊັນຂອງຄູສອນແຕ່ລະວິຊາຢູ່ແຕ່ລະຫ້ອງຮຽນ. ນອກຈາກນັ້ນຍັງມີການມອບໝາຍໃຫ້ແຕ່ລະຫ້ອງການຕິດຕາມການຂຶ້ນຫ້ອງສອນຂອງຄູໃນແຕ່ລະວັນໄປຄຽງຄູ່ກັນ. ເມື່ອສໍາເລັດການປະຕິບັດຫຼັກສູດໃນແຕ່ລະສາຍຮຽນແລ້ວ ກໍມີການຂຽນສະຫຼຸບລາຍງານ ແລະ ຖອດຖອນບົດຮຽນໃນແຕ່ລະພາກຮຽນ ເພື່ອເປັນແນວທາງໃນການຈັດຕັ້ງປະຕິບັດໃນຄັ້ງຕໍ່ໄປ.

ການຈັດການຮຽນ-ການສອນໃນວິທະຍາໄລຄູສະຫວັນນະເຂດ ໄດ້ປະຕິບັດຕາມຫຼັກສູດຂອງກະຊວງສຶກສາ ແລະ ກິລາ ກໍານົດໃຫ້ໄປຕາມ 3 ລັກສະນະ 5 ຫຼັກມູນການສຶກສາ. ນອກຈາກນັ້ນຄູ-ອາຈານຍັງໄດ້ນໍາໃຊ້ອຸປະກອນຕ່າງໆ ລວມທັງສື່ການສອນທັນສະໄໝ ແລະ ສື່ການສອນທີ່ຫາໄດ້ງ່າຍມາປະກອບ ເພື່ອເຮັດໃຫ້ການຮຽນ-ການສອນມີຄຸນນະພາບດີຂຶ້ນເປັນກ້າວໆເຊັ່ນ: ນໍາໃຊ້ LCD, ກະດານສະມາດບອດ, ທຸກສາຍຮຽນມີຫ້ອງເຝິກສອນ, ມີການປະຕິບັດຕົວຈິງໃນຫ້ອງທົດລອງເຄມີສາດ, ຊີວະສາດ, ຟີຊິກສາດ, ຫ້ອງຟັງສຽງ, ຫ້ອງພູມສາດ, ຫ້ອງດົນຕຣີ ແລະ ຫ້ອງຄອມພິວເຕີ. ຫ້ອງສະໝຸດໄດ້ເປີດບໍລິການລະບົບ Internet ເພື່ອໃຫ້ຄູ-ອາຈານ ແລະ ນັກສຶກສາໄດ້ຄົ້ນຄວ້າຫາຂໍ້ມູນທີ່ຫຼາກຫຼາຍ.

ນອກຈາກການສອນພາກທິດສະດີແລ້ວ ຍັງໄດ້ໃຫ້ນັກສຶກສາລົງເຝິກປະສົບປະການ ແລະ ລົງເຝິກຫັດວິຊາຊີບຢູ່ໂຮງຮຽນສາມັນ ໃນເຂດບໍລິການ ແລະ ໂຮງຮຽນເຄືອຂ່າຍຂອງ 2 ແຂວງຄື: ແຂວງສະຫວັນນະເຂດ ແລະ ຄໍາມ່ວນ ເພື່ອໃຫ້ນັກຮຽນໄດ້ຕິດຕາມ ແລະ ສອນຕົວຈິງ. ການຈັດສົ່ງນັກສຶກສາຄູລົງເຝິກປະສົບປະການ ແລະ ເຝິກຫັດວິຊາຊີບ ໄດ້ປະຕິບັດຕາມຂັ້ນຕອນດັ່ງນີ້: ລົງເກັບກໍາ, ຮວບຮວມຂໍ້ມູນ ແລະ ນາສະເໜີກົມສ້າງຄູ ກະຊວງສຶກສາທິການ ແລະ ກິລາ ອອກຂໍ້ຕົກລົງໃຫ້ນັກສຶກສາລົງເຝິກຫັດວິຊາຊີບຄູໃນແຕ່ລະສູນ.

## 2. ຈຸດດີ

ສະຖາບັນໄດ້ມີແຜນການຈັດການຮຽນ-ການສອນໃນແຕ່ລະສົກຮຽນ, ມີຕາຕະລາງດໍາເນີນການຮຽນ-ການສອນໃຫ້ຄູປະຈໍາວິຊາໄດ້ປະຕິບັດໃນແຕ່ລະສາຍຮຽນ. ແຕ່ລະຫ້ອງການສາຍຮຽນໄດ້ມີການບັນທຶກ ແລະ ຕິດຕາມການຂຶ້ນຫ້ອງສອນຂອງຄູ-ອາຈານສອນແຕ່ລະຄັ້ງ. ນອກນັ້ນ, ຍັງມີການມອບໝາຍໃຫ້ແຕ່ລະຫ້ອງການຕິດຕາມການຂຶ້ນຫ້ອງສອນຂອງຄູໃນແຕ່ລະວັນ ເພື່ອສະຫຼຸບລາຍງານ, ຖອດຖອນບົດຮຽນ ແລະ ເປັນແນວທາງໃນການຈັດຕັ້ງປະຕິບັດຄັ້ງຕໍ່ໄປ.

ໃນການຈັດການຮຽນ-ການສອນໂດຍນໍາໃຊ້ LCD, ກະດານສະມາດບອດ, ທຸກສາຍຮຽນມີຫ້ອງເຝິກສອນ, ມີການປະຕິບັດຕົວຈິງໃນຫ້ອງທົດລອງເຄມີສາດ, ຊີວະສາດ, ຟີຊິກສາດ, ຫ້ອງຟັງສຽງ, ຫ້ອງພູມສາດ, ຫ້ອງດົນຕຣີ ແລະ ຫ້ອງຄອມພິວເຕີ ເຮັດໃຫ້ນັກສຶກສາໄດ້ຮຽນຮູ້ຜ່ານການປະຕິບັດຕົວຈິງຫຼາຍຂຶ້ນ ເຊິ່ງເປັນ

ການເພີ່ມສັກກະຍະພາບໃນການຮຽນຮູ້ຂອງນັກສຶກສາ. ຄູ-ອາຈານໄດ້ຮັບຄວາມສະດວກ, ຊ່ວຍປະຢັດເວລາໃນການສອນ.

ຫ້ອງສະໝຸດໄດ້ກາຍເປັນແຫຼ່ງຮຽນຮູ້ທີ່ຫຼາກຫຼາຍເຊັ່ນ: ອໍານວຍຄວາມສະດວກໃນການຄົ້ນຄວ້າ, ເປັນບ່ອນສະໜອງຕອບຂໍ້ມູນ, ແລກປ່ຽນຂໍ້ມູນຂ່າວສານຜ່ານສື່ເອເລັກໂຕຣນິກ, ເຝິກທັກສະ ແລະ ປູກຈິດສໍານຶກໃນການອ່ານ.

ມີເຂດບໍລິການ, ສະຖານທີ່ເຝິກປະສົບປະການ ແລະ ເຝິກຫັດວິຊາຊີບທີ່ເໝາະສົມ, ອໍານາດການປົກຄອງທ້ອງຖິ່ນ, ຊຸມຊົນໄດ້ຮ່ວມມື ແລະ ອໍານວຍຄວາມສະດວກເປັນຢ່າງດີ. ການລົງເຝິກປະສົບປະການ ແລະ ລົງເຝິກຫັດວິຊາຊີບຢູ່ໂຮງຮຽນສາມັນ ເຮັດໃຫ້ນັກສຶກສາໄດ້ເຝິກທັກສະໃນການຮຽນຮູ້ປະສົບປະການຕົວຈິງ ໂດຍການນໍາໃຊ້ທິດສະດີເຂົ້າໃນການສິດສອນ, ການຄຸ້ມຄອງຫ້ອງຮຽນ ແລະ ການພັດທະນາຊຸມຊົນ.

ໃນສົກປີ 2017-2018 ວຄສ ໄດ້ເປີດກອງປະຊຸມຖອດຖອນບົດຮຽນກັບໂຮງຮຽນສາມັນ, ຫ້ອງການສຶກສາທິການ ແລະ ກິລາເມືອງ, ພະແນກສຶກສາທິການ ແລະ ກິລາແຂວງ ກ່ຽວກັບຄຸນນະພາບຂອງຄູທີ່ຈົບຈາກ ວຄສ, ຄູ-ອາຈານແຕ່ລະຄົນໄດ້ຄົ້ນຄວ້າ, ຮຽບຮຽງເອກະສານປະກອບການສອນ.

### 3. ຂໍ້ຄົງຄ້າງ ແລະ ສາເຫດ

- ການຊອກຫາເອກະສານປະກອບການສອນຂອງຄູບາງບົດ, ບາງວິຊາຍັງບໍ່ຄົບຖ້ວນ.

### 4. ຂໍ້ແນະນໍາຂອງຄະນະປະເມີນພາຍນອກ

- ຄວນເປີດໂອກາດໃຫ້ພາກສ່ວນຕ່າງໆມີສ່ວນຮ່ວມໃນການປະກອບຄໍາຄິດຄໍາເຫັນ ຕໍ່ປະສິດທິຜົນຂອງການຮຽນ-ການສອນຂອງຄູ
- ຄວນຊອກຫາວິທີແກ້ໄຂຢ່າງຮີບດ່ວນ ກ່ຽວກັບເອກະສານປະກອບການສອນຕໍ່ວິຊາທີ່ຍັງບໍ່ທັນມີ

### 5. ທິດທາງໃນການປັບປຸງ

- ສ້າງແຜນເປີດກອງປະຊຸມຖອດຖອນບົດຮຽນກັບໂຮງຮຽນສາມັນ, ຫ້ອງການສຶກສາທິການ ແລະ ກິລາເມືອງ, ພະແນກສຶກສາທິການ ແລະ ກິລາແຂວງ ກ່ຽວກັບຄຸນນະພາບຂອງຄູທີ່ຈົບຈາກ ວຄສ
- ຊຸກຍູ້-ສົ່ງເສີມໃຫ້ຄູ-ອາຈານແຕ່ລະຄົນ ຄົ້ນຄວ້າ, ຮຽບຮຽງເອກະສານປະກອບການສອນ (ກວດກາ ໃນທ້າຍພາກຮຽນທີ 1 ແລະ ທີ 2)

## ມາດຕະຖານທີ VI: ການສົ່ງເສີມນັກສຶກສາ

### 1. ການຈັດຕັ້ງປະຕິບັດ

ການສົ່ງເສີມຜູ້ຮຽນເພື່ອບັນລຸວິໄສທັດ, ພາລະກິດ ແລະ ຈຸດໝາຍ ຂອງວິທະຍາໄລຄູ ສະຫວັນນະເຂດ ໄດ້ເລີ່ມຈາກການກໍານົດມາດຕະຖານ ແລະ ເງື່ອນໄຂຂອງຜູ້ຮຽນຢ່າງຈະແຈ້ງ ບົນພື້ນຖານການສົ່ງເສີມດ້ານວິຊາການ ແລະ ການເຄື່ອນໄຫວກິດຈະກໍານອກຫຼັກສູດ.

ການຮັບນັກສຶກສາເຂົ້າຮຽນໄດ້ປະຕິບັດຕາມແຜນແບ່ງປັນຂອງກະຊວງສຶກສາທິການ ແລະ ກິລາ ແລະ ຄໍາສັ່ງແນະນໍາຂອງກົມສ້າງຄູ ເຊິ່ງມີ 2 ຮູບແບບຄື: ຮູບແບບທີ 1 ໄດ້ມາຈາກຂະບວນການຄັດເລືອກຂອງພະແນກສຶກສາທິການ ແລະ ກິລາ ແຂວງ. ຮູບແບບທີ 2 ໄດ້ມາຈາກຂະບວນການສອບເສັງຄັດເລືອກຂອງສະຖາບັນຜ່ານພາກຂຽນ ແລະ ສໍາພາດ. ມີຄະນະຊີ້ນໍາຈາກກົມສ້າງຄູ ກະຊວງສຶກສາທິການ ແລະ ກິລາ, ຄະນະອໍານວຍການ, ຄະນະຫ້ອງການ ແລະ ອະນຸກໍາມະການຮັບຜິດຊອບແຕ່ລະໜ້າວຽກເຊັ່ນ: ອະນຸກໍາມະການຮັບຜິດຊອບໂຄສະນາ, ຈັດເອກະສານ, ອອກຂໍ້ສອບ, ຈັດການສອບເສັງ ແລະ ກວດບົດສອບເສັງ.

ມາດຕະຖານ ແລະ ເງື່ອນໄຂຂອງຜູ້ເຂົ້າຮຽນທັງສອງຮູບແບບທີ່ໄດ້ກ່າວມາຂ້າງເທິງນັ້ນ ຕ້ອງສອດຄ່ອງກັບຂໍ້ກຳນົດຕໍ່ໄປນີ້: ເປັນຜູ້ທີ່ມີສຸຂະພາບແຂງແຮງ, ມີຄຸນສົມບັດດີ ແລະ ສຳເລັດການສຶກສາສາມັນເໝາະສົມກັບແຕ່ລະສາຍຮຽນດັ່ງນີ້: ນັກສຶກສາທີ່ຈະເຂົ້າຮຽນລະບົບ 9 + 3 (ວຸດທິຊັ້ນກາງ) ຕ້ອງຮຽນຈົບມັດທະຍົມຕອນຕົ້ນ, ຜູ້ທີ່ຈະເຂົ້າຮຽນລະບົບ 12 + 2 (ວຸດທິຊັ້ນສູງ) ແລະ ລະບົບ 12 + 4 (ວຸດທິປະລິນຍາຕີ) ຕ້ອງຮຽນຈົບມັດທະຍົມຕອນປາຍ.

ພາຍຫຼັງຮັບນັກສຶກສາເຂົ້າຮຽນໃນທຸກລະບົບ ວິທະຍາໄລຄູ ສະຫວັນນະເຂດ ໄດ້ຈັດຕັ້ງການນິເທດວຽກງານວິຊາການ: ແນະນຳຫຼັກສູດ, ລະບຽບການຮ່ວມຮຽນ, ເກນການໃຫ້ຄະແນນ, ແຫຼ່ງຂໍ້ມູນຮັບໃຊ້ໃນການຄົ້ນຄວ້າຮໍ່າຮຽນ ແລະ ການຕິດຕາມຜົນການຮຽນ. ກິດຈະກຳສົ່ງເສີມວິຊາການໄດ້ຈັດຕັ້ງຖາມ-ຕອບວິທະຍາສາດ, ເຮັດການທົດລອງ, ລົງປະສົບການຢູ່ຕາມໂຮງຮຽນສາມັນ, ຈັດຕັ້ງສຳມະນາ ແລະ ນຳພານັກສຶກສາໄປທັດສະນະສຶກສາຕາມສະຖານທີ່ຕ່າງໆ ທັງພາຍໃນ ແລະ ຕ່າງປະເທດ. ສິ່ງສຳຄັນອີກຢ່າງໜຶ່ງຍັງໄດ້ເອົາໃຈໃສ່ຈັດບຳລຸງນັກຮຽນອ່ອນ, ນັກຮຽນຊົນເຜົ່າຜູ້ທີ່ມີຄວາມຮູ້ພື້ນຖານຕໍ່າໃນລາຍວິຊາຫຼັກເຊັ່ນ: ວິຊາພາສາລາວ, ຄະນິດສາດ ແລະ ພາສາອັງກິດ. ສຳລັບນັກສຶກສາຮຽນເກັ່ງ ວິທະຍາໄລຄູ ສະຫວັນນະເຂດ ໄດ້ມີນະໂຍບາຍ ຊອກຫາແຫຼ່ງທຶນການສຶກສາຊ່ວຍ. ກິດຈະກຳທີ່ພົ້ນເດັ່ນໄປກວ່ານັ້ນ, ໄດ້ຈັດຕັ້ງເຝິກສອນຕາມກຸ່ມລາຍວິຊາ: ກຸ່ມວິຊາພາສາລາວ, ພູມສາດ, ປະຫວັດສາດ, ພາສາອັງກິດ, ຄະນິດສາດ, ເຄມີສາດ, ຟີຊິກສາດ ແລະ ຊີວະສາດ. ເພື່ອສ້າງຄູໃຫ້ມີທັງຄຸນນະພາບ ແລະ ປະລິມານພຽງພໍ, ແທດເໝາະກັບການພັດທະນາເສດຖະກິດສັງຄົມ ວິທະຍາໄລຄູ ສະຫວັນນະເຂດ ຍັງໄດ້ຈັດເຝິກອົບຮົມວິຊາຊີບເສີມໃຫ້ແກ່ນັກສຶກສາເຊັ່ນ: ເສີມສວຍ, ຕັດຜົມ, ຕັດຫຍິບ, ປຸງແຕ່ງອາຫານ, ກ້າເບ້ຍໄມ້, ຊ່າງໄມ້, ປູກຝັງ ແລະ ລ້ຽງສັດ.

ຄຽງຄູ່ກັບວຽກສົ່ງເສີມວິຊາການແລ້ວ ນັກສຶກສາ ຍັງໄດ້ເຂົ້າຮ່ວມເຄື່ອນໄຫວວຽກງານກິດຈະກຳຕ່າງໆເຊັ່ນ: ຮັບຟັງການນິເທດລະບຽບທົ່ວໄປ, ລະບຽບຫ້ອງຮຽນ, ລະບຽບຫໍພັກ, ການໃຫ້ຄຳເປີກສາກ່ຽວກັບສຸຂະພາບຈະເລີນພັນ, ພະຍາດຍິງ, ພະຍາດຕິດຕໍ່ທາງເພດສຳພັນ, ການຈາລະຈອນທາງບົກ, ການຕ້ານປະກົດການຫຍໍ້ທໍ້ທີ່ເກີດຂຶ້ນໃນສັງຄົມ ແລະ ການພົວພັນສິ່ງເສບຕິດ. ພິເສດຍັງໄດ້ເຂົ້າຮ່ວມຮັບຟັງການເລົ່າຄືນມູນເຊື້ອໃນວັນສຳຄັນຕ່າງໆ ຂອງຊາດ ແລະ ສາກົນເຊັ່ນ: ວັນຊາດ ວັນທີ 2 ທັນວາ, ວັນທີ 7 ຕຸລາ ວັນຄູແຫ່ງຊາດ, ວັນກອງທັບ (ວັນທີ 20 ມັງກອນ), ວັນສ້າງຕັ້ງສະຫະພັນແມ່ຍິງລາວ, ວັນຄ້າຍວັນເກີດປະທານໄກສອນພົມວິຫານ, ປະທານສຸພານຸວົງ, ວັນແມ່ຍິງສາກົນ, ວັນທີ 1 ພຶດສະພາ (ວັນກຳມະກອນສາກົນ) ແລະ ວັນທີ 1 ມິຖຸນາ (ວັນເດັກນ້ອຍສາກົນ ແລະ ວັນປູກຕົ້ນໄມ້ແຫ່ງຊາດ). ການເຄື່ອນໄຫວກິດຈະກຳນອກຫຼັກສູດ ວຽກງານກິລາແຕ່ລະພາກຮຽນໄດ້ຈັດຕັ້ງແຂ່ງຂັນໃນຂັ້ນຫ້ອງຮຽນ, ຂັ້ນຫ້ອງການ ແລະ ຂັ້ນໂຮງຮຽນ. ພ້ອມກັນນັ້ນ ຍັງໄດ້ອອກເຄື່ອນໄຫວແຂ່ງຂັນກັບພາຍນອກໃນວັນສຳຄັນຕ່າງໆ ຂອງຊາດ ແລະ ສາກົນເຊັ່ນ: ວັນຊາດ, ວັນສ້າງຕັ້ງກອງທັບປະຊາຊົນ ປະຕິວັດລາວ ແລະ ວັນກຳມະກອນສາກົນ. ວຽກງານສິລະປະ ທຸກໆແລງວັນສຸກໄດ້ມີການຈັດກິດຈະກຳສະໂມສອນຊາວໜຸ່ມ ເພື່ອ ແຂ່ງຂັນຮ້ອງເພງ, ຂັບລຳທ້ອງຖິ່ນ, ຟ້ອນພື້ນເມືອງ, ຟ້ອນລຳວົງລາວ, ເຕັ້ນເພງລາວປະຍຸກ, ເຕັ້ນເພງສາກົນ ແລະ ລະຄອນປະເພດຕ່າງໆ ເຊິ່ງເປັນການອະນຸລັກວັດທະນະທຳອັນດີງາມຂອງທ້ອງຖິ່ນ ແລະ ຂອງຊາດ. ວຽກງານຂ່າວສານ ແຕ່ລະສາຍຮຽນໄດ້ມີການແຂ່ງຂັນຂຽນຂ່າວ, ປະກວດຫໍຂ່າວດີເດັ່ນ ແລະ ອອກຂ່າວທຸກໆ ຕອນເຊົ້າ ນັບແຕ່ວັນຈັນເຖິງວັນສຸກ. ການຈັດຕັ້ງປະຕິບັດກິດຈະກຳດັ່ງກ່າວ ໄດ້ມີຂໍ້ຕົກລົງແບ່ງປັນຄວາມຮັບຜິດຊອບ, ໜ້າທີ່, ພາລະບົດບາດ, ການຄຸ້ມຄອງ, ການຊີ້ນຳ ແລະ ຕິດຕາມຊຸກຍູ້ ຢ່າງເປັນລະບົບຈະແຈ້ງ ແລະ ຊັດເຈນໃນແຕ່ລະຂັ້ນຕອນ.

ນອກນັ້ນ, ຍັງໄດ້ປະຕິບັດນະໂຍບາຍຕໍ່ນັກສຶກສາດ້ວຍຫຼາຍຮູບການເຊັ່ນ: ການຍ້ອງຍໍ, ການດູແລເບິ່ງແຍງໃນເວລາເຈັບເປັນ, ໃຫ້ສະຫວັດດີການຕໍ່ຄອບຄົວນັກສຶກສາທີ່ເສຍຊີວິດ ແລະ ໃຫ້ເງິນອູດໜູນຄ່າຄອງຊີບຈຳນວນໜຶ່ງແກ່ຜູ້ຂາດເຂີນທາງດ້ານເສດຖະກິດ.

ອົງການຈັດຕັ້ງມະຫາຊົນ (ຊາວໜຸ່ມ, ແມ່ຍິງ ແລະ ກຳມະບານ) ໄດ້ເຮັດໜ້າທີ່ເປັນເສນາທິການໃຫ້ແກ່ການນຳຂອງສະຖາບັນໃນການເຝິກຝົນຫຼໍ່ຫຼອມຜູ້ຮຽນໃຫ້ມີຄວາມຮັບຜິດຊອບສູງຕໍ່ໜ້າທີ່ວຽກງານ. ນັກສຶກສາຜູ້ທີ່ມີຜົນງານດີເດັ່ນໃນການເຄື່ອນໄຫວວຽກງານນອກຫຼັກສູດ, ມີຄຸນສົມບັດດີ (ບໍ່ຖືກຕັດຄະແນນຄຸນສົມບັດ), ມີຄະແນນຜົນການຮຽນສະເລ່ຍໝົດປີບໍ່ຫຼຸດ 2.00 (ເກຣດ C) ໂດຍຜ່ານຂະບວນການເຄື່ອນໄຫວວຽກງານດັ່ງກ່າວຈຶ່ງຖືກພິຈາລະນາຮັບເຂົ້າເປັນສະມາຊິກອົງການຈັດຕັ້ງມະຫາຊົນ.

ນອກນັ້ນ ວິທະຍາໄລຄູ ສະຫວັນນະເຂດ ຍັງໄດ້ເຊີນອະດີດນັກສຶກສາອາວຸໂສທີ່ມີປະສົບປະການ ແລະ ມີຜົນສຳເລັດໃນໜ້າທີ່ວຽກງານ ມາປາຖະກະຖາໃນວັນສຳຄັນຕ່າງໆເຊັ່ນ: ວັນຊາດ, ວັນຄູແຫ່ງຊາດ, ວັນແມ່ຍິງສາກົນ ແລະ ວັນກຳມະກອນສາກົນ.

ວິທະຍາໄລຄູ ສະຫວັນນະເຂດໄດ້ມີການປະສານສົມທົບກັບເຂດບໍລິການທັງສອງແຂວງຄື: ແຂວງຄຳມ່ວນ ແລະ ສະຫວັນນະເຂດ ໃນການເກັບກຳຂໍ້ມູນການບັນຈຸເຂົ້າເປັນຄູໃນແຕ່ລະສົກຮຽນ.

## 2. ຈຸດດີ

ຂະບວນການຄັດເລືອກນັກສຶກສາໂດຍອີງໃສ່ຄຳສັ່ງແນະນຳຂອງກົມສ້າງຄູ ກະຊວງສຶກສາທິການ ແລະ ກິລາ ມີຜົນດີຍ້ອນວ່າມາດຕະຖານ ແລະ ເງື່ອນໄຂໄດ້ເປັນບ່ອນອີງ, ແນວທາງ, ມີຄວາມສະດວກໃນການຕັດສິນໃນການຈັດຕັ້ງປະຕິບັດ ແລະ ມີຄວາມເປັນເອກະພາບ. ຜົນດີຂອງການຮັບນັກສຶກສາຈາກຂະບວນການຄັດເລືອກຂອງແຂວງຕ່າງໆສົ່ງມາ ຊ່ວຍໃຫ້ໂອກາດແກ່ນັກສຶກສາຊົນເຜົ່າທີ່ຢູ່ຫ່າງໄກສອກຫຼີກ, ສົ່ງເສີມນັກຮຽນສາມັນຜູ້ທີ່ມີຜົນການຮຽນດີໄດ້ເຂົ້າຮຽນວິຊາຊີບຄູ.

ຜົນໄດ້ຮັບຈາກການຈັດຕັ້ງນັກສຶກສາເຂົ້າຮ່ວມກິດຈະກຳສົ່ງເສີມວິຊາການ ເຮັດໃຫ້ເຂົາເຈົ້າມີຄວາມຮູ້ກວ້າງຂວາງ, ສາມາດຮຽນຮູ້ ແລະ ແກ້ໄຂບັນຫາດ້ວຍຕົນເອງ, ອັດຕາການເສັງຜ່ານກວມເອົາເປີເຊັນສູງ, ອັດຕາການປະລະການຮຽນມີໜ້ອຍ, ມີຄວາມສາມາດໃນການສອນ, ມີທັກສະທີ່ດີໃນການຄຸ້ມຄອງຫ້ອງຮຽນ, ມີຫົວຄິດປະດິດສ້າງໃນການຜະລິດສື່ການສອນ, ສາມາດນຳໃຊ້ທັກສະຄອມພິວເຕີເຂົ້າໃນການສອນ ແລະ ຮູ້ວິທີເຮັດວຽກຮ່ວມກັບຄົນອື່ນ. ການຮຽນວິຊາຊີບເສີມ ສາມາດນຳໄປພັດທະນາເສດຖະກິດຄອບຄົວ ໃນເວລາໄປປະກອບອາຊີບຄູໃນແຕ່ລະທ້ອງຖິ່ນ.

ຜົນປະໂຫຍດຈາກການຈັດຕັ້ງນັກສຶກສາເຂົ້າຮ່ວມກິດຈະກຳຕ່າງໆ ທີ່ປິ່ນອ້ອມວຽກງານວິຊາການ ໄດ້ເຮັດໃຫ້ພວກເຂົາເຈົ້າໄດ້ມີສຸຂະພາບແຂງແຮງ, ມີແບບແຜນດຳລົງຊີວິດທີ່ດີ, ສາມັກຄີກັບໝູ່ເພື່ອນ, ໄດ້ເຝິກທັກສະ, ມີຄວາມອົດທົນຕໍ່ອຸປະສັກ, ປະພຶດຕົນຢ່າງເໝາະສົມໃນການເຂົ້າຮ່ວມສັງຄົມ, ເຫັນໄດ້ເຖິງບຸກຄົນດີເດັ່ນ, ມີແນວຄິດເອື້ອເຟື້ອເພື່ອແຜ່ຊ່ວຍເຫຼືອໝູ່ຄູ່ໃນການຮຽນ ແລະ ຂະຫຍັນໝັ່ນພຽນຕໍ່ການອອກແຮງງານ. ນອກຈາກນັ້ນ ຍັງເປັນການສົ່ງເສີມບຸກຄົນທີ່ມີພອນສະຫວັນ, ອະນຸລັກຮັກສາວັດທະນະທຳອັນດີງາມຂອງບັນດາເຜົ່າ ແລະ ຊາດ. ສຳຄັນໄປກວ່ານັ້ນ ຍັງສາມາດຕ້ານທຸກປະກົດການຫຍໍ້ທໍ້ໃນກຸ່ມນັກສຶກສາເຊັ່ນ: ການຂີ້ລັກ, ການພະນັນ, ພົວພັນສິ່ງເສບຕິດ, ການຫຼິ້ນກິນຟຸມເຟືອຍ.

ຄຽງຄູ່ກັບການຈັດຕັ້ງນັກສຶກສາເຂົ້າຮ່ວມກິດຈະກຳສົ່ງເສີມວິຊາການ ແລະ ກິດຈະກຳອື່ນໆແລ້ວ ອົງການຈັດຕັ້ງມະຫາຊົນ ຍັງເປັນຄູ່ຮ່ວມງານກໍ່ສ້າງນັກສຶກສາຄູໃຫ້ມີແນວຄິດຄຸນສົມບັດ, ເຊື່ອໝັ້ນຕໍ່ແນວທາງຂອງພັກ, ນັບຖືສາຍໄຍການຈັດຕັ້ງ, ເຄັ່ງຄັດໃນການປະຕິບັດລະບຽບ, ເຄົາລົບເພື່ອນຮ່ວມງານ, ຮູ້ໃຫ້ກຽດຄົນອື່ນ, ມີຄວາມມານະອົດທົນ, ພາກພຽນ, ມີຄວາມຮັບຜິດຊອບຕໍ່ໜ້າທີ່ວຽກງານ, ມີຄວາມສະດຸ້ງໄວ ແລະ

ເອົາໃຈໃສ່ພັດທະນາຕົນເອງຢູ່ສະເໝີ ປະກອບສ່ວນພັດທະນາເສດຖະກິດສັງຄົມໃຫ້ນັບມື້ນັບສູງຂຶ້ນ ເຊິ່ງສະແດງໃຫ້ເຫັນໃນຜົນງານທີ່ເຮັດໄດ້ບາງດ້ານໃນໄລຍະຜ່ານມາເຊັ່ນ: ບໍລິຈາກເລືອດໃຫ້ແກ່ອົງການກາແດງແຂວງສະຫວັນນະເຂດ ໄດ້ທັງໝົດ 317 ຖົງ, ປະກອບສ່ວນອານາໄມອະນຸສອນສະຖານ ໄກສອນພົມວິຫານອາທິດລະສອງຄັ້ງ, ປົວແປງເສັ້ນທາງທີ່ເປ່ເພພາຍໃນເທດສະບານເມືອງໄກສອນພົມວິຫານໄດ້ 3 ຄັ້ງ, ອານາໄມຕາມສອງຂ້າງທາງເລກ 9 ໃນວັນສຳຄັນຕ່າງໆ.

ວິທະຍາໄລຄູ ສະຫວັນນະເຂດ ໄດ້ເຊີນອະດີດນັກສຶກສາອາວຸໂສທີ່ມີປະສົບປະການ ແລະ ມີຜົນສຳເລັດໃນໜ້າທີ່ວຽກງານ ມາປາຖະກະຖາໃນວັນສຳຄັນຕ່າງໆ ເຮັດໃຫ້ພະນັກງານ, ຄູອາຈານ ແລະ ນັກສຶກສາໄດ້ຮຽນຮູ້ເອົາປະສົບປະການ, ປູກຈິດສຳນຶກໃຫ້ຮັກສະຖາບັນຂອງຕົນ, ມີຄວາມນັບຖືຄູ-ອາຈານ ແລະ ສ້າງແຮງບັນດານໃຈໃນການປະຕິບັດໜ້າທີ່ວຽກງານ. ນອກຈາກທີ່ກ່າວມາຂ້າງເທິງນັ້ນ ບັນດາສິດເກົ່າທີ່ເປັນຜູ້ບໍລິຫານ ແລະ ຄູສອນ ໃນໂຮງຮຽນສາມັນ, ຫ້ອງການສຶກສາທິການ ແລະ ກິລາເມືອງ, ພະແນກສຶກສາທິການ ແລະ ກິລາ ແຂວງຄຳມ່ວນ ແລະ ສະຫວັນນະເຂດ ຍັງເປັນຜູ້ປະກອບສ່ວນໃນການພັດທະນາ, ປະສານງານກ່ຽວກັບສະຖານທີ່ລົງເຝິກປະສົບປະການ ແລະ ເຝິກຫັດວິຊາຊີບໃຫ້ນັກສຶກສາຂອງວິທະຍາໄລຄູ ສະຫວັນນະເຂດ.

ວຄສ ໄດ້ເຊີນອະດີດນັກສຶກສາທີ່ເປັນການນຳມາໂອ້ລົມ, ແລກປ່ຽນປະສົບການກັບບັນດາຄູອາຈານ ແລະ ນັກຮຽນໃນວັນສຳຄັນຕ່າງໆ, ໄດ້ສ້າງກິດຈະກຳແຂ່ງຂັນກິລາກັບພາກສ່ວນອະດີດນັກສຶກສາພາຍໃນແຂວງ ແລະ ຕ່າງແຂວງ, ໄດ້ປະສານງານກັບຜູ້ປະກອບການຕ່າງໆ ເພື່ອລະດົມທຶນຊ່ວຍເຫຼືອນັກສຶກສາຜູ້ຮຽນເກັ່ງ, ດ້ອຍໂອກາດ ເຊັ່ນ: ບໍລິສັດເບຍລາວ, ທະນາຄານຮ່ວມພັດທະນາ (JDB), ໄດ້ມອບໝາຍການເຄື່ອນໄຫວວຽກງານໃຫ້ແຕ່ລະອົງການຈັດຕັ້ງມະຫາຊົນ ເຊັ່ນ: ກິດຈະກຳຊາວໜຸ່ມ(ອະນາໄມອະນຸສອນສະຖານ, ວຽກງານກິລາກາຍະກຳ, ສິລະປະ), ແມ່ຍິງ ຮັບຜິດຊອບວັດທະນະທຳ, ປະດັບປະດາ, ກຳມະບານ ຮັບຜິດຊອບການປົກປ້ອງສິດຜົນປະໂຫຍດອັນຊອບທຳຂອງຊາວຜູ້ອອກແຮງງານ.

## 3. ຂໍ້ຄົງຄ້າງ ແລະ ສາເຫດ

- ການເຄື່ອນໄຫວກິດຈະກຳຕ່າງໆຮ່ວມກັບອະດີດນັກສຶກສາຍັງບໍ່ທັນເນັ້ນໃສ່ວຽກງານວິຊາການ
- ສ່ວນໃຫຍ່ກິດຈະກຳຕ່າງໆຍັງຂາດການເກັບກຳຫຼັກຖານ

## 4. ຂໍ້ແນະນຳຂອງຄະນະປະເມີນພາຍນອກ

- ຄວນມີການຮ່ວມມືກັບອະດີດນັກສຶກສາໃນຮູບແບບຕ່າງໆ ແລະ ໄດ້ຈັດຕັ້ງປະຕິບັດໃຫ້ເປັນປົກກະຕິ
- ຄວນເອົາໃຈໃສ່ໃນການຮ່ວມມືກັບເຄືອຂ່າຍຜູ້ປະກອບການ ເພື່ອຊ່ວຍນັກສຶກສາໃນຕໍ່ໜ້າ
- ຄວນຊຸກຍູ້ໃຫ້ອົງການຈັດຕັ້ງມະຫາຊົນ ໄດ້ເຄື່ອນໄຫວຕາມພາລະບົດບາດຂອງຕົນຢ່າງເຕັມສ່ວນ

## 5. ທິດທາງໃນການປັບປຸງ

- ສ້າງແຜນການຮ່ວມມືກັບອະດີດນັກສຶກສາເພື່ອພົບປະ, ແລກປ່ຽນບົດຮຽນ, ສ້າງກິດຈະກຳກິລາ-ສິລະປະ ແລະ ຊ່ວຍເຫຼືອສັງຄົມ
- ແຕ່ງຕັ້ງຄະນະຮັບຜິດຊອບປະສານງານກັບຜູ້ປະກອບການຕ່າງໆ ເພື່ອລະດົມທຶນຊ່ວຍເຫຼືອນັກສຶກສາຜູ້ຮຽນເກັ່ງ, ດ້ອຍໂອກາດ
- ອອກມະຕິຕົກລົງຂອງເລຂາພັກຮາກຖານໃນການມອບໝາຍການເຄື່ອນໄຫວວຽກງານ ໃຫ້ແຕ່ລະອົງການຈັດຕັ້ງມະຫາຊົນ.

## ມາດຕະຖານທີ VII: ສະພາບແວດລ້ອມ ແລະ ແຫຼ່ງຮຽນຮູ້

## 1. ການຈັດຕັ້ງປະຕິບັດ

ວິທະຍາໄລຄູ ສະຫວັນນະເຂດ ໄດ້ເອົາໃຈໃສ່ຕໍ່ການສະໜອງ ແລະ ພັດທະນາສິ່ງທີ່ເອື້ອອໍານວຍຕໍ່ການຈັດການຮຽນ-ການສອນຢ່າງພຽງພໍ ສະແດງອອກໃນດ້ານຕ່າງໆດັ່ງນີ້: ດ້ານສະພາບແວດລ້ອມ: ມີເນື້ອທີ່ກວ້າງຂວາງທີ່ປົກຄຸມດ້ວຍຕົ້ນໄມ້ສີຂຽວ ແລະ ພືດນາໆພັນ ເຊິ່ງແບ່ງເປັນເຂດອະນຸລັກ ແລະ ເຂດພັດທະນາ, ເປັນທັງສະຖານທີ່ຮຽນຮູ້ນອກຫ້ອງຮຽນ ແລະ ສະຖານທີ່ພັກຜ່ອນຂອງນັກສຶກສາ. ດ້ານສິ່ງອໍານວຍຄວາມສະດວກ: ມີຫ້ອງການສໍາລັບພະນັກງານ, ຄູ-ອາຈານ, ອາຄານພຽງພໍ, ຫ້ອງຮຽນ, ຫ້ອງຝຶກສອນທີ່ຕິດຕັ້ງກະດານແມ່ເຫຼັກ, ຫ້ອງປະຊຸມ, ສະໂມສອນທີ່ສະອາດມີໂຕະ-ຕັ່ງພ້ອມຕິດຕັ້ງລະບົບເຄື່ອງສຽງ, ບາງຫ້ອງຮຽນມີເຄື່ອງສາຍ LCD, ສາມາດນໍາໃຊ້ອິນເຕີເນັດລະບົບ Wifi ໄດ້, ມີຫ້ອງໃຫ້ຄໍາເປິກສາກ່ຽວກັບສຸຂະພາບແກ່ນັກສຶກສາ, ໃນແຕ່ລະອາຄານທີ່ກ່າວມານັ້ນ ມີການຈັດການລະບົບໄຟຟ້າ ແລະ ນໍ້າປະປາຢ່າງເປັນລະບົບ ໂດຍມີພະນັກງານຮັບຜິດຊອບ ເຊິ່ງຢູ່ພາຍໃຕ້ການຄຸ້ມຄອງຂອງຫ້ອງການບໍລິຫານ. ດ້ານແຫຼ່ງການຮຽນຮູ້: ໄດ້ມີການຈັດການຮຽນ-ການສອນ ໂດຍນໍາໃຊ້ຫ້ອງທົດລອງເຄມີສາດ, ຟີຊິກສາດ, ຊີວະສາດ, ພູມສາດ ແລະ ຫ້ອງຟັງສຽງ ເຊິ່ງປະກອບດ້ວຍທາດເຄມີ, ອຸປະກອນ, ເຄື່ອງມື, ກ້ອງສ່ອງດາວ, ຄອມພິວເຕີ, ໂທລະພາບ ແລະ ສື່ການສອນອື່ນໆທີ່ກະຊວງສຶກສາທິການ ແລະ ກິລາສະໜອງໃຫ້, ນອກຈາກນັ້ນ ຍັງມີຫ້ອງສະໝຸດທີ່ມີເອກະສານ, ຕໍາລາຮຽນ ທີ່ເປັນພາສາລາວ ແລະ ພາສາຕ່າງປະເທດ ເຊິ່ງແຫຼ່ງການຮຽນຮູ້ດັ່ງກ່າວ ໄດ້ມີການປັບປຸງຢ່າງຕໍ່ເນື່ອງ ໂດຍປະຈຸບັນມີອິນເຕີເນັດລະບົບ Wifi ເຊິ່ງສາມາດຄົ້ນຫາຊື່ປຶ້ມຜ່ານເວັບໄຊຂອງສະຖາບັນ ແລະ ຂໍ້ມູນອື່ນໆທາງອິນເຕີເນັດໄດ້, ວິທະຍາໄລຄູ ສະຫວັນນະເຂດ ຍັງມີເວບໄຊຂອງຕົນເອງທີ່ສາມາດເຂົ້າເຖິງຂໍ້ມູນຂ່າວສານ, ວາລະສານວິຊາການ ແລະ ບົດຄົ້ນຄວ້າວິໄຈແບບອອນລາຍໄດ້. ແຫຼ່ງການຮຽນຮູ້ທີ່ກ່າວມານັ້ນ ມີການຈັດການ, ຄຸ້ມຄອງ ແລະ ບໍລິຫານພາຍໃຕ້ຄວາມຮັບຜິດຊອບຂອງຫ້ອງການບໍລິຫານ, ຫ້ອງການວັດຜົນ-ປະເມີນຜົນ, ຫ້ອງການວິທະຍາສາດທໍາມະຊາດ, ຫ້ອງການພາສາຕ່າງປະເທດ ແລະ ຫ້ອງການວິທະຍາສາດສັງຄົມ ເຊິ່ງມີພະນັກງານຮັບຜິດຊອບສະເພາະ. ດ້ານລະບົບສຸຂະອະນາໄມ ແລະ ຄວາມປອດໄພ: ມີຫ້ອງນໍ້າທີ່ພຽງພໍກັບຈໍານວນນັກສຶກສາ, ພະນັກງານ, ຄູ-ອາຈານ ເຊິ່ງແຈກຢາຍຢູ່ຕາມອາຄານຮຽນ ແລະ ຫໍພັກ ໂດຍມີການຈັດຕັ້ງກຸ່ມນັກສຶກສາໃຫ້ມີການອະນາໄມຫ້ອງນໍ້າ, ຫ້ອງຮຽນ, ຫໍພັກ, ຈັດເກັບຂີ້ເຫຍື້ອເປັນປົກກະຕິ ແລະ ມີຮ້ານອາຫານທີ່ບໍລິການໃຫ້ແກ່ນັກສຶກສາ, ພະນັກງານ, ຄູ-ອາຈານ. ດ້ານການປ້ອງກັນຄວາມສະຫງົບພາຍໃນ: ມີລະບົບການຈັດຕັ້ງຂອງຄະນະປ້ອງກັນໂດຍພາຍໃຕ້ການຊີ້ນໍາຂອງຜູ້ອໍານວຍການ ເຊິ່ງໂຄງສ້າງໜ່ວຍງານດັ່ງກ່າວປະກອບດ້ວຍ ພະນັກງານ, ຄູ-ອາຈານ ແລະ ນັກສຶກສາ. ນອກນັ້ນ, ຍັງໄດ້ສົມທົບກັບ ປກສ ບ້ານ, ເມືອງ ແລະ ແຂວງ ກ່ຽວກັບວຽກງານປ້ອງກັນ ແລະ ຮັກສາຄວາມສະຫງົບພາຍໃນ ຕະຫຼອດ 24 ຊົ່ວໂມງ.

## 2. ຈຸດດີ

ເນື່ອງຈາກມີເນື້ອທີ່ກວ້າງໃຫຍ່ ແລະ ສະພາບແວດລ້ອມທີ່ອຸດົມສົມບູນດ້ວຍຕົ້ນໄມ້ ແລະ ພືດພັນ ເຮັດໃຫ້ມີສະພາບອາກາດດີ, ນັກສຶກສາສາມາດຮຽນຮູ້ຄວາມຫຼາກຫຼາຍຂອງສິ່ງທີ່ມີຊີວິດພາຍໃນເຂດປ່າຂອງວິທະຍາໄລ ໂດຍບໍ່ຈໍາເປັນອອກນອກສະຖານທີ່, ສິ່ງເອື້ອອໍານວຍຄວາມສະດວກ ເຮັດໃຫ້ຄູອາຈານສະດວກສະບາຍໃນການຈັດການຮຽນ-ການສອນແບບເອົານັກຮຽນເປັນໃຈກາງ ແລະ ນັກສຶກສາກໍ່ສາມາດຮຽນຮູ້ໄດ້ຢ່າງມີປະສິດຕິພາບ ໂດຍຜ່ານການທົດລອງຕົວຈິງທັງໃນ ແລະ ນອກຫ້ອງທົດລອງ, ຮຽນຮູ້ຜ່ານອຸປະກອນ ຫຼື

ເຄື່ອງມືທີ່ທັນສະໄໝ, ທຸກຄົນສາມາດນຳໃຊ້ຄອມພິວເຕີຂັ້ນພື້ນຖານ, ສາມາດເຂົ້າເຖິງແຫຼ່ງຂໍ້ມູນຂ່າວສານຜ່ານລະບົບອິນເຕີເນັດເຊັ່ນ: ສາມາດຕິດຕາມຂ່າວສານ, ແຈ້ງການ, ຕາຕະລາງຮຽນ, ຄະແນນ ແລະ ບົດວິໃຈໄດ້ງ່າຍ ແລະ ວ່ອງໄວ. ນັກສຶກສາສາມາດເຄື່ອນໄຫວກິດຈະກຳນອກຫຼັກສູດເຊັ່ນ: ການສະແດງສິນລະປະ-ວັນນະຄະດີ ແລະ ຫຼິ້ນກິລາໄດ້ສະດວກສະບາຍ ເນື່ອງຈາກ ມີສະໂມສອນ ແລະ ເດີ່ນເຝິກແອບກິລາພຽງພໍ, ນັກສຶກສາສາມາດເຂົ້າເຖິງການບໍລິການໃຫ້ຄຳເປີກສາດ້ານສຸຂະພາບ, ໄດ້ຮັບການຊ່ວຍເຫຼືອທ່ວງທັນເມື່ອເກີດການເຈັບເປັນ, ຍ້ອນມີການຈັດການລະບົບສຸຂະອະນາໄມທີ່ດີເຊັ່ນ: ມີການຈັດຕັ້ງການອານາໄມອາຄານ, ສະຖານທີ່, ຫ້ອງນ້ຳ ແລະ ສິ່ງແວດລ້ອມອ້ອມຂ້າງໃຫ້ສະອາດຈົບງາມເປັນປະຈຳ ຈຶ່ງເຮັດໃຫ້ນັກສຶກສາ, ພະນັກງານ, ຄູ-ອາຈານທຸກຄົນ ມີສຸຂະພາບແຂງແຮງ. ຜ່ານມາວິທະຍາໄລຄູ ສະຫວັນນະເຂດ ສາມາດຍາດໄດ້ທຸງໄຊນຳໜ້າດ້ານການປົກປັກຮັກສາສິ່ງແວດລ້ອມຂອງວິທະຍາໄລຄູທົ່ວປະເທດ, ເຫັນໄດ້ວ່າ ສະພາບແວດລ້ອມ ແລະ ແຫຼ່ງການຮຽນຮູ້ທີ່ກ່າວມານັ້ນ ແມ່ນເອື້ອອຳນວຍໃຫ້ແກ່ການຈັດການຮຽນ-ການສອນຕາມ 5 ຫຼັກມູນການສຶກສາແຫ່ງຊາດໄດ້. ຍ້ອນມີບຸກຄົນຮັບຜິດຊອບໃນແຕ່ລະໜ້າວຽກ ຫຼື ແຕ່ລະສິ່ງອຳນວຍຄວາມສະດວກ ຈຶ່ງເຮັດໃຫ້ການປັບປຸງ ແລະ ພັດທະນາ ເປັນໄປຢ່າງຕໍ່ເນື່ອງ ຮັບປະກັບໃຫ້ສະພາບແວດລ້ອມ ແລະ ແຫຼ່ງການຮຽນຮູ້ມີຄວາມຄົງທົນ, ຍືນຍົງ ແລະ ສະໜັບສະໜູນຂະບວນການຮຽນ-ການສອນໃຫ້ມີຄຸນນະພາບ ແລະ ຍືນຍົງຕະຫຼອດໄປ.

ໃນສົກປີ 2017-2018 ວຄສ ໄດ້ຕິດຕັ້ງອຸປະກອນປ້ອງກັນອັກຄີໄພເພີ່ມໃນບ່ອນທີ່ຍັງບໍ່ທັນມີ ແລະ ໄດ້ເຊີນພາກສ່ວນທີ່ກ່ຽວຂ້ອງມາເຝິກອົບຮົມວຽກງານປ້ອງກັນອັກຄີໄພ, ໄດ້ສ້ອມແປງອາຄານທີ່ເປ່ເພ, ໄດ້ແຕ່ງຕັ້ງຄະນະຮັບຜິດຊອບຕິດຕາມ-ກວດກາການຮັກສາອະນາໄມຕາມເດີ່ນ, ຕາມຫ້ອງນ້ຳ ແລະ ອາຄານຕ່າງໆ, ໄດ້ເຊີນແພດທີ່ມີປະສົບການມາເຝິກອົບຮົມວຽກງານປະຖົມພະຍາບານໃຫ້ນັກສຶກສາປີສຸດທ້າຍ.

### 3. ຂໍ້ຄົງຄ້າງ ແລະ ສາເຫດ

- ເດີ່ນກິລາຍັງບໍ່ທັນໄດ້ຮັບການປັບປຸງ
- ຍັງບໍ່ທັນໄດ້ມີຫ້ອງປະຖົມພະຍາບານສະເພາະ

### 4. ຂໍ້ແນະນຳຂອງຄະນະປະເມີນພາຍນອກ

- ປັບປຸງ ແລະ ຂະຫຍາຍເດີ່ນຫຼິ້ນກິລາໃຫ້ສາມາດປະຕິບັດ 5 ຫຼັກມູນການສຶກສາ
- ຄວນຈັດໃຫ້ມີຫ້ອງປະຖົມພະຍາບານເບື້ອງຕົ້ນຕາມຈຸດໃດໜຶ່ງທີ່ເໝາະສົມ
- ຄວນຕິດຕັ້ງອຸປະກອນປ້ອງກັນອັກຄີໄພໃຫ້ຫຼາຍຂຶ້ນ
- ຄວນປັບປຸງລະບົບການຮັກສາອະນາໄມ, ສ້າງສະຕິໃຫ້ທຸກຄົນມີສ່ວນຮ່ວມໃນການຮັກສາອະນາໄມ ແລະ ຍືນຍົງ
- ຄວນມີການບຳລຸງຮັກສາ ແລະ ສ້ອມແປງອາຄານຕ່າງໆນັບທັງຫ້ອງນ້ຳ ແລະ ບໍລິເວນເດີ່ນຢ່າງທົ່ວເຖິງ

### 5. ທິດທາງໃນການປັບປຸງ

- ປັວແປງເດີ່ນກິລາໃຫ້ຮາບພຽງດີກວ່າເກົ່າ
- ສ້າງຫ້ອງປະຖົມພະຍາບານສະເພາະ, ເຊີນແພດທີ່ມີປະສົບການມາເຝິກອົບຮົມວຽກງານປະຖົມ ພະຍາບານໃຫ້ພະນັກງານທີ່ຮັບຜິດຊອບ
- ຕິດຕັ້ງອຸປະກອນປ້ອງກັນອັກຄີໄພເພີ່ມໃນບ່ອນທີ່ຍັງບໍ່ທັນມີ, ເຊີນພາກສ່ວນທີ່ກ່ຽວຂ້ອງມາເຝິກ ອົບຮົມວຽກງານປ້ອງກັນອັກຄີໄພ

- ຂຶ້ນແຜນສ້ອມແປງອາຄານທີ່ເປ່ເພ, ແຕ່ງຕັ້ງຄະນະຮັບຜິດຊອບຕິດຕາມ-ກວດກາການຮັກສາອະນາ ໄມຕາມເດີ່ນ, ຕາມຫ້ອງນ້ຳ ແລະ ອາຄານຕ່າງໆ

## ມາດຕະຖານທີ VIII: ລະບົບຂໍ້ມູນຂ່າວສານ

### 1. ການຈັດຕັ້ງປະຕິບັດ

ວິທະຍາໄລຄູ ສະຫວັນນະເຂດໄດ້ເຂົ້າຮ່ວມກອງປະຊຸມເຜີຍແຜ່ການນຳໃຊ້ລະບົບຖານຂໍ້ມູນ TEMIS ແລະ ການພັດທະນາເວັບໄຊຂອງແຕ່ລະວິທະຍາໄລຄູທີ່ກົມສ້າງຄູໄດ້ສ້າງ ແລະ ຈັດຂຶ້ນທີ່ທ່າລາດ ແຂວງ ວຽງຈັນ ໃນປີ 2008. ພາຍຫຼັງທີ່ໄດ້ເຂົ້າຮ່ວມກອງປະຊຸມກໍໄດ້ລາຍງານຕໍ່ຜູ້ອານວຍການພ້ອມອອກຂໍ້ຕົກລົງແຕ່ງຕັ້ງຄະນະຮັບຜິດຊອບ ຈັດຕັ້ງປະຕິບັດໂດຍຫ້ອງການວັດຜົນປະເມີນຜົນເປັນເຈົ້າການ ໃນການຂຶ້ນແຜນງົບປະມານ, ການຈັດຊື້ອຸປະກອນ, ການຕິດຕັ້ງ, ຈັດເຝິກອົບຮົມ ແລະ ພັດທະນາລະບົບຂໍ້ມູນ, ຖານຂໍ້ມູນ ແລະ ເວັບໄຊຂອງສະຖາບັນ. ຫຼັງຈາກນັ້ນ ກໍໄດ້ມີການພັດທະນາລະບົບຖານຂໍ້ມູນບາງສ່ວນໃຫ້ແທດເໝາະກັບການນຳໃຊ້ຕົວຈິງ ແລະ ບັນດາໂປຣແກຣມຕ່າງໆເປັນແຕ່ລະໄລຍະນັບແຕ່ປີ 2010 ເປັນຕົ້ນມາເຊັ່ນ: ປັບປຸງຂໍ້ມູນໃນຖານທີ່ຍັງບໍ່ຄົບຖ້ວນເຊັ່ນ: ຊື່ບ້ານ, ຊື່ໂຮງຮຽນໃນສາຍສາມັນ, ປັບປຸງໜ້າຕ່າງໂປຣແກຣມປ້ອນ ໃຫ້ນຳໃຊ້ສະດວກ ແລະ ວ່ອງໄວຂຶ້ນ, ປັບປຸງລາຍງານທາງດ້ານສະຖິຕິໃຫ້ຫຼາຍຮູບແບບ ໂດຍອີງຕາມຮ່າງລາຍງານຈາກຂັ້ນເທິງ, ພັດທະນາໂປຣແກຣມລົງທະບຽນນັກສຶກສາ ຜ່ານລະບົບ Barcode, ອອກໃບຄະແນນ ແລະ ປະກາສະນີຍະບັດ, ຈັດຕາຕະລາງການຮຽນ-ການສອນ, ຮ່າງຕິດຕາມການຮຽນຂອງນັກສຶກສາ, ຮ່າງໃຫ້ຄະແນນ,ປ້ອນຄະແນນ, ເບິ່ງຄະແນນ, ຄຸ້ມຄອງນັກສຶກສານອນໃນຫໍພັກ, ນັກສຶກສາເຝິກຫັດວິຊາຊີບ, ຄຸ້ມຄອງພະນັກງານ ຄູ-ອາຈານ, ຄຸ້ມຄອງຫ້ອງສະໝຸດ, ຄຸ້ມຄອງເອກະສານ ຂາເຂົ້າ-ຂາອອກ ແບບ E-File, ລະບົບຂຽນຂ່າວລົງເວັບໄຊສະຖາບັນ ເຊິ່ງຄູ-ອາຈານສາມາດດາວໂຫຼດໄປນຳໃຊ້ໄດ້ ແລະ ນັກສຶກສາສາມາດເບິ່ງຄະແນນຜ່ານເວັບໄຊໄດ້ ເພື່ອຄວາມສະດວກສະບາຍຕໍ່ບັນດາຄູ-ອາຈານ ແລະ ນັກສຶກສາ.

ນອກຈາກນັ້ນ, ໃນເດືອນ 8 ປີ 2015 ສະຖາບັນໄດ້ເຂົ້າຮ່ວມກອງປະຊຸມ ທົບທວນປັບປຸງລະບົບຖານຂໍ້ມູນ TEMIS ທີ່ກົມສ້າງຄູສ້າງຄູໄດ້ສ້າງຂຶ້ນ ແລະ ເຜີຍແຜ່ການນຳໃຊ້ລະບົບຖານຂໍ້ມູນຊັບສິນທີ່ກົມການເງິນສ້າງຂຶ້ນ ທີ່ທ່າລາດ ແຂວງ ວຽງຈັນແລ້ວ, ສະຖາບັນກໍໄດ້ຜັນຂະຫຍາຍ, ປັບປຸງ, ພັດທະນາໂປຣແກຣມຄຸ້ມຄອງວັດສະດຸນຳໃຊ້ພາຍໃນສະຖາບັນ ໂດຍອີງຕາມລະບົບທີ່ກົມການເງິນສ້າງຂຶ້ນເຊັ່ນ: ເຂົ້າລະຫັດບັນຊີພາຫະນະ, ເຄື່ອງໃຊ້ໄຟຟ້າ, ອຸປະກອນ/ສື່ການຮຽນ-ການສອນ, ໂຕະ, ຕັ່ງ, ກະດານ ແລະ ອື່ນໆ ຄຽງຄູ່ກັນນັ້ນກໍຍັງໄດ້ພັດທະນາ/ປັບປຸງຂໍ້ມູນຂ່າວສານເທິງເວັບໄຊຂອງສະຖາບັນໃຫ້ມີຄວາມທັນສະໄໝ ແລະ ມີຄວາມວ່ອງໄວໃນການເຂົ້າເຖິງຈົນເຖິງປັດຈຸບັນ. ໃນແຕ່ລະສົກຮຽນ ສະຖາບັນໄດ້ນຳໃຊ້ງົບປະມານລວມໃນການປັບປຸງ, ຂະຫຍາຍລະບົບເຄືອຂ່າຍອິນເຕີເນັດໃຫ້ມີຄວາມໄວສູງຂຶ້ນ ເພື່ອແຈກຢາຍທົ່ວທຸກຫ້ອງການ ທົ່ວສະຖາບັນ ໃຫ້ແກ່ບັນດາຄູ-ອາຈານ ແລະ ນັກສຶກສາໄດ້ນຳໃຊ້ ເຊິ່ງເປັນເງື່ອນໄຂອຳນວຍຄວາມສະດວກໃຫ້ແກ່ການສຶກສາ, ຄົ້ນຄວ້າ, ຮໍ່າຮຽນ. ພ້ອມກັນນັ້ນ ຄະນະຮັບຜິດຊອບກໍຍັງໄດ້ຂຶ້ນແຜນຈັດກອງປະຊຸມເຝິກອົບຮົມໃຫ້ບັນດາພະນັກງານ, ຄູ-ອາຈານແຕ່ລະຫ້ອງການໃນການບໍລິຫານ, ຄຸ້ມຄອງ ແລະ ນຳໃຊ້ລະບົບຂໍ້ມູນ, ຖານຂໍ້ມູນ ແລະ ເວັບໄຊຂອງສະຖາບັນໃນແຕ່ລະສົກຮຽນອີກດ້ວຍເຊັ່ນ: ຈັດກອງປະຊຸມເຝິກອົບຮົມການປ້ອນຂໍ້ມູນ

ໃຫ້ຄູອາຈານທີ່ຮັບຜິດຊອບວຽກງານດັ່ງກ່າວໃນແຕ່ລະຫ້ອງການ, ເຝິກອົບຮົມໃຫ້ເລຂາຂອງແຕ່ລະຫ້ອງການໃນການສົ່ງເອກະສານຂາເຂົ້າ-ຂາອອກຜ່ານທາງເວັບໄຊຂອງສະຖາບັນ, ເຝິກອົບຮົມການລົງຂ່າວຂອງແຕ່ລະຫ້ອງການເທິງເວັບໄຊຂອງສະຖາບັນ.

## 2. ຈຸດດີ

ບັນດາຖານຂໍ້ມູນ ແລະ ໂປຣແກຣມຕ່າງໆ ທີ່ທາງສະຖາບັນໄດ້ນໍາໃຊ້ ແລະ ພັດທະນາຂຶ້ນມານີ້ ໄດ້ອໍານວຍຄວາມສະດວກໃນການຄຸ້ມຄອງ-ບໍລິຫານ, ຕິດຕາມຂໍ້ມູນ, ລາຍງານສະຖິຕິໃຫ້ຂັ້ນເທິງ ເຊິ່ງສາມາດເບິ່ງຜ່ານເວັບໄຊຂອງໂຮງຮຽນໄດ້ແລະ ຍັງສໍາຮອງໄວ້ໃນແຟ້ມ,Electronic File ເຊັ່ນ: ຄອມພິວເຕີ, Hard disk, CD/DVD ແລະ ສາມາດກູ້ຄືນໄດ້ໃນກໍລະນີສຸກເສີນ ເປັນຕົ້ນ: ຂໍ້ມູນກ່ຽວກັບນັກສຶກສາປະກອບມີ: ຂໍ້ມູນສ່ວນຕົວ, ຂໍ້ມູນການຮຽນ, ອັດຕາການປະລະ, ຈໍານວນຜູ້ທີ່ສໍາເລັດການສຶກສາ ແລະ ຄະແນນການຮຽນໃນແຕ່ລະສົກຮຽນ.ຂໍ້ມູນຄູ-ອາຈານປະກອບມີ: ປະຫວັດສ່ວນຕົວ, ຫ້ອງການສັງກັດ, ຂໍ້ມູນທາງດ້ານການສຶກສາ, ວັນເດືອນປີເຂົ້າອົງການຈັດຕັ້ງ ແລະ ອື່ນໆ.

ໂປຣແກຣມຫ້ອງສະໝຸດນໍາໃຊ້ເພື່ອຄົ້ນຫາເອກະສານ, ຕໍາລາຮຽນ ຕາມຊື່ຫົວເລື່ອງ ຫຼື ເນື້ອໃນ ຜ່ານເວັບໄຊຂອງສະຖາບັນ, ຄູ-ອາຈານ ແລະ ນັກສຶກສາສາມາດຄົ້ນຫາປຶ້ມໃນຫໍສະໝຸດໄດ້ ເຊິ່ງມີຄວາມວ່ອງໄວ ແລະ ສະດວກກວ່າການເຂົ້າໄປຊອກຫາຢູ່ຫໍສະໝຸດໂດຍກົງ, ໂດຍລະບົບຈະລາຍງານຕໍາແໜ່ງຂອງປຶ້ມທີ່ຄົ້ນຫາ ນອກນັ້ນຍັງມີລະບົບຢືມ-ສົ່ງ ນໍາໃຊ້ເພື່ອບັນທຶກ, ຕິດຕາມ ແລະ ລາຍງານບັນຊີປຶ້ມທີ່ຖືກຢືມຈາກຫ້ອງສະໝຸດ.

ໂປຣແກຣມການຄຸ້ມຄອງເອກະສານຂາເຂົ້າ-ຂາອອກຂອງສະຖາບັນ ແບບ E-file ນໍາໃຊ້ໃນແຕ່ລະຫ້ອງການເພື່ອລົງແຈ້ງການ ຫຼື ຂໍ້ຕົກລົງຕ່າງໆ ເຊິ່ງສາມາດເຂົ້າດາວໂຫຼດຜ່ານເວັບໄຊສະຖາບັນໄດ້ ໂດຍເປັນການປະຢັດເວລາ ແລະ ບໍ່ຈໍາເປັນຕ້ອງໄປສົ່ງໃຫ້ແຕ່ລະຫ້ອງການ.

ໂປຣແກຣມລະບົບອອກປະກາສະນີຍະບັດ ແລະ ໃບຄະແນນນັກສຶກສາ ເພື່ອພິມປະກາສະນີຍະບັດ ແລະ ໃບຄະແນນໃຫ້ແກ່ນັກສຶກສາປີສຸດທ້າຍໃນແຕ່ລະສົກຮຽນ.

ໂປຣແກຣມລະບົບຂໍ້ມູນ ແລະ ຖານຂໍ້ມູນລາຍການຊັບສິນ ເຄື່ອງໃນສາງ ເພື່ອຄຸ້ມຄອງບັນຊີຊັບສິນທີ່ເປັນຂອງສະຖາບັນເຊັ່ນ: ພາຫະນະ, ເຄື່ອງໃຊ້ໄຟຟ້າຕ່າງໆ, ໂຕະຕັ່ງ ແລະ ອື່ນໆ ເຊິ່ງໄດ້ຖືກເກັບຮັກສາໄວ້ ແລະ ສາມາດຕິດຕາມໄດ້ງ່າຍ, ວ່ອງໄວ, ທັນກັບສະພາບການ ແລະ ມີຄວາມປອດໄພ.

ເວົ້າໄດ້ວ່າ ສະຖາບັນພວກເຮົາມີຄວາມເຂັ້ມແຂງທາງດ້ານວຽກງານລະບົບຖານຂໍ້ມູນ, ຂໍ້ມູນຂ່າວສານ ແລະ ເປັນທີ່ຍອມຮັບໃນສະຖາບັນສ້າງຄູທົ່ວປະເທດ ເຊິ່ງສະແດງອອກຢູ່ບ່ອນວ່າ: ໄດ້ຖືກເຊີນເປັນວິທະຍາກອນໃນກອງປະຊຸມປັບປຸງ ແລະ ພັດທະນາ ຖານຂໍ້ມູນລະບົບ TEMIS ທົ່ວປະເທດ 3 ຄັ້ງ ທີ່ ວຄ ດົງຄໍາຊ້າງ ໃນວັນທີ 10-14/2/2014 ແລະ ບ້ານພັກແຄມງື່ມ ແຂວງ ວຽງຈັນ ໃນວັນທີ 18-22/7/2016 ແລະ

ກອງປະຊຸມເຜີຍແຜ່ລະບົບ TEMIS ສະບັບປັບປຸງໃໝ່ໃຫ້ແກ່ ວຄ ທົ່ວປະເທດ ທີ່ ວຄ ບ້ານເກີນ ແຂວງ ວຽງຈັນໃນວັນທີ 3-7/12/2015.

ໃນສົກຮຽນ 2017-2018 ວຄສ ໄດ້ມີການປັບປຸງ ແລະ ພັດທະນາໂປຣແກຣມການນຳໃຊ້ຂໍ້ມູນຕ່າງໆ ເຂົ້າໃນການບໍລິຫານຈັດການວຽກງານຕ່າງໆ ຂອງແຕ່ລະຫ້ອງການ ເຊັ່ນ: ຂໍ້ມູນພະນັກງານ, ຂໍ້ມູນນັກສຶກສາເຂົ້ານອນຫໍພັກ, ຄຸ້ມຄອງຫໍສະໝຸດ, ຄຸ້ມຄອງເອກະສານຂາອອກ-ຂາເຂົ້າ.

### 3. ຂໍ້ຄົງຄ້າງ ແລະ ສາຍເຫດ

- ຍັງບໍ່ໄດ້ສ້າງແບບສອບຖາມ, ສຳຫຼວດຂໍ້ມູນ, ວິເຄາະ, ເປີດກອງປະຊຸມທົບທວນ, ລາຍງານຜົນການປະເມີນການນຳໃຊ້ລະບົບ ICT
- ຍັງບໍ່ທັນໄດ້ສ້າງຖານຂໍ້ມູນຕິດຕາມຜູ້ຮຽນຈົບ (ຊື່ວະປະຫວັດຫຍໍ້, ບ່ອນເຮັດວຽກ).

### 4. ຂໍ້ແນະນຳຂອງຄະນະປະເມີນພາຍນອກ

- ທົບທວນ ຫຼື ເຮັດການປະເມີນຜົນຈາກການນຳໃຊ້ລະບົບ ICT ຂອງວິທະຍາໄລ ໂດຍການມີສ່ວນຮ່ວມຂອງຫຼາຍພາກສ່ວນ ລວມທັງຄູ່ຮ່ວມພັດທະນາ ແລະ ສັງຄົມ
- ຄວນມີຖານຂໍ້ມູນເພື່ອຕິດຕາມຜູ້ຮຽນຈົບ
- ຄວນມີບົດລາຍງານກ່ຽວກັບຜົນການນຳໃຊ້ຂໍ້ມູນຕ່າງໆ ເຂົ້າໃນການບໍລິຫານຈັດການວຽກງານຕ່າງໆ ຂອງວິທະຍາໄລ

### 5. ທິດທາງໃນການປັບປຸງ

- ຂຶ້ນແຜນການປະເມີນການນຳໃຊ້ລະບົບ ICT ຂອງ ວຄສ (ສ້າງແບບສອບຖາມ, ສຳຫຼວດຂໍ້ມູນ, ວິເຄາະ, ເປີດກອງປະຊຸມທົບທວນ, ລາຍງານຜົນ)
- ສ້າງຖານຂໍ້ມູນຕິດຕາມຜູ້ຮຽນຈົບ (ຊື່ວະປະຫວັດຫຍໍ້, ບ່ອນເຮັດວຽກ).

## ມາດຕະຖານທີ IX: ລະບົບປະກັນຄຸນນະພາບພາຍໃນ

### 1. ການຈັດຕັ້ງປະຕິບັດ

ວິທະຍາໄລຄູ ສະຫວັນນະເຂດ ຖືເອົາວຽກງານການປະກັນຄຸນນະພາບເປັນວຽກງານທີ່ສຳຄັນ ແລະ ຈຳເປັນ ເນື່ອງຈາກວ່າ ວຽກງານປະກັນຄຸນນະພາບ ເປັນການກວດກາຄືນການປະຕິບັດແຜນພັດທະນາໃນແຕ່ລະປີ ທັງຍັງເປັນການກະຕຸກຊຸກຍູ້ວຽກງານຕ່າງໆໃນສະຖາບັນໃຫ້ມີການພັດທະນາຢ່າງຮອບດ້ານ. ດັ່ງນັ້ນ,ຈຶ່ງໄດ້ມອບໃຫ້ຫ້ອງການວັດຜົນ-ປະເມີນຜົນສົມທົບກັບທຸກພາກສ່ວນທີ່ກ່ຽວຂ້ອງພາຍໃນສະຖາບັນເປັນຜູ້ຈັດຕັ້ງປະຕິບັດພາຍໃຕ້ການຊີ້ນຳຂອງຄະນະພັກ, ຄະນະອຳນວຍການ ໂດຍນຳໃຊ້ເອກະສານ "ຄູ່ມືລະບົບກວດກາ-ຮັບປະກັນຄຸນນະພາບພາຍໃນສະຖາບັນສ້າງຄູ" ສະບັບປັບປຸງເດືອນ ພຶດສະພາ ປີ 2010 ຂອງກົມສ້າງຄູ ພາຍໃຕ້ໂຄງການພັດທະນາການສ້າງຄູ ແລະ ຍົກຖານະຂອງຄູ (TTEST).

ວິທະຍາໄລຄູ ສະຫວັນນະເຂດ ໄດ້ນຳໃຊ້ຄູ່ມືສະບັບດັ່ງກ່າວ ຕັ້ງແຕ່ສົກຮຽນ 2009-2010 ຈົນຮອດສົກຮຽນ 2015-2016 ເຊິ່ງມີຂະບວນການດັ່ງນີ້: ແຕ່ງຕັ້ງຄະນະປະເມີນຜົນພາຍໃນວິທະຍາໄລຄູ ເຊິ່ງປະກອບດ້ວຍຄະນະຊີ້ນຳລວມ, ຄະນະຫ້ອງການຈາກ 10 ຫ້ອງການ, ຜູ້ຮັບຜິດຊອບພາຍໃນຫ້ອງການວັດ-ປະເມີນຜົນ ແລະ ຕາງໜ້າອົງການຈັດຕັ້ງມະຫາຊົນ. ຄະນະດັ່ງກ່າວ ມີໜ້າທີ່ວາງແຜນການ-ແຜນງານ ແລະ ຂັ້ນຕອນການປະຕິບັດທີ່ລະອຽດ ແລ້ວຈັດຕັ້ງການເຜີຍແຜ່ເອກະສານຄູ່ມື, ແຜນດຳເນີນງານ ແລະ ເນື້ອໃນມາດຕະຖານ/ຕົວຊີ້ວັດຕ່າງໆ ໃຫ້ແຕ່ລະພາກສ່ວນຮັບຮູ້ ເພື່ອທຳຄວາມເຂົ້າໃຈບັນດາເນື້ອໃນຂອງແຕ່ລະມາດຕະຖານ ແລະ ຕົວຊີ້

ວັດ. ຈາກນັ້ນ ໄດ້ຈັດກອງປະຊຸມ ເພື່ອດຳເນີນການກວດກາ ແລະ ເປັນເອກະພາບກັນ ຕີລາຄາໃຫ້ຄະແນນຕາມແຕ່ລະຕົວຊີ້ວັດທີ່ສະຖາບັນປະຕິບັດໄດ້ຕາມຄວາມເປັນຈິງ, ມອບໝາຍໃຫ້ແຕ່ລະຫ້ອງການປະກອບຫຼັກຖານທີ່ກ່ຽວຂ້ອງໃຫ້ຄົບຖ້ວນແລ້ວສົ່ງໃຫ້ຄະນະຮັບຜິດຊອບ (ຫ້ອງການວັດຜົນ-ປະເມີນຜົນ) ເປັນຜູ້ສັງລວມ, ຂຽນບົດສະຫຼຸບ ລາຍງານພາຍໃນສະຖາບັນ ແລະ ສົ່ງໃຫ້ກົມສ້າງຄູ, ຄະນະປະເມີນຜົນຈາກກົມສ້າງຄູ ຈຶ່ງໄດ້ລົງກວດກາໃນທ້າຍສົກຮຽນ (ການປະເມີນຄັ້ງທີ 1 ຈັດໃນຕົ້ນພາກຮຽນທີ II ແລະ ຄັ້ງທີ 2 ຈັດໃນລະຫວ່າງເດືອນກໍລະກົດ ຫາເດືອນ ສິງຫາໃນແຕ່ລະປີ).

ສຳລັບສົກຮຽນ 2016-2017 ນີ້ ໄດ້ນຳໃຊ້ມາດຕະຖານການປະເມີນ ຈາກຄູ່ມືການປະກັນຄຸນນະພາບສະຖານການສຶກສາຊັ້ນສູງ ຂອງສູນປະກັນຄຸນນະພາບການສຶກສາ ໂດຍການລົງນິເທດຂອງວິຊາການຈາກສູນປະກັນຄຸນນະພາບການສຶກສາ ໃນຄັ້ງວັນທີ 20-21/02/2017 ແລະ ການລົງຕິດຕາມຊຸກຍູ້ຂອງພະແນກປະເມີນຜົນກົມສ້າງຄູ ໃນຄັ້ງວັນທີ 05/06/2017 ເຊິ່ງແມ່ນຄະນະປະເມີນຜົນຕາມຂໍ້ຕົກລົງຂອງຜູ້ອຳນວຍການສະບັບເລກທີ 238/ວຄສ.ວປ ລົງວັນທີ 05/04/2016 ເປັນຜູ້ດຳເນີນການປະເມີນ.

ຜົນຂອງການປະເມີນ ໄດ້ຜັນຂະຫຍາຍເຂົ້າໃນແຜນພັດທະນາຂອງສະຖາບັນໃນແຕ່ລະສົກຮຽນ, ໄດ້ເຜີຍແຜ່ໃຫ້ພະນັກງານ, ຄູ-ອາຈານ, ນັກສຶກສາກສາໄດ້ຮັບຮູ້ ແລະ ເຂົ້າໃຈ ໃນກອງປະຊຸມປະຈຳປີ ທັງແນະນຳໃຫ້ແຕ່ລະພາກສ່ວນນຳເອົາໄປຜັນຂະຫຍາຍເຂົ້າໃນວຽກງານທີ່ຕົນເອງຮັບຜິດຊອບ ໃຫ້ບັນລຸເປົ້າໝາຍຕາມແຜນທີ່ວາງໄວ້ຢ່າງມີປະສິດທິຜົນ.

## 2. ຈຸດດີ

ລະບົບປະກັນຄຸນນະພາບພາຍໃນວິທະຍາໄລຄູ ສະຫວັນນະເຂດ ມີແຜນໃນການຈັດຕັ້ງປະຕິບັດວຽກງານຄຸນນະພາບຢ່າງຈະແຈ້ງເຊັ່ນ: ມີການຈັດແບ່ງ, ແຕ່ງຕັ້ງ ແລະ ມອບໝາຍໃຫ້ຫ້ອງການວັດຜົນ-ປະເມີນຜົນສົມທົບກັບທຸກພາກສ່ວນທີ່ກ່ຽວຂ້ອງພາຍໃນສະຖາບັນເປັນຜູ້ຈັດຕັ້ງປະຕິບັດ ເພື່ອໃຫ້ພະນັກງານ, ຄູ-ອາຈານທຸກຄົນໃນວິທະຍາໄລຄູ ມີຄວາມສາມັກຄີ, ມີຄວາມຮັບຮູ້ ແລະ ເຂົ້າໃຈກ່ຽວກັບ 10 ມາດຕະຖານ 50 ຕົວຊີ້ວັດ ແລະ ເພື່ອນຳໄປໃຊ້ເຂົ້າໃນການປະຕິບັດວຽກງານຕົວຈິງ ແລ້ວນຳເອົາຜົນເຂົ້າໃນການພັດທະນາສະຖາບັນເປັນຕົ້ນແມ່ນໃຊ້ເຂົ້າໃນຂະບວນການຮຽນ-ການສອນ, ການນຳໃຊ້ເຄື່ອງທົດລອງ, ດຳເນີນກິດຈະກຳນອກຫຼັກສູດ, ກິດຈະກຳເສີມ ແລະ ອື່ນໆ ໃນວຽກງານທີ່ຕົນເອງຮັບຜິດຊອບ ເພື່ອບັນລຸເປົ້າໝາຍຕາມແຜນທີ່ວາງໄວ້. ຍ້ອນວ່າ ຜົນການປະເມີນ ແມ່ນເຫັນໄດ້ເຖິງບັນຫາທີ່ຄົງຄ້າງ, ຄວາມຄືບໜ້າ, ຄວາມຖືກຕ້ອງ, ຄວາມສອດຄ່ອງ, ຄວາມເປັນໄປໄດ້, ຄວາມເໝາະສົມໃນການເກັບກຳຂໍ້ມູນ, ເອກກະສານຂອງບຸກຄົນ ແລະ ຂອງສ່ວນລວມ ເຊິ່ງໄດ້ຮັບການຈັດຕັ້ງປະຕິບັດຢ່າງທົ່ວເຖິງ.

ໃນແຕ່ລະສົກຮຽນ ວຄສ ໄດ້ສ້າງແຜນດຳເນີນການປະກັນຄຸນນະພາບປະຈຳປີ ແລະ ໄດ້ເຜີຍແຜ່ວຽກງານປະກັນຄຸນນະພາບໃຫ້ຄູ-ອາຈານ ແລະ ນັກສຶກສາໄດ້ຮັບຊາບ.

## 3. ຂໍ້ຄົງຄ້າງ ແລະ ສາເຫດ

- ບໍ່ທັນໄດ້ສ້າງໜ່ວຍງານປະກັນຄຸນນະພາບພາຍໃນສະເພາະ
- ການດຳເນີນການປະກັນຄຸນນະພາບຕົນເອງປະຈຳປີຍັງຊັກຊ້າ.

## 4. ຂໍ້ແນະນຳຂອງຄະນະປະເມີນພາຍນອກ

- ປັບປຸງບຸກຄະລາກອນເຂົ້າໃນຄະນະຮັບຜິດຊອບວຽກງານປະກັນຄຸນນະພາບການສຶກສາຂອງວິທະຍາໄລຄືນໃໝ່ ເພື່ອໃຫ້ມີຄວາມສອດຄ່ອງ ແລະ ຖືກຕ້ອງຕາມລະບຽບທີ່ກຳນົດໄວ້
- ສ້າງແຜນດຳເນີນງານສະເພາະວຽກງານດັ່ງກ່າວນີ້ ຢ່າງລະອຽດຈະແຈ້ງ
- ເຮັດການໂຄສະນາເຜີຍແຜ່ວຽກງານປະກັນຄຸນນະພາບການສຶກສາໃຫ້ທຸກພາກສ່ວນທີ່ກ່ຽວຂ້ອງຮັບຊາບ

- ບົດລາຍງານການປະເມີນຕົນເອງຕ້ອງເຮັດເປັນປົກກະຕິ ແລະ ເຮັດຕາມແບບຟອມທີ່ໄດ້ກຳນົດໄວ້ໃນປຶ້ມຄູ່ມືປະກັນຄຸນນະພາບການສຶກສາຊັ້ນສູງ

## 5. ທິດທາງໃນການປັບປຸງ

- ແຕ່ງຕັ້ງຄະນະຮັບຜິດຊອບວຽກງານປະກັນຄຸນນະພາບຂອງ ວຄສ ຄືນໃໝ່
- ສ້າງແຜນດຳເນີນການປະກັນຄຸນນະພາບປະຈຳປີ ແຕ່ລະໄລຍະໃຫ້ລະອຽດ
- ວາງແຜນເຜີຍແຜ່ວຽກງານປະກັນຄຸນນະພາບໃຫ້ຄູ-ອາຈານ ແລະ ນັກສຶກສາ ພາກຮຽນລະ 1 ຄັ້ງ.

## ມາດຕະຖານທີ X: ການຄົ້ນຄວ້າວິທະຍາສາດ ແລະ ບໍລິການວິຊາການ

## 1. ການຈັດຕັ້ງປະຕິບັດ

ໂດຍປະຕິບັດຕາມແຜນພັດທະນາ ແລະ ວິໄສທັດ, ວິທະຍາໄລຄູ ສະຫວັນນະເຂດ ໄດ້ປະຕິບັດນະໂຍບາຍສົ່ງເສີມພະນັກງານ, ຄູ-ອາຈານ ແລະ ນັກສຶກສາ ດຳເນີນຄົ້ນຄວ້າວິໄຈ ໂດຍໃຫ້ຄູ-ອາຈານພາຍໃນ 10 ຫ້ອງການ ສ້າງໂຄງການ ແລະ ແຜນງົບປະມານລະອຽດ ເຊິ່ງຫ້ອງການພັດທະນາຄູເປັນຜູ້ຮັບໂຮມແຜນການ. ຈາກນັ້ນ, ຫ້ອງການພັດທະນາຄູ ເປັນຜູ້ຂຶ້ນແຜນງົບປະມານ ແລະ ຈັດການເຝິກອົບຮົມກ່ຽວກັບການວິໄຈພາກປະຕິບັດ ຫຼື ການວິໄຈໃນຊັ້ນຮຽນໃຫ້ກັບຄູ-ອາຈານ, ຫ້ອງການສົ່ງເສີມວິຊາການເປັນຜູ້ສົ່ງເສີມ, ຕິດຕາມ, ຮັບຜິດຊອບຊີ້ນຳນຳພາ ແລະ ຫ້ອງການບໍລິຫານ-ການເງິນ ຄຸ້ມຄອງງົບປະມານຕາມດຳລັດການໃຊ້-ຈ່າຍງົບປະມານຂອງລັດ ເລກທີ 2066/ກງ ລົງວັນທີ 25/6/2015 ແລະ ຂໍ້ກຳນົດນະໂຍບາຍຂອງວິທະຍາໄລຄູວາງອອກ. ເມື່ອແຜນງານ ຫຼື ໂຄງການດັ່ງກ່າວ ຖືກຮັບຮອງໃນສະພາຄູປະຈຳສົກຮຽນແລ້ວ ຈຶ່ງໄດ້ນຳແຜນດັ່ງກ່າວສະເໜີຕໍ່ກະຊວງສຶກສາທິການ ແລະ ກິລາ. ພາຍຫຼັງໄດ້ຮັບການອະນຸມັດ, ມອບໃຫ້ພາກສ່ວນທີ່ກ່ຽວຂ້ອງໄປຈັດຕັ້ງປະຕິບັດ ໂດຍຜ່ານການເຫັນດີເປັນເອກະພາບຈາກຄະນະພັກ, ຄະນະອຳນວຍການ. ໃນການປະຕິບັດການວິໄຈ, ພະນັກງານ, ຄູ-ອາຈານ ໄດ້ຖືກຄົ້ນຄວ້າ, ເຮັດບົດວິໄຈເປັນກຸ່ມ ແລະ ນັກສຶກສາປີສຸດທ້າຍກໍໄດ້ເຮັດການວິໄຈເຊັ່ນດຽວກັນ (ກຸ່ມລະ 2-4 ຄົນ).

ໃນໄລຍະຜ່ານມາສາມາດສັງລວມໄດ້ດັ່ງນີ້: ບົດວິໄຈທີ່ໄດ້ຖືກນຳສະເໜີໃນລະດັບວິທະຍາໄລຄູ ມີທັງໝົດ 7 ບົດ ແລະ ນຳສະເໜີໃນລະດັບນານາຊາດເຊັ່ນ: ທີ່ ແຂວງກວາງຈິ ສສ ຫວຽດນາມ, ທີ່ ແຂວງ ໂອຊະກະ ປະເທດຍີ່ປຸ່ນ, ທີ່ ແຂວງ ບູຣິລຳ ປະເທດໄທ, ທີ່ ວິທະຍາໄລຄູບ້ານເກິນ ແລະ ດົງຄຳຊ້າງ ໄດ້ທັງໝົດ 17 ບົດ, ຕີພິມໃນວາລະສານວິທະຍາສາດຕ່າງປະເທດໄດ້ທັງໝົດ 4 ບົດ. ນອກຈາກນີ້ ວິທະຍາໄລຄູ ຍັງໄດ້ເຮັດວິໄຈຮ່ວມກັບຄະນະວິທະຍາສາດທຳມະຊາດ ມະຫາວິທະຍາໄລສະຫວັນນະເຂດອີກດ້ວຍ.

ເພື່ອປະຕິບັດໃຫ້ສອດຄ່ອງຕາມແຜນສົ່ງເສີມວຽກງານບໍລິການສັງຄົມຕາມແຜນພັດທະນາຂະແໜງການການສຶກສາ ແລະ ກິລາ 5 ປີ ຄັ້ງທີ VIII (2016-2020). ໃນໄລຍະຜ່ານມາ ວິທະຍາໄລຄູ ສະຫວັນນະເຂດ ໄດ້ປະກອບສ່ວນບໍລິການວິຊາການໃຫ້ແກ່ສັງຄົມ ເປັນຕົ້ນແມ່ນ: ໄດ້ສົ່ງອາຈານໄປສອນ ແລະ ເຝິກອົບຮົມໃຫ້ສະຖາບັນການສຶກສາອ້ອມຂ້າງເຊັ່ນ: ຄູ-ອາຈານໄດ້ເຝິກອົບຮົມການທົດລອງວິທະຍາສາດ, ວິທີສອນ, ການສ້າງແຟ້ມສະສົມຜົນງານ, ການເຮັດວິໄຈໃນຫ້ອງຮຽນ ແລະ ການປູກຝັງສອນຄິດ ໃຫ້ຄູສອນໃນໂຮງຮຽນສາມັນ ແລະ ໂຮງຮຽນເຄືອຂ່າຍ, ສອນວິຊາພາສາອັງກິດ, ຟີຊິກສາດ, ເຄມີສາດ ແລະ ຄອມພິວເຕີທີ່ ວິທະຍາໄລວິທະຍາສາດສຸຂະພາບ ແຂວງສະຫວັນນະເຂດ, ສອນວິຊາຈິດຕະວິທະຍາ ແລະ ວິຊາຕັກກະສາດ-ໂລຊິກ ທີ່ ໂຮງຮຽນຊັ້ນກາງນາຍຮ້ອຍຕຳຫຼວດ (ຫຼັກ 11), ສອນວິຊາພາສາອັງກິດ, ຄະນິດສາດ, ບໍລິຫານ, ປະຫວັດສາດ, ພູມສາດ ແລະ ວັດທະນະທຳ ທີ່ ວິທະຍາໄລເອກະຊົນອ້ອມຂ້າ, ສອນວິຊາພາສາອັງກິດ, ຟີຊິກສາດ ແລະ ເຝິກອົບຮົມວິທີສອນ ທີ່ ມະຫາວິທະຍາໄລສະຫວັນນະເຂດ, ສອນວິຊາປະຫວັດສາດ, ພາສາລາວ ແລະ ເຝິກອົບຮົມວິຊາປ້ອງກັນຊາດ ທີ່ ສະຖາບັນຍຸດຕິທຳພາກໃຕ້ສະຫວັນນະເຂດ, ສອນວິຊາພາສາອັງກິດ ແລະ

ປະຫວັດສາດ ທີ່ສະຖາບັນການເມືອງ-ການປົກຄອງ ແຂວງສະຫວັນນະເຂດ, ເຝິກອົບຮົມພາສາອັງກິດໃຫ້ແກ່ພະນັກງານຫຼັກແຫຼ່ງຂອງແຂວງ ໄດ້ 4 ຮຸ່ນ ມີຈຳນວນ 160 ຄົນ, ຈັດເຝິກອົບຮົມການນຳໃຊ້ພາສາອັງກິດເພື່ອການສື່ສານໃນລະດັບຕົ້ນ, ກາງ ແລະ ສູງ ໃຫ້ພາກສ່ວນທຸລະກິດເອກະຊົນເຂດເສດຖະກິດພິເສດສະຫວັນ-ເຊໂນ, ຈັດເຝິກອົບຮົມວິຊາຄູໃຫ້ແກ່ຄູທີ່ບໍ່ໄດ້ຜ່ານວິຊາຄູໃນໂຮງຮຽນເອກະຊົນອ້ອມຂ້າງ, ຈັດຕັ້ງການສອນວິຊາພາສາລາວນຳໃຊ້ໃຫ້ແກ່ຄູ-ອາຈານ ຈາກ ວິທະຍາໄລຄູກວາງຈີ ສສ ຫວຽດນາມ, ເຝິກອົບຮົມເລື່ອງສຸຂະພາບຈະເລີນພັນໃຫ້ແກ່ຄູໃນໂຮງຮຽນປະຖົມ, ລົງຕິດຕາມການນຳໃຊ້ປຶ້ມວິຊາຄະນິດສາດ ແລະ ພາສາລາວຫຼັກສູດໃໝ່ຂອງຊັ້ນປະຖົມ ປ 1, ເຝິກອົບຮົມການສອນວິຊາພາສາອັງກິດໃຫ້ແກ່ຄູສອນຊັ້ນປະຖົມ, ເຝິກອົບຮົມ ແລະ ເຜີຍແຜ່ຂໍ້ມູນຂ່າວສານ ເລື່ອງລະເບີດບໍ່ທັນແຕກທີ່ຕົກຄ້າງໃນ ສປປ ລາວ ໃຫ້ແກ່ນັກສຶກສາຄູປີສຸດທ້າຍ ແລະ ນັກສຶກສາພາກພັກທ້າຍປີຮຽນສາຍຄູປະຖົມ, ໄດ້ເຝິກອົບຮົມການສອນການຮຽນຮ່ວມ ແລະ ຫ້ອງຄວບໃຫ້ແກ່ຄູສອນໃນຊັ້ນປະຖົມ.

ນອກຈາກນັ້ນ, ວິທະຍາໄລຄູ ສະຫວັນນະເຂດ ຍັງເປັນບ່ອນອຳນວຍຄວາມສະດວກໃຫ້ແກ່ສະຖາບັນການສຶກສາພາຍນອກເຊັ່ນ: ໃຫ້ນັກສຶກສາ ສາຂາວິຊາຟີຊິກສາດ ຄະນະວິທະຍາສາດທຳມະຊາດມະຫາວິທະຍາໄລ ສະຫວັນນະເຂດ ໄດ້ເຂົ້າມານຳໃຊ້ຫ້ອງທົດລອງຟີຊິກສາດ, ໃຫ້ນັກສຶກສາ ຈາກວິທະຍາໄລວິທະຍາສາດສຸຂະພາບ ແຂວງສະຫວັນນະເຂດ ເຂົ້າມານຳໃຊ້ຫ້ອງຮຽນຄອມພິວເຕີ ເປັນຕົ້ນ.

ສະຫຼຸບໄດ້ວ່າ ວຽກງານຄົ້ນຄວ້າວິທະຍາສາດ ແລະ ບໍລິການສັງຄົມຂອງ ວິທະຍາໄລຄູ ສະຫວັນນະເຂດໄດ້ກຳນົດແຜນ, ມີຂໍ້ຕົກລົງ, ໂຄງການລະອຽດ, ຕາຕະລາງກຳນົດເວລາ, ງົບປະມານ, ການສຳມະນາເຜີຍແຜ່ກ່ອນຈັດຕັ້ງປະຕິບັດທຸກຄັ້ງຢ່າງສອດຄ່ອງເໝາະສົມ ຈຶ່ງເຮັດໃຫ້ວຽກງານຄົ້ນຄວ້າຖືກຜັນຂະຫຍາຍຢ່າງຕໍ່ເນື່ອງ ແລະ ພັດທະນາດີຂຶ້ນເປັນກ້າວໆ ຮັບປະກັນທາງດ້ານປະລິມານ-ຄຸນນະພາບ ແລະ ເປັນປົກກະຕິໃນແຕ່ລະສົກຮຽນ.

## 2. ຈຸດດີ

ວຽກງານຄົ້ນຄວ້າວິທະຍາສາດ ແລະ ບໍລິການສັງຄົມຊ່ວຍໃຫ້ຄູ-ອາຈານຫຼາຍທ່ານໄດ້ເພີ່ມທັກສະຮຽນຮູ້, ເຂົ້າໃຈຂັ້ນຕອນການເຮັດວິໄຈຫຼາຍຂຶ້ນ ເຊິ່ງສາມາດຕອບສະໜອງຕາມຄວາມຮຽກຮ້ອງຕ້ອງການໃຫ້ແກ່ຄູ-ອາຈານ, ນັກສຶກສາ ແລະ ຜູ້ຮຽນຫຼາຍຂຶ້ນ, ສ້າງຄຸນປະໂຫຍດຕໍ່ການປັບປຸງພັດທະນາໃຫ້ແກ່ຜູ້ຮຽນເປັນປົກກະຕິ ແລະ ຕໍ່ເນື່ອງຕາມໄລຍະເວລາແຜນການທີ່ໄດ້ກຳນົດໄວ້ເຊັ່ນ: ສິ່ງທີ່ພົ້ນເດັ່ນໃນວິທະຍາໄລຄູ ສະຫວັນນະເຂດຄື: ການນຳສະເໜີຜົນງານການວິໄຈ ຫຼື ຕີພິມໃນວາລະສານລະດັບຕ່າງໆ ໄດ້ເຮັດໃຫ້ພາກສ່ວນອື່ນຮັບຮູ້ເຖິງສັກກະຍະພາບຂອງພະນັກງານ, ຄູ-ອາຈານ ກໍຄື ວິທະຍາໄລຄູ, ມັນເປັນການເອກອ້າງເຖິງຄວາມຮູ້ຄວາມສາມາດຂອງບຸກຄະລາກອນ ກໍຄືຄວາມອາດສາມາດຂອງວິທະຍາໄລຄູ ທີ່ຈະກ້າວໄປເປັນສະຖາບັນສ້າງຄູໃນອະນາຄົດ, ເປັນທີ່ຖືກຍອມຮັບຈາກສັງຄົມ ແລະ ຕ່າງຊາດ, ເປັນຜົນງານອັນສອດຄ່ອງກັບວິໄສທັດທີ່ວ່າເອົາໃຈໃສ່ການຄົ້ນຄ້ວາວິໄຈສາມາດເຊື່ອມໂຍງໄດ້ກັບສາກົນ ແລະ ສິ່ງທີ່ພົ້ນເດັ່ນອີກດ້ານໜຶ່ງໃນວິທະຍາໄລຄູສະຫວັນນະເຂດ ແມ່ນໜ່ວຍງານ ICT ໄດ້ຊ່ວຍພັດທະນາຖານຂໍ້ມູນລະບົບ TEMIS ຂອງກົມສ້າງຄູ ແລະ ເປັນວິທະຍາກອນເຜີຍແຜ່ໃຫ້ແກ່ວິທະຍາໄລຄູທົ່ວປະເທດ.

ໃນສົກຮຽນ 2017-2018 ວຄສ ໄດ້ດຳເນີນງານກ່ຽວກັບວຽກງານຄົ້ນຄວ້າ-ວິໄຈທັງພາຍໃນ ແລະ ຕ່າງປະເທດພ້ອມທັງໄດ້ເກັບກຳຜົນງານການວິໄຈຂອງຄູ-ອາຈານ, ໄດ້ໃຫ້ບໍລິການດ້ານວິຊາການແກ່ສັງຄົມ ເຊັ່ນ: ເປັນຄູເຝິກ, ສອນຊ່ວຍ (ຢູ່ ມຂ, ໂຮງຮຽນການເມືອງການປົກຄອງ, ໂຮງຮຽນນາຍຮ້ອຍຕຳຫຼວດ, ວິທະຍາໄລກະສິກຳປ່າໄມ້, ວິທະຍາໄລໄຊສົມບັດເຕັກໂນໂລຊີ, ສະຖາບັນຍຸຕິທຳພາກກາງ, ວິທະຍາໄລວິທະຍາສາດສຸຂະພາບ), ໃຫ້ການບໍລິການຫ້ອງປະຊຸມ, ຫ້ອງທົດລອງ ແລະ ສະໜາມກິລາໃນການເຝິກແອບວິຊາປ້ອງ

ກັນຊາດ.

### 3. ຂໍ້ຄົງຄ້າງ ແລະ ສາເຫດ

- ຍັງບໍ່ທັນໄດ້ນຳສະເໜີກະຊວງ ສສກ ອອກຂໍ້ຕົກລົງແຕ່ງຕັ້ງສະພາວິທະຍາສາດຂອງ ວຄສ
- ຍັງບໍ່ທັນມີນິຕິກຳພາຍໃນ ວຄສ ກ່ຽວກັບການຍ້ອງຍໍຜູ້ທີ່ສຳເລັດການວິໄຈ.

### 4. ຂໍ້ແນະນຳຂອງຄະນະປະເມີນພາຍນອກ

- ສ້າງແຜນດຳເນີນງານ ແລະ ແຜນການຢ່າງຊັດເຈນກ່ຽວກັບວຽກງານຄົ້ນຄວ້າ-ວິໄຈ ແລະ ບໍລິການສັງຄົມ
- ພາຍຫຼັງສຳເລັດວຽກງານແລ້ວຄວນເຮັດບົດສະຫຼຸບລາຍງານກ່ຽວກັບວຽກດັ່ງກ່າວນີ້ ແລະ ການຄົ້ນ ຄວ້າທາງວິຊາການຄວນມີການກະຕຸກຊຸກຍູ້ ໃຫ້ມີການຈັດຕັ້ງປະຕິບັດເປັນແຕ່ລະສົກຮຽນ ແລະ ມີການຍ້ອງຍໍຜົນງານຜູ້ທີ່ສາມາດສ້າງຜົນງານ ແລະ ສ້າງຊື່ສຽງໃຫ້ກັບວິທະຍາໄລ, ຄວນສ້າງຕັ້ງສະພາວິທະຍາສາດຂອງວິທະຍາໄລ.

### 5. ທິດທາງໃນການປັບປຸງ

- ສ້າງແຜນດຳເນີນງານກ່ຽວກັບວຽກງານຄົ້ນຄວ້າ-ວິໄຈປະຈຳປີ (ຫ້ອງການລະຫົວຂໍ້) ແລະ ບໍລິການດ້ານວິຊາການໃຫ້ແກ່ສັງຄົມ (ເປັນຄູເຝິກ, ສອນຊ່ວຍ, ບໍລິການຫ້ອງປະຊຸມ, ຫ້ອງຟັງສຽງ, ຫ້ອງທົດລອງ, ຫ້ອງຄອມພິວເຕີ, ຫ້ອງພູມສາດ, ສະໜາມກິລາ)
- ເກັບກຳຜົນງານການວິໄຈຂອງຄູ-ອາຈານ ແລະ ສະເໜີຍ້ອງຍໍຜູ້ສຳເລັດການວິໄຈທີ່ຖືກຮັບຮອງຈາກຄະນະກຳມະການກ່ຽວຂ້ອງ
- ນຳສະເໜີກະຊວງ ສສກ ອອກຂໍ້ຕົກລົງແຕ່ງຕັ້ງສະພາວິທະຍາສາດຂອງ ວຄສ.

## V. ການວິເຄາະຜົນການປະເມີນ ແລະ ແຜນພັດທະນາ

### 1. ການວິເຄາະ (ການນຳໃຊ້ SWOT)

#### 1.1. ຈຸດແຂງ (Strength)

- ວິໄສທັດ, ພາລະກິດ ແລະ ຈຸດໝາຍການກໍ່ສ້າງມີເນື້ອໃນທີ່ໄດ້ກຳນົດຂຶ້ນຢ່າງຈະແຈ້ງ, ສອດຄ່ອງກັບພາລະໜ້າທີ່ຂອງສະຖາບັນ ແລະ ທ້ອງຖິ່ນ ແລະ ໄດ້ມີການເຜີຍແຜ່ໃຫ້ແກ່ບັນດາຄູ-ອາຈານ, ພະນັກງານ, ນັກສຶກສາ ແລະ ສັງຄົມໄດ້ຮັບຮູ້ໃນຫຼາຍຮູບແບບ.
- ມີການແຕ່ງຕັ້ງ, ກຳນົດພາລະບົດບາດ, ແຜນຍຸດທະສາດ ແລະ ແຜນການຕ່າງໆໃນການຄຸ້ມຄອງ ແລະ ບໍລິຫານຈາກຂັ້ນເທິງຕາມແຕ່ລະຂັ້ນ.
- ມີສະພາທີ່ເປີກສາ/ສະພາບໍລິຫານ, ໂຄງຮ່າງການຈັດຕັ້ງ ແລະ ການບັນຈຸພະນັກງານທີ່ເໝາະສົມ.
- ມີນະໂຍບາຍ, ລະບຽບການ ແລະ ຂັ້ນຕອນການຄຸ້ມຄອງ-ບໍລິຫານດ້ານການເງິນ ແລະ ພະນັກງານຂັ້ນຕ່າງໆທີ່ໂປ່ງໃສ ແລະ ຈະແຈ້ງ.
- ມີແຜນງົບປະມານ, ສະຖານະດ້ານການເງິນໃນແຕ່ລະສົກຮຽນທີ່ຍືນຍົງ ແລະ ໝັ້ນຄົງ.
- ມີແຜນການພັດທະນາບຸກຄະລາກອນເປັນແຕ່ລະໄລຍະ, ມີແຈ້ງການການສອບຄັດເລືອກພະນັກງານບັນຈຸໃໝ່, ມີຂໍ້ຕົກລົງຮັບ ແລະ ບັນຈຸພະນັກງານ.

- ອັດຕາສ່ວນຄູ/ນັກຮຽນ, ວຸດທິ, ປະສົບການ, ເຄື່ອງມື, ການດຳເນີນການປະເມີນບຸກຄະລາກອນມີຄວາມສອດຄ່ອງ, ເໝາະສົມ ແລະ ໄດ້ນຳໃຊ້ຜົນການປະເມີນເຂົ້າໃນການຊຸກຍູ້ ແລະ ສົ່ງເສີມການພັດທະນາບຸກຄະລາກອນ.
- ມີຫຼັກສູດທີ່ໄດ້ປະຕິບັດຕາມຫຼັກສູດຂອງກົມສ້າງຄູ, ບັນດາຫຼັກສູດຕ່າງໆສອດຄ່ອງກັບສະພາບຄວາມເປັນຈິງຂອງທ້ອງຖິ່ນ, ໄດ້ປັບບາງຈຸດເພື່ອສົ່ງເສີມໃຫ້ມີການຮຽນຮູ້ຕະຫຼອດຊີວິດ ແລະ ມີການຕິດຕາມການມີວຽກເຮັດງານທຳຂອງຜູ້ທີ່ຮຽນຈົບ.
- ມີປະຕິທິນ, ຕາຕະລາງ ແລະ ແຜນການສອນລະອຽດ, ມີການສົ່ງເສີມ 3 ລັກສະນະ 5 ຫຼັກມູນການສຶກສາຂອງກະຊວງສຶກສາທິການ ແລະ ກິລາ, ມີອຸປະກອນ, ສື່ ແລະ ເຄື່ອງມືການສອນທີ່ຄົບຖ້ວນ, ມີສະຖານທີ່ລົງເຝິກປະສົບການ, ລົງເຝິກງານທີ່ສອດຄ່ອງ ແລະ ເໝາະສົມກັບຈຳນວນນັກຮຽນ-ນັກສຶກໃນແຕ່ລະສົກຮຽນ, ສະຖານທີ່ລົງເຝິກປະສົບການ, ລົງເຝິກງານມີຄວາມສະດວກສະບາຍ, ບໍ່ໄກຈາກຕົວເມືອງ ແລະ ເສັ້ນທາງສັນຈອນຫຼັກ, ມີຄູ-ອາຈານພຽງພໍໃນການລົງຕິດຕາມ, ຊຸກຍູ້ຂະບວນການເຝິກຫັດວິຊາຊີບ.
- ມີການທົບທວນ/ປັບປຸງການຈັດຕັ້ງປະຕິບັດການຮຽນ-ການສອນ, ມີມາດຕະຖານ ແລະ ເງື່ອນໄຂຂອງຜູ້ທີ່ຈະເຂົ້າຮຽນລະອຽດ, ວິທີການຄັດເລືອກມີຄວາມສອດຄ່ອງ ແລະ ເໝາະສົມ.
- ມີການໃຫ້ຄຳເປີກສາດ້ານວິຊາການ ແລະ ບັນຫາອື່ນໆຕໍ່ນັກຮຽນ-ນັກສຶກສາໃນການສົ່ງເສີມການຮຽນ, ມີການເຄື່ອນໄຫວອົງການຈັດຕັ້ງມະຫາຊົນ, ມີການພົວພັນລະຫວ່າງສະຖາບັນກັບອະດີດນັກສຶກສາ ແລະ ເຄືອຂ່າຍຜູ້ປະກອບການ/ໂຮງຮຽນສາມັນ.
- ສະຖາບັນຕັ້ງຢູ່ໃນສະພາບແວດລ້ອມທີ່ເອື້ອອຳນວຍຄວາມສະດວກສຳລັບການຮຽນ-ການສອນ, ມີສະຖານທີ່ກວ້າງຂວາງເພື່ອຕອບສະໜອງ 5 ຫຼັກມູນການສຶກສາ, ມີລະບົບຄວາມປອດໄພສຳລັບພະນັກງານ, ຄູ-ອາຈານ ແລະ ນັກສຶກສາ, ມີລະບົບປ້ອງກັນຄວາມສະຫງົບທີ່ດີ, ມີລະບົບການບຳລຸງຮັກສາ, ສ້ອມແປງ, ຂະຫຍາຍ/ພັດທະນາ ແລະ ປັບປຸງສິ່ງອຳນວຍຄວາມສະດວກເປັນແຕ່ລະໄລຍະ.
- ສະຖາບັນມີແຫຼ່ງການຮຽນຮູ້ທີ່ພຽງພໍຢູ່, ມີລະບົບຂໍ້ມູນ ແລະ ຖານຂໍ້ມູນນັກສຶກສາ, ມີລະບົບເຄືອຂ່າຍອິນເຕີເນັດຄອບຄຸມທົ່ວສະຖາບັນ, ມີຖານຂໍ້ມູນຂອງຄູ-ອາຈານ ແລະ ພະນັກງານບໍລິຫານ, ມີລະບົບຂໍ້ມູນ-ຖານຂໍ້ມູນລາຍການຊັບສິນ, ເຄື່ອງໃນສາງທີ່ເປັນຂອງສະຖາບັນຖືກເກັບຮັກສາໄວ້ຢ່າງມີປະສິດທິພາບ, ທັນກັບສະພາບການ ແລະ ຮັບປະກັນຄວາມປອດໄພ, ມີຄະນະຮັບຜິດຊອບໃນການຄຸ້ມຄອງ, ບໍລິຫານ ແລະ ປັບປຸງລະບົບຂໍ້ມູນ-ຖານຂໍ້ມູນ.
- ມີຄະນະຮັບຜິດຊອບວຽກງານປະກັນຄຸນນະພາບພາຍໃນ, ມີແຜນງົບປະມານ, ນະໂຍບາຍໃນການຈັດຕັ້ງປະຕິບັດວຽກງານດັ່ງກ່າວ, ທຸກພາກສ່ວນໄດ້ມີສ່ວນຮ່ວມໃນວຽກງານປະກັນຄຸນນະພາບ, ການປະກັນຄຸນນະພາບມີຄວາມສອດຄ່ອງຕາມສະພາບຄວາມເປັນຈິງຂອງສະຖາບັນ, ສະຖາບັນໄດ້ນຳເອົາຜົນຂອງການປະເມີນຄຸນນະພາບໄປເຜີຍແຜ່ໃຫ້ທຸກພາກສ່ວນຮັບຮູ້, ມີການທົບທວນ, ຕິດຕາມ ແລະ ປັບປຸງວຽກງານປະກັນຄຸນນະພາບຢ່າງເປັນປົກກະຕິ ແລະ ຕໍ່ເນື່ອງ.

- ມີແຜນການ, ນະໂຍບາຍ, ຍຸດທະສາດ, ລະບຽບການສົ່ງເສີມການຄົ້ນຄວ້າວິທະຍາສາດ ແລະ ບໍລິການວິຊາການ, ມີການເຜີຍແຜ່ການຄົ້ນຄວ້າວິທະຍາສາດທັງພາຍໃນ ແລະ ຕ່າງປະເທດ, ມີການໃຫ້ບໍລິການວິຊາການທັງພາຍໃນ ແລະ ຕ່າງປະເທດ.

**1.2. ຈຸດອ່ອນ (Weakness)**

- ວິໄສທັດ, ພາລະກິດ ແລະ ເປົ້າໝາຍການກໍ່ສ້າງຍັງບໍ່ມີການທົບທວນ ແລະ ເຜີຍແຜ່ຢ່າງກວ້າງຂວາງໃຫ້ແກ່ບັນດາພະນັກງານ, ຄູອາຈານ, ນັກຮຽນນັກສຶກສາ ແລະ ມະຫາຊົນເນື່ອງຈາກວ່າວິໄສທັດໄດ້ສ້າງຂຶ້ນໃໝ່.
- ບາງຕໍາແໜ່ງງານຍັງບໍ່ທັນສອດຄ່ອງ ແລະ ແທດເໝາະກັບວຽກງານວິຊາສະເພາະ.
- ວຸດທິຂອງຄູບໍ່ສອດຄ່ອງກັບການສິດສອນບາງລາຍວິຊາເຊັ່ນ: ວິຊາ ພະລະສຶກສາ, ວິຊາປ້ອງກັນຊາດ ແລະ ວິຊາ ICT.
- ຍັງບໍ່ມີລະບົບການພັດທະນາ/ປັບປຸງຫຼັກສູດເປັນຂອງຕົນເອງ.
- ສະຖານປະກອບການ/ໂຮງຮຽນສາມັນ, ຜູ້ຮຽນຈົບ, ຜູ້ຮຽນ, ຄູ-ອາຈານ ແລະ ພາກສ່ວນອື່ນ ຍັງບໍ່ມີສ່ວນຮ່ວມໃນການປະເມີນ/ທົບທວນຫຼັກສູດ.
- ການຮຽນຂອງນັກຮຽນ-ນັກສຶກສາຈໍານວນໜຶ່ງຍັງບໍ່ໄດ້ດີ.
- ເຄື່ອງທົດລອງບາງລາຍວິຊາບໍ່ພຽງພໍ.
- ສະຖາບັນຍັງບໍ່ມີແພດປະຈໍາເພື່ອຊ່ວຍນັກຮຽນໃນການປະຖົມພະຍາບານຂັ້ນພື້ນຖານ.
- ຍັງບໍ່ສາມາດຕອບສະໜອງການນໍາໃຊ້ແຫຼ່ງການຮຽນຮູ້ຜ່ານລະບົບອິນເຕີເນັດຢ່າງກວ້າງຂວາງ.
- ເອກະສານທີ່ເປັນຫຼັກຖານໃຫ້ບາງຕົວຊີ້ວັດບໍ່ສາມາດຫາມາປະກອບໃສ່ໄດ້ (ບາງວຽກງານໄດ້ປະຕິບັດມາດົນຫຼາຍປີແລ້ວ ເຮັດໃຫ້ມີການຕົກເຮ່ຍເສຍຫາຍ ແລະ ຄູ່ມືປະກັນຄຸນະພາບຫາກໍ່ສ້າງຂຶ້ນມາໃໝ່ ຈຶ່ງບໍ່ສາມາດຕອບສະໜອງໄດ້).
- ການຄົ້ນຄວ້າວິທະຍາສາດຂອງນັກສຶກສາ ແລະ ຄູ-ອາຈານຈໍານວນໜຶ່ງ ຍັງບໍ່ທັນເລິກເຊິ່ງ.

**1.3. ໂອກາດ (Opportunity)**

- ມີນິຕິກໍາດ້ານນະໂຍບາຍການພົວພັນຕ່າງປະເທດທີ່ເອື້ອອໍານວຍ.
- ຫຼາຍສະຖາບັນການສຶກສາທັງພາຍໃນ ແລະ ຕ່າງປະເທດມີຄວາມສົນໃຈຮ່ວມມືດ້ານວິຊາການ.
- ໄດ້ຮັບການຊ່ວຍເຫຼືອຈາກສະຖາບັນການສຶກສາທັງພາຍໃນ ແລະ ຕ່າງປະເທດທີ່ມີ MOU ໃນການໃຫ້ທຶນການສຶກສາໃນລະດັບປະລິນຍາໂທ ແລະປະລິນຍາເອກ.
- ພະນັກງານຈໍານວນໜຶ່ງມີຄວາມສາມາດໃນການຊອກຫາແຫຼ່ງທຶນໃນການເຝິກອົບຮົມ ແລະ ສຶກສາຕໍ່ ໂດຍຜ່ານສື່ຂອງສະຖາບັນການສຶກສາ ແລະ ອົງການຈັດຕັ້ງສາກົນ.
- ພະນັກງານຄູ-ອາຈານມີຄວາມສາມາດເຂົ້າຮ່ວມສະເໜີຜົນງານທາງດ້ານການວິໄຈທັງພາຍໃນ ແລະ ລະດັບສາກົນ.
- ມີທີ່ຕັ້ງເໝາະສົມສໍາລັບຜູ້ຮຽນ (ຢູ່ອ້ອມຂ້າງມີສູນບໍລິການດ້ານແຫຼ່ງການຮຽນຮູ້ ແລະ ການບໍລິການຕ່າງໆເຊັ່ນ: ທະນາຄານ, ໄປສະນີ, ຄລີນິກ, ຕະຫຼາດ, ສະຖານທີ່ພັກເຊົາ).
- ທີ່ຕັ້ງຕິດກັບເສັ້ນທາງຍຸດທະສາດຕາມແລວເສດຖະກິດຕາເວັນອອກ-ຕາເວັນຕົກຜ່ານ ແລະ ສາມາດເຂົ້າເຖິງໄດ້ຢ່າງສະດວກສະບາຍ.
- ມີສະຖານທີ່ເອື້ອອໍານວຍໃນການລົງເຝິກປະສົບການ ແລະ ເຝິກຫັດວິຊາຊີບຄູ.

- ມີເງື່ອນໄຂໃນການເຊັນ MOU ຮ່ວມກັບຫຼາຍສະຖາບັນທັງພາຍໃນ ແລະ ຕ່າງປະເທດ.

### 1.4. ສິ່ງທ້າທາຍ (Treat)

- ບາງສະຖາບັນພາຍໃນແຂວງຍັງເປີດຫຼັກສູດການຮຽນ-ການສອນທີ່ຄືກັນກັບສະຖາບັນພວກເຮົາ.
- ບໍ່ມີໂອກາດເປີດການຮຽນ-ການສອນໃນສາຂາວິຊາທີ່ສະຖາບັນມີສັກກາຍະພາບ.
- ສະພາບຄ່ານິຍົມຂອງສັງຄົມທີ່ສົ່ງຜົນຕໍ່ການຮຽນຂອງນັກຮຽນ: ນິຍົມການຮຽນວິຊາກ່ຽວກັບການປົກຄອງ, ເສດຖະກິດ...ຫຼາຍກວ່າຮຽນຄູ ເຮັດໃຫ້ມີແຕ່ນັກຮຽນລະດັບອ່ອນ-ປານກາງເຂົ້າຮຽນຄູ.
- ນັກຮຽນທີ່ມາຮຽນຄູມີຄວາມຮູ້ພື້ນຖານຫຼຸດໂຕນກັນ.
- ການວາງມາດຕະຖານການຮັບນັກຮຽນເຂົ້າຮຽນຄູ: ລັກສະນະທາງກາຍະພາບ ເຮັດໃຫ້ຜູ້ມີຄະແນນດີບໍ່ມີໂອກາດໄດ້ເຂົ້າຮຽນຄູ.
- ຕົວເລກບັນຈຸເຂົ້າເປັນລັດຖະກອນຄູ ແຕ່ລະປີຍັງຈຳກັດ ແລະ ຊັກຊ້າ ເຮັດໃຫ້ໂຮງຮຽນພາກລັດມີໂອກາດໜ້ອຍທີ່ຈະໄດ້ຄົນມີຜົນການຮຽນດີເຂົ້າບັນຈຸເປັນລັດຖະກອນຄູ.

## 2. ແຜນພັດທະນາ ແລະ ປັບປຸງ

### 2.1. ດ້ານວິໄສທັດ, ພາລະກິດ ແລະ ເປົ້າໝາຍການກໍ່ສ້າງ

ສ້າງແຜນ ແລະ ຈັດຕັ້ງການເຜີຍແຜ່ດ້ວຍຫຼາຍຮູບແບບເຊັ່ນ: ນິເທດໃຫ້ນັກສຶກສາໃນແຕ່ລະສົກຮຽນ, ຈັດພິມໃສ່ຄູ່ມືລົງທະບຽນນັກສຶກສາ, ສ້າງແຜ່ນພັບແຈກຢາຍໃຫ້ແຂກທີ່ມາທັດສະນະສຶກສາ, ພົວພັນວຽກງານ, ຮ່ວມກອງປະຊຸມ, ພິມປ້າຍໂຄສະນາແລະໂຄສະນາຜ່ານສື່ເອເລັກໂທຣນິກຕ່າງໆ.

### 2.2. ດ້ານການຄຸ້ມຄອງຄອງ ແລະ ບໍລິຫານ

ສະເໜີຕອບສະໜອງເງິນເດືອນໃຫ້ພະນັກງານ-ຄູອາຈານ, ແຈ້ງງົບປະມານໃຫ້ທັນເວລາ. ຊຸກຍູ້ໃຫ້ຄະນະຈັດຊື້ຈັດຈ້າງປະຕິບັດພາລະບົດບາດຢ່າງເຕັມສ່ວນ.

### 2.3. ດ້ານການພັດທະນາບຸກຄະລາກອນ

ສ້າງເງື່ອນໄຂ ແລະ ພົວພັນກັບບັນດາສະຖາບັນການສຶກສາທີ່ມີ MoU ທັງພາຍໃນ ແລະ ຕ່າງປະເທດເພື່ອຊອກແຫຼ່ງທຶນໃຫ້ແກ່ຄູອາຈານໄປຍົກລະດັບ.

### 2.4. ດ້ານຫຼັກສູດ

ກ່ອນຈະດຳເນີນການພັດທະນາຫຼັກສູດສ້າງຄູໃນສາຂາວິຊາໃດໜຶ່ງຄວນສຶກສາຫຼັກສູດສາມັນທີ່ກ່ຽວຂ້ອງໃຫ້ລະອຽດແລະສຳຫຼວດຂໍ້ຄິດເຫັນກ່ຽວກັບຄວາມຕ້ອງການໃນການສ້າງຫຼັກສູດຈາກນັກວິຊາການທຸກລະດັບເຊັ່ນ: ໂຮງຮຽນສາມັນແລະຫ້ອງການສຶກສາທິການແລະກິລາເມືອງທີ່ເປັນຕົວແທນໃຫ້ແຕ່ລະເຂດເຊັ່ນ: ເຂດທົ່ງພຽງ, ພູດອຍ, ຕົວເມືອງແລະຊົນນະບົດເພື່ອນຳເອົາຂໍ້ຄິດເຫັນດັ່ງກ່າວມາເປັນແນວທາງໃນການກຳນົດຂອບຄວາມຕ້ອງການພັດທະນາຫຼັກສູດສ້າງຄູໃຫ້ສອດຄ່ອງກັບຈຸດປະສົງຜູ້ນຳໃຊ້ຜະລິດຕະພັນຂອງຫຼັກສູດ.

### 2.5. ດ້ານປະສິດທິຜົນຂອງການຮຽນ-ການສອນ

ເພື່ອເຮັດໃຫ້ປະສິດທິຜົນຂອງການຮຽນ-ການສອນສູງຂຶ້ນ ຕ້ອງຂຶ້ນແຜນງົບປະມານໃນການຈັດປະຊຸມ/ສຳມະນາ, ໃຫ້ຄູ-ອາຈານໃນວິທະຍາໄລຄູສະຫວັນນະເຂດເຫັນເຖິງຄວາມສຳຄັນຂອງການເກັບມ້ຽນຂໍ້ມູນ/ເອກະສານ, ມີມາດຕະການທີ່ຊັດເຈນໃຫ້ແຕ່ລະຄົນທີ່ຮັບຜິດຊອບໃນແຕ່ລະໜ້າວຽກ.

ປະສານສົມທົບກັບກົມການເງິນ ກະຊວງສຶກສາທິການ ແລະ ກິລາ ເພື່ອຕອບສະໜອງງົບປະມານການເຝິກຫັດວິຊາຊີບໃຫ້ທັນກັບເວລາ.

## 2.6. ດ້ານການສົ່ງເສີມນັກສຶກສາ

ປະສານສົມທົບກັບພະແນກສຶກສາທິການ ແລະ ກິລາແຂວງ ໃນການບັນຈຸຜູ້ສໍາເລັດການສຶກສາທີ່ມີຜົນການຮຽນດີເຂົ້າເປັນລັດຖະກອນຄູ, ຊອກຫາແຫຼ່ງທຶນຈາກຫຼາຍພາກສ່ວນທັງພາກລັດ, ເອກກະຊົນ ແລະ ອົງການຈັດຕັ້ງສາກົນຕ່າງໆ ເພື່ອສະໜອງທຶນໃຫ້ແກ່ນັກສຶກສາຜູ້ຂາດເຂີນ ແລະ ຜູ້ຮຽນເກັ່ງໃຫ້ຫຼາຍຂຶ້ນ.

## 2.7. ດ້ານສະພາບແວດລ້ອມ ແລະ ແຫຼ່ງຮຽນຮູ້

ເພື່ອໄກ້ໄຂຂໍ້ຄົງຄ້າງທີ່ກ່າວມາຂ້າງເທິງນັ້ນວິທະຍາໄລຄູ ສະຫວັນນະເຂດ ຄວນສ້າງແຜນງົບປະມານເພື່ອສ້າງແຫຼ່ງການຮຽນຮູ້ທີ່ຍັງບໍ່ມີ, ປັບປຸງ ຫຼື ພັດທະນາໃນສິ່ງທີ່ມີຢູ່ແລ້ວໃຫ້ມີຄຸນນະພາບ, ທັນສະໃໝ ແລະ ຍືນຍົງ, ວາງແຜນເຝິກອົບຮົມການນໍາໃຊ້ແຫຼ່ງການຮຽນຮູ້ອັນໃໝ່ເປັນປົກກະຕິ ແລະ ທົ່ວເຖິງ ນັບທັງການປັບປຸງລະບົບຕິດຕາມກວດກາໃຫ້ມີປະສິດທິພາບ.

## 2.8. ດ້ານລະບົບຂໍ້ມູນຂ່າວສານ

ຄະນະຮັບຜິດຊອບຈະສຶກສາຫາສາເຫດ ແລະ ວິທີປ້ອງກັນການລັດວົງຈອນຂອງກະແສໄຟຟ້າ, ຂຶ້ນແຜນງົບປະມານຊື້ອຸປະກອນປ້ອງກັນມາຕິດຕັ້ງໃສ່ລະບົບເຄືອຂ່າຍທົ່ວສະຖາບັນເພື່ອຮັບປະກັນຄວາມປອດໄພຂອງລະບົບ ພ້ອມກັນນັ້ນກໍຈະຈັດເຝິກອົບຮົມໃຫ້ພະນັກງານ, ຄູ-ອາຈານກ່ຽວກັບການປັບປຸງ ແລະ ພັດທະນາລະບົບຖານຂໍ້ມູນ.

## 2.9. ດ້ານລະບົບປະກັນຄຸນນະພາບພາຍໃນ

ຈັດເຝິກອົບຮົມວຽກງານປະກັນຄຸນນະພາບໃຫ້ແກ່ຄູ-ອາຈານ, ພະນັກງານ ແລະ ນັກສຶກສາທຸກຄົນໃນແຕ່ລະສົກຮຽນໃຫ້ມີຄວາມຮູ້-ຄວາມເຂົ້າໃຈຢ່າງເລິກເຊິ່ງ ຫຼັງຈາກນັ້ນ ໃຫ້ໜ່ວຍງານຮັບຜິດຊອບມີແຜນລະອຽດໃນການຈັດຕັ້ງປະຕິບັດ ເພື່ອໃຫ້ແຕ່ລະພາກສ່ວນທີ່ກ່ຽວຂ້ອງນໍາເອົາຜົນການປະເມີນໄປຜັນຂະຫຍາຍເຂົ້າໃນວຽກງານທີ່ຕົນເອງຮັບຜິດຊອບ. ແລກປ່ຽນ ແລະ ຖອດຖອນບົດຮຽນກັບຫຼາຍສະຖາບັນທີ່ມີປະສົບການທັງພາຍໃນ ແລະ ຕ່າງປະເທດ ເພື່ອນໍາມາເປັນທິດທາງໃນການພັດທະນາຄຸນນະພາບສະຖາບັນໃຫ້ມີຄວາມກ້າວໜ້າຍິ່ງຂຶ້ນ.

## 2.10. ດ້ານການຄົ້ນຄວ້າວິທະຍາສາດ ແລະ ການບໍລິການວິຊາການ

ວິທະຍາໄລຄູໄດ້ມີແຜນຈັດກອງປະຊຸມເຝິກອົບຮົມກ່ຽວກັບວຽກງານຄົ້ນຄວ້າວິທະຍາສາດໃຫ້ຄູ-ອາຈານ, ແລກປ່ຽນບົດຮຽນ, ປະສົບການກັບມະຫາວິທະຍາໄລ ຫຼື ວິທະຍາໄລທີ່ຮ່ວມ MoU ນໍາກັນໃຫ້ຫຼາຍກ່ວາເກົ່າໃນທຸກໆສົກຮຽນ. ຈາກນັ້ນ, ຈັດຫາຂໍ້ມູນຂ່າວສານ, ປຶ້ມຕໍາລາ, ເອກະສານຕ່າງໆ ພ້ອມທັງຊຸກຍູ້ສົ່ງເສີມໃຫ້ຄູ-ອາຈານໄດ້ເຮັດການຄົ້ນຄວ້າວິໄຈຢ່າງຕໍ່ເນື່ອງ ແລະ ຈະຕ້ອງໄດ້ມີແຜນເກັບກໍາຫຼັກຖານການໃຫ້ບໍລິການດ້ານວິຊາການຢ່າງເປັນລະບົບ.

# 3. ຂໍ້ສະເໜີ

- ຄວນມີລະບົບການພັດທະນາ/ປັບປຸງຫຼັກສູດເປັນແຕ່ລະໄລຍະ.
- ຄວນເຊີນແຕ່ລະສະຖາບັນທັງພາກລັດ ແລະ ເອກະຊົນເຂົ້າຮ່ວມການປະເມີນຄຸນນະພາບພາຍນອກເພື່ອຮັບຮອງການກວດກາຄຸນນະພາບໃຫ້ມີມາດຕະຖານທີ່ດີຂຶ້ນ.
- ບາງມາດຖານການປະເມີນຍັງບໍ່ສອດຄ່ອງກັບວິທະຍາໄລຄູ.(ເໝາະສົມກັບອາຊີວະສຶກສາ)

- ຄວນຈັດເຝິກອົບຮົມວຽກງານປະກັນຄຸນນະພາບໃຫ້ຄູ-ອາຈານແຕ່ລະສະຖາບັນ.

## VI. ເອກະສານຊ້ອນທ້າຍ

| ມາດຕະຖານ I | ວິໄສທັດ, ພາລະກິດ ແລະ ຈຸດໝາຍການກໍ່ສ້າງ |
|---|---|
| **ຕົວຊີ້ວັດ 1** | **ວິໄສທັດ, ພາລະກິດ ແລະ ຈຸດໝາຍການກໍ່ສ້າງ ຖືກກຳນົດຢ່າງຈະແຈ້ງ ແລະ ທຸກພາກສ່ວນໄດ້ຮັບຮູ້** |
| ຈຸດດີ | - ມີເນື້ອໃນ, ແຜນຍຸດທະສາດການບໍລິຫານທີ່ຈະແຈ້ງ ສາມາດເປັນບ່ອນອີງໃນການຈັດຕັ້ງປະຕິບັດເພື່ອເຮັດໃຫ້ວິທະຍາໄລຄູ ສະຫວັນນະເຂດພວກເຮົາກ້າວໄປສູ່ສູນແຫ່ງການພັດທະນາ, ສູນແຫ່ງຄວາມເປັນເລີດແລະກາຍເປັນສະຖາບັນໄດ້.<br>- ໄດ້ມີການເຜີຍແຜ່ໃຫ້ແກ່ບັນດາຄູ-ອາຈານ, ພະນັກງານ, ນັກຮຽນນັກສຶກສາ ແລະ ມະຫາຊົນໄດ້ຮັບຮູ້. |
| ຂໍ້ຄົງຄ້າງ | - ຍ້ອນວິໄສທັດຖືກປັບປຸງ ແລະ ທົບທວນຄືນໃໝ່ ການເຜີຍແຜ່ບໍ່ທັນກວ້າງຂວາງຈຶ່ງເຮັດໃຫ້ຫຼາຍພາກສ່ວນຍັງບໍ່ທັນໄດ້ຮັບຮູ້ຢ່າງທົ່ວເຖິງ. |
| ຂໍ້ສະເໜີແນະ ແລະ ທິດທາງປັບປຸງ | - ສ້າງແຜນ ແລະ ຈັດຕັ້ງການເຜີຍແຜ່ດ້ວຍຫຼາຍຮູບແບບເຊັ່ນ: ນິເທດໃຫ້ນັກສຶກສາໃນແຕ່ລະສົກຮຽນ, ຈັດພິມໃສ່ຄູ່ມືລົງທະບຽນນັກສຶກສາ, ສ້າງແຜ່ນພັບແຈກຢາຍໃຫ້ແຂກທີ່ມາທັດສະນະສຶກສາ, ພິວພັນວຽກງານ, ຮ່ວມກອງປະຊຸມ, ພິມປ້າຍໂຄສະນາ ແລະ ໂຄສະນາຜ່ານສື່ເອເລັກໂທຣນິກຕ່າງໆ. |
| ຂໍ້ມູນຫຼັກຖານ | - ໜັງສືແຈ້ງການກ່ຽວກັບການສ້າງວິໄສທັດຂອງກົມສ້າງຄູ.<br>- ຂໍ້ຕົກລົງຂອງຜູ້ອຳນວຍການວ່າດ້ວຍການແຕ່ງຕັ້ງຄະນະຮັບຜິດຊອບຄົ້ນຄວ້າ, ສ້າງວິໄສທັດຂອງວິທະຍາໄລຄູສະຫວັນນະເຂດ.<br>- ບົດບັນທຶກກອງປະຊຸມຄົ້ນຄວ້າ, ປັບປຸງ ແລະ ຮອງຮັບ ວິໄສທັດ, ພາລະກິດ ແລະ ຈຸດໝາຍການກໍ່ສ້າງສະບັບປັບປຸງໃໝ່.<br>- ວິໄສທັດຮອດປີ 2020 ແລະ ແຜນຍຸດທະສາດ 5 ປີ (2016 - 2020).<br>- Poster ວິໄສທັດ.<br>- Brochure ຂອງສະຖາບັນ.<br>- Website ຂອງສະຖາບັນ. |
| **ຕົວຊີ້ວັດ 2** | **ຈຸດໝາຍກໍ່ສ້າງສອດຄ່ອງກັບພາລະໜ້າທີ່, ແທດເໝາະກັບທ່າແຮງ ແລະ ທິດທາງການພັດທະນາຂອງສະຖາບັນ, ຕອບສະໜອງໄດ້ຕໍ່ຄວາມຮຽກຮ້ອງຕ້ອງການໃນການພັດທະນາຂອງປະເທດ, ທ້ອງຖິ່ນ, ການເຊື່ອມໂຍງກັບພາກພື້ນ ແລະ ການພັດທະນາດ້ານວິຊາການຂອງຂະແໜງການ** |
| ຈຸດດີ | - ຈຸດໝາຍການກໍ່ສ້າງສອດຄ່ອງກັບພາລະໜ້າທີ່ຂອງສະຖາບັນ ແລະ ທ້ອງຖິ່ນ.<br>- ແທດເໝາະກັບຄວາມຮຽກຮ້ອງຕ້ອງການຂອງສັງຄົມໃນທຸກລະດັບ.<br>- ແທດເໝາະກັບການພັດທະນາໃຫ້ກາຍເປັນສະຖາບັນສ້າງຄູສະເພາະ. |

| | |
|---|---|
| | - ສາມາດຕອບສະໜອງໄດ້ຕໍ່ກັບຄວາມຮຽກຮ້ອງຕ້ອງການຄູເຂົ້າໃນການພັດທະນາປະເທດ ແລະ ທ້ອງຖິ່ນ.<br>- ສາມາດເຊື່ອມໂຍງໄດ້ກັບພາກພື້ນ ແລະ ສາກົນໃນການພັດທະນາດ້ານວິຊາການຂອງຂະແໜງການສຶກສາ. |
| ຂໍ້ຄົງຄ້າງ | - ການສຳຫຼວດຄວາມຕ້ອງການຂອງຜູ້ທີ່ຈະເຂົ້າຮຽນ ແລະ ຕະຫຼາດແຮງງານຍັງບໍ່ໄດ້ເຮັດເປັນປົກກະຕິ. |
| ຂໍ້ສະເໜີແນະ | - ໃຫ້ມີການສຳຫຼວດຄວາມຕ້ອງການຂອງຜູ້ທີ່ຈະເຂົ້າຮຽນ ແລະ ຕະຫຼາດແຮງງານເປັນປົກກະຕິຕື່ມ. |
| ຂໍ້ມູນຫຼັກຖານ | - ບົດລາຍງານສັງລວມຄວາມຕ້ອງການຄູໃນແຂວງສະຫວັນນະເຂດ ແລະ ຄຳມ່ວນ.<br>- ບົດວິພາກການຍົກວິທະຍາໄລຄູເປັນສະຖາບັນສ້າງຄູ. |
| **ຕົວຊີ້ວັດ 3** | **ວິໄສທັດ, ພາລະໜ້າທີ່ ແລະ ຈຸດໝາຍການກໍ່ສ້າງໄດ້ຮັບການທົບທວນ ແລະ ປັບປຸງເປັນແຕ່ລະໄລຍະ** |
| ຈຸດດີ | - ມີການກຳນົດວິໄສທັດ, ພາລະໜ້າທີ່ ແລະ ຈຸດໝາຍກໍ່ສ້າງຂຶ້ນເປັນຂອງຕົນເອງ.<br>- ມີເນື້ອໃນທີ່ໄດ້ກຳນົດຂຶ້ນຢ່າງຈະແຈ້ງ.<br>- ມີຈຸດໝາຍການກໍ່ສ້າງສອດຄ່ອງກັບພາລະໜ້າທີ່ຂອງສະຖາບັນ ແລະ ທ້ອງຖິ່ນ.<br>- ມີການທົບທວນ ແລະ ປັບປຸງເປັນແຕ່ລະໄລຍະ. |
| ຂໍ້ຄົງຄ້າງ | - ຍັງບໍ່ມີການທົບທວນຄືນເທົ່າທີ່ຄວນເນື່ອງຈາກວ່າວິໄສທັດແມ່ນຫາກໍໄດ້ກຳນົດຂຶ້ນໃໝ່. |
| ຂໍ້ສະເໜີແນະ | - ຄວນກຳນົດໄລຍະເວລາການທົບທວນ, ຄະນະຮັບຜິດຊອບ ແລະ ວິທີປະຕິບັດໃຫ້ລະອຽດ. |
| ຂໍ້ມູນຫຼັກຖານ | - ຂໍ້ຕົກລົງຂອງຜູ້ອຳນວຍການວ່າດ້ວຍການແຕ່ງຕັ້ງຜູ້ເຂົ້າຮ່ວມຄົ້ນຄວ້າສ້າງວິໄສທັດ ວຄສ.<br>- ບົດບັນທຶກການຄົ້ນຄວ້າ, ປັບປຸງ ແລະ ຮອງຮັບວິໄສທັດ, ພາລະກິດ ແລະ ເປົ້າໝາຍສະບັບປັບປຸງໃໝ່. |
| **ມາດຕະຖານ II** | **ການຄຸ້ມຄອງ ແລະ ບໍລິຫານ** |
| **ຕົວຊີ້ວັດ 4** | **ສະພາບໍລິຫານມີບົດບາດ ແລະ ປະຕິບັດໜ້າທີ່ຮັບຜິດຊອບທີ່ໄດ້ກຳນົດໄວ້ ໂດຍສອດຄ່ອງກັບບັນດາດຳລັດ** |
| ຈຸດດີ | - ມີສະພາທີ່ເປັກສາ/ສະພາບໍລິຫານຂອງຕົນເອງ.<br>- ສະພາບໍລິຫານມີບົດບາດ ແລະ ສາມາດປະຕິບັດວຽກງານທີ່ສຳຄັນຕ່າງໆ ໂດຍອີງໃສ່ຂໍ້ກຳນົດ ເພື່ອໃຫ້ສອດຄ່ອງຕາມດຳລັດທີ່ທາງຂັ້ນເທິງວາງອອກ. |
| ຂໍ້ຄົງຄ້າງ | - ສະພາບໍລິຫານມີແຕ່ພະນັກງານຄູອາຈານພາຍໃນສະຖາບັນຢ່າງດຽວ. |
| ຂໍ້ສະເໜີແນະ | - ຄວນມີບຸກຄົນພາຍນອກປະກອບເຂົ້າໃນສະພາວິທະຍາໄລຄູ ສະຫວັນນະເຂດ. |
| ຂໍ້ມູນຫຼັກຖານ | - ຂໍ້ຕົກລົງວ່າດ້ວຍການແຕ່ງຕັ້ງພະນັກງານດຳລົງຕຳແໜ່ງຜູ້ບໍລິຫານປະເພດຕ່າງໆຂອງກະຊວງສຶກສາທິການ ແລະ ກິລາ.<br>- ຂໍ້ຕົກລົງຂອງຜູ້ອຳນວຍການ ວຄສ ວ່າດ້ວຍການແຕ່ງຕັ້ງພະນັກງານດຳລົງຕຳແໜ່ງ |

| | |
|---|---|
| | ປະເພດຕ່າງໆພາຍໃນ ວຄສ. |
| **ຕົວຊີ້ວັດ 5** | **ໂຄງຮ່າງການຈັດຕັ້ງ ແລະ ການບັນຈຸພະນັກງານທີ່ມີວຸດທິເໝາະສົມ ແລະ ມີຄວາມສາມາດເຂົ້າໃນທຸກຕຳແໜ່ງງານທີ່ຖືກສ້າງຕັ້ງຂຶ້ນ** |
| ຈຸດດີ | - ມີໂຄງຮ່າງການຈັດຕັ້ງຂອງສະຖາບັນ ແລະ ຂອງແຕ່ລະຫ້ອງການ.<br>- ການບັນຈຸພະນັກງານສອດຄ່ອງ ແລະ ເໝາະສົມກັບທຸກໆວຽກງານ ແລະ ຕຳແໜ່ງງານ.<br>- ພະນັກງານມີວຸດທິເໝາະສົມໃນທຸກໆວຽກງານ ແລະ ຕຳແໜ່ງງານທີ່ຖືກສ້າງຕັ້ງຂຶ້ນ.<br>- ພະນັກງານມີຄວາມສາມາດປະຕິບັດວຽກງານທີ່ຖືກມອບໝາຍໃນທຸກໆວຽກງານ ແລະ ຕຳແໜ່ງງານ. |
| ຂໍ້ຄົງຄ້າງ | - ບາງຕຳແໜ່ງງານແມ່ນຍັງບໍ່ທັນສອດຄ່ອງ ແລະ ເຫດເໝາະກັບວຽກງານວິຊາສະເພາະ. |
| ຂໍ້ສະເໜີແນະ | - ສ້າງແຜນນະໂຍບາຍໃນການສົ່ງເສີມພະນັກງານ, ຄູ-ອາຈານໃນການໄປຍົກລະດັບທັງພາຍໃນ ແລະຕ່າງປະເທດ.<br>- ສົ່ງພະນັກງານ, ຄູ-ອາຈານໄປຍົກລະດັບທາງດ້ານບໍລິຫານ ແລະ ວິຊາສະເພາະ. |
| ຂໍ້ມູນຫຼັກຖານ | - ລະບົບການຈັດຕັ້ງຂອງວິທະຍາໄລຄູ ສະຫວັນນະເຂດ.<br>- ໃບປະກາສະນິຍະບັດ ແລະ ໃບຢັ້ງຢືນຂອງຄູ-ອາຈານ ແລະ ພະນັກງານແຕ່ລະຄົນ.<br>- ຄູ່ມືເຮັດວຽກຂອງວິທະຍາໄລຄູ ສະຫວັນນະເຂດ.<br>- ຂໍ້ກຳນົດກົດລະບຽບຂອງວິທະຍາໄລຄູ ສະຫວັນນະເຂດ.<br>- ຂໍ້ກຳນົດການແບ່ງວຽກໃຫ້ແຕ່ລະຄູ-ອາຈານໃນຫ້ອງການ. |
| **ຕົວຊີ້ວັດ 6** | **ແຜນຍຸດທະສາດພັດທະນາແຕ່ລະໄລຍະທີ່ສອດຄ່ອງກັບວິໄສທັດ, ພາລະໜ້າທີ່ ແລະ ຈຸດໝາຍການກໍ່ສ້າງທີ່ໄດ້ກຳນົດໄວ້** |
| ຈຸດດີ | - ມີແຜນຍຸດທະສາດພັດທະນາ 5 ປີ, 10 ປີ ຂອງວິທະຍາໄລຄູສະຫວັນນະເຂດທີ່ສອດຄ່ອງກັບວິໄສທັດ, ພາລະໜ້າທີ່ ແລະ ຈຸດໝາຍການກໍ່ສ້າງທີ່ໄດ້ກຳນົດໄວ້.<br>- ມີວິໄສທັດຮອດປີ 2020 ແລະ ແຜນຍຸດທະສາດ 5 ປີ (2016-2020) ໃນການສ້າງສູນພັດທະນາ ແລະ ສູນແຫ່ງຄວາມເປັນເລີດ.<br>- ມີບົດສະຫຼູບປະຈຳອາທິດ ແລະ ແຜນການໃນການປະຕິບັດໃນອາທິດຕໍ່ໄປ. |
| ຂໍ້ຄົງຄ້າງ | - ການຜັນຂະຫຍາຍແຜນຍຸດທະສາດໄປສູ່ການຈັດຕັ້ງປະຕິບັດຍັງບໍ່ທັນທົ່ວເຖິງຄູ-ອາຈານ ແລະ ພະນັກງານໝົດທຸກຄົນ. |
| ຂໍ້ສະເໜີແນະ | - ການຜັນຂະຫຍາຍແຜນຍຸດທະສາດໄປສູ່ການຈັດຕັ້ງປະຕິບັດຄວນໃຫ້ທົ່ວເຖິງຄູ-ອາຈານ ແລະ ພະນັກງານໝົດທຸກຄົນ. |
| ຂໍ້ມູນຫຼັກຖານ | - ປື້ມວິໄສທັດຮອດປີ 2020.<br>- ແຜນຍຸດທະສາດ 5 ປີ (2016-2020) ໃນການສ້າງສູນພັດທະນາ ແລະ ສູນແຫ່ງຄວາມເປັນເລີດ.<br>- ປື້ມແຜນຍຸດທະສາດ 5 ປີ, 10 ປີ ຂອງວິທະຍາໄລຄູສະຫວັນນະເຂດ.<br>- ບົດສະຫຼູບປະຈຳອາທິດ ແລະ ແຜນການໃນການປະຕິບັດໃນອາທິດຕໍ່ໄປ. |
| **ຕົວຊີ້ວັດ 7** | **ນະໂຍບາຍ, ລະບຽບການ ແລະ ຂັ້ນຕອນການຄຸ້ມຄອງ-ບໍລິຫານພະນັກງານຂັ້ນຕ່າງໆ ທີ່ຈະແຈ້ງ** |

| | |
|---|---|
| ຈຸດດີ | - ມີນະໂຍບາຍແລະ ຂັ້ນຕອນການຄຸ້ມຄອງ-ບໍລິຫານໃນການຊຸກຍູ້, ສົ່ງເສີມ ແລະ ຊ່ວຍເຫຼືອພະນັກງານຕາມແຕ່ລະຂັ້ນຢ່າງຈະແຈ້ງ.<br>- ມີລະບຽບການແລະ ຂັ້ນຕອນໃນການປະຕິບັດລະບຽບວິໄນຕໍ່ກັບພະນັກງານຂັ້ນຕ່າງໆຢ່າງຈະແຈ້ງ. |
| ຂໍ້ຄົງຄ້າງ | - ການທົບທວນນະໂຍບາຍ, ລະບຽບການ ແລະ ຂັ້ນຕອນ ໃນແຕ່ລະໄລຍະຍັງບໍ່ທັນເປັນປົກກະຕິ. |
| ຂໍ້ສະເໜີແນະ | - ຄວນເຮັດແບບສອບຖາມຄວາມຄິດເຫັນຂອງຄູ-ອາຈານ ແລະ ພະນັກງານຕໍ່ການປະຕິບັດຂໍ້ກຳນົດນະໂຍບາຍ ແລະ ກົດລະບຽບໃນແຕ່ລະສົກຮຽນ. |
| ຂໍ້ມູນຫຼັກຖານ | - ຂັ້ນຂັ້ນເງິນເດືອນພະນັກງານຂອງຄູ-ອາຈານ ແລະ ພະນັກງານ ວຄສ.<br>- ຂໍ້ກຳນົດຊື່ວຄາວວ່າດ້ວຍນະໂຍບາຍ ແລະ ກົດລະບຽບຂອງວິທະຍາໄລຄູ ສະຫວັນນະເຂດແຕ່ລະສົກຮຽນ.<br>- ບົດສະຫຼຸບວຽກງານນະໂຍບາຍແຕ່ລະສົກຮຽນ. |
| **ຕົວຊີ້ວັດ 8** | **ນະໂຍບາຍ, ລະບຽບການ ແລະ ຂັ້ນຕອນການບໍລິຫານດ້ານການເງິນທີ່ໂປ່ງໃສ** |
| ຈຸດດີ | - ມີນະໂຍບາຍ ແລະ ຂັ້ນຕອນບໍລິຫານດ້ານການເງິນທີ່ໂປ່ງໃສ.<br>- ມີລະບຽບການ ແລະ ຂັ້ນຕອນບໍລິຫານດ້ານການເງິນທີ່ສາມາດຕິດຕາມ ແລະ ກວດສອບໄດ້. |
| ຂໍ້ຄົງຄ້າງ | - ບົດລາຍງານການກວດສອບພາຍໃນ ແລະ ການເຜີຍແຜ່ໃຫ້ຜູ້ມີສ່ວນຮ່ວມ ຍັງບໍ່ທັນກວ້າງຂວາງ. |
| ຂໍ້ສະເໜີແນະ | - ຄວນເຜີຍແຜ່ບົດລາຍງານການກວດສອບພາຍໃນໃຫ້ທຸກພາກສ່ວນຮັບຮູ້ຢ່າງກວ້າງຂວາງ. |
| ຂໍ້ມູນຫຼັກຖານ | - ຂໍ້ຕົກລົງຂອງລັດຖະມົນຕີ ວ່າດ້ວຍກຳນົດໝາຍໃຊ້ຈ່າຍງົບປະມານຂອງລັດ ສະບັບເລກທີ 2066 ລົງວັນທີ 25 ມິຖຸນາ 2015.<br>- ຂໍ້ຕົກລົງຂອງຜູ້ອຳນວຍການວ່າດ້ວຍການເບີກ-ຈ່າຍເງິນອອກຈາກຄັງຂອງວິທະຍາໄລຄູ ສະຫວັນນະເຂດ.<br>- ບົດບັນທຶກການກວດກາລາຍຮັບ-ລາຍຈ່າຍຄ່າທຳນຽມ ແລະ ຄ່າບໍລິການຕ່າງໆ.<br>- ໃບເບີກ-ຈ່າຍເງິນສົດຕ່າງໆ.<br>- ໃບຮັບເງິນຕ່າງໆ.<br>- ໜັງສືສະເໜີໃຊ້ງົບປະມານຕ່າງໆ.<br>- ໂຄງການເຄື່ອນໄຫວຂະບວນການກິລາ ແລະ ສິລະປະຂອງແຕ່ລະຫ້ອງການສາຍ.<br>- ໂຄງການຖາມ-ຕອບວິທະຍາສາດຂອງແຕ່ລະສາຍ.<br>- ບົດສະຫຼຸບລາຍຮັບ-ລາຍຈ່າຍເງິນຮ່ວງຕ່າງໆພາຍໃນວິທະຍາໄລຄູ ສະຫວັນນະເຂດ.<br>- ບົດສະຫຼຸບການປະຕິບັດລາຍຈ່າຍງົບປະມານ 3 ເດືອນ ຂ້າມຜ່ານ.<br>- ບົດສະຫຼຸບ (ຂາດຕົວ)ການປະຕິບັດລາຍຈ່າຍງົບປະມານ ວິຊາການ+ລັດ.<br>- ບົດບັນທຶກລົງຕິດຕາມກວດກາການເງິນໄລຍະຂ້າມຜ່ານ 3 ເດືອນ.<br>- ບົດສະຫຼຸບວຽກງານກວດກາຮອບດ້ານ.<br>- ບົດສະຫຼຸບລາຍຈ່າຍງົບປະມານ. |

| ຕົວຊີ້ວັດ 9 | ສະຖານະດ້ານການເງິນທີ່ຍືນຍົງ ແລະ ໝັ້ນຄົງ |
|---|---|
| ຈຸດດີ | - ມີສະຖານະດ້ານການເງິນທີ່ຍືນຍົງ ແລະ ໝັ້ນຄົງ.<br>- ມີງົບປະມານ, ແຜນງົບປະມານໃນແຕ່ລະສົກຮຽນ. |
| ຂໍ້ຄົງຄ້າງ | - ສະຖານະທາງດ້ານການເງິນທີ່ເປັນເງິນທຶນສະສົມ. |
| ຂໍ້ສະເໜີແນະ | - ຄວນມີສະຖານະທາງດ້ານການເງິນທີ່ເປັນເງິນທຶນສະສົມ. |
| ຂໍ້ມູນຫຼັກຖານ | - ບົດສະຫຼຸບ ການປະຕິບັດລາຍຈ່າຍງົບປະມານ ວິຊາການ+ລັດ.<br>- ບົດສະຫຼຸບ ການປະຕິບັດລາຍຈ່າຍງົບປະມານ ວິຊາການ. |
| **ມາດຕະຖານ III** | **ການພັດທະນາບຸກຄະລາກອນ** |
| **ຕົວຊີ້ວັດ 10** | **ກົນໄກການຄັດເລືອກ, ບັນຈຸ ແລະ ຊັບຊ້ອນບຸກຄະລາກອນທີ່ຈະແຈ້ງ ແລະ ສອດຄ່ອງຕາມຄວາມຕ້ອງການ ແລະ ແຜນພັດທະນາຂອງຕົນ** |
| ຈຸດດີ | - ໄດ້ມີການໂຄສະນາ ຫຼື ປະກາດທາງສື່ເຊັ່ນ: ວິທະຍຸກະຈາຍສຽງ, ໂທລະພາບ, Facebook, Website ຂອງສະຖາບັນໃນການຄັດເລືອກ, ບັນຈຸບຸກຄະລາກອນໃໝ່.<br>- ມີແຜນການພັດທະນາບຸກຄະລາກອນຕາມແຕ່ລະໄລຍະ.<br>- ມີແຈ້ງການການສອບຄັດເລືອກພະນັກງານບັນຈຸໃໝ່.<br>- ມີຂໍ້ຕົກລົງຮັບ ແລະ ບັນຈຸພະນັກງານ. |
| ຂໍ້ຄົງຄ້າງ | - ການຄັດເລືອກ, ບັນຈຸ ແລະ ຊັບຊ້ອນບຸກຄະລາກອນຍັງບໍ່ທັນລະອຽດຈະແຈ້ງເທົ່າທີ່ຄວນ (ຍັງມີລັກສະນະເກື້ອກູນ). |
| ຂໍ້ສະເໜີແນະ | - ຄວນຊອກຫາວິທີເພື່ອປັບປຸງວິທີການຄັດເລືອກໃຫ້ມີປະສິດຖິພາບ ແລະ ໄດ້ຄຸນນະພາບຂຶ້ນຕື່ມ. |
| ຂໍ້ມູນຫຼັກຖານ | - ປະກາດເທິງ Facebook ແລະ Website ຂອງສະຖາບັນໃນການຄັດເລືອກ, ບັນຈຸບຸກຄະລາກອນໃໝ່.<br>- ຫົວບົດສອບເສັງຄັດເລືອກລັດຖະກອນ.<br>- ຂໍ້ຕົກລົງຂອງຜູ້ອຳນວຍການ ວຄສ ວ່າດ້ວຍການແຕ່ງຕັ້ງຄະນະຮັບຜິດຊອບຄັດເລືອກເພື່ອບັນຈຸລັດຖະກອນໃໝ່.<br>- ຂໍ້ຕົກລົງສັບຊ້ອນ ແລະ ບັນຈຸຄູ-ອາຈານ ແລະ ພະນັກງານໃນແຕ່ລະຫ້ອງການ. |
| **ຕົວຊີ້ວັດ 11** | **ອາຈານສອນມີວຸດທິ ແລະ ຄວາມສາມາດທີ່ເໝາະສົມ** |
| ຈຸດດີ | - ວຸດທິຂອງຄູ-ອາຈານມີຄວາມເໝາະສົມຕາມເກນຂອງ ວຄສ ແລະ ກະຊວງສຶກສາທິການ ແລະ ກິລາວາງອອກ.<br>- ຄູ-ອາຈານມີຄວາມສາມາດໃນການສິດສອນ ແລະ ເຮັດວຽກງານທີ່ໄດ້ຖືກມອບໝາຍ.<br>- ຄູ-ອາຈານສ່ວນຫຼາຍແມ່ນມີປະສົບການໃນການສິດສອນ. |
| ຂໍ້ຄົງຄ້າງ | - ວຸດທິຂອງຄູບາງລາຍວິຊາແມ່ນບໍ່ສອດຄ່ອງກັບການສິດສອນບາງລາຍວິຊາເຊັ່ນ: ວິຊາພາລະສຶກສາ, ວິຊາປ້ອງກັນຊາດ ແລະ ວິຊາ ICT. |
| ຂໍ້ສະເໜີແນະ | - ຊອກຫາເງື່ອນໄຂ ແລະ ຂໍ້ສະດວກໃຫ້ແກ່ຄູທີ່ສອນໃນລາຍວິຊາດັ່ງກ່າວໄດ້ໄປຍົກລະດັບໃນພາຍໃນ ແລະ ຕ່າງປະເທດ.<br>- ຄວນມີອັດຕາສ່ວນອາຈານສອນຕາມວຸດທິການສຶກສາທີ່ເໝາະສົມ. |
| ຂໍ້ມູນຫຼັກຖານ | - ປະຫວັດພະນັກງານຂອງວິທະຍາໄລຄູ ສະຫວັນນະເຂດ. |

| | |
|---|---|
| | - ຂໍ້ມູນພະນັກງານໃນແຕ່ລະດ້ານ.<br>- ໜັງສືສະເໜີເລື່ອນລັດຖະກອນແລະ ລັດຖະກອນຝຶກງານເປັນສົມບູນ.<br>- ຕາຕະລາງສັງລວມຄະແນນປະເມີນລັດຖະກອນຝຶກງານເປັນລັດຖະກອນສົມບູນ (ຄູສອນ).<br>- ບັນຊີລາຍຊື່ເລື່ອນລັດຖະກອນ, ລັດຖະກອນຝຶກງານເປັນສົມບູນ.<br>- ບັນຊີທຽບຂັ້ນຂັ້ນເງິນເດືອນ, ເລື່ອນລັດຖະກອນຝຶກງານເປັນລັດຖະກອນສົມບູນ(ຄູສອນ) |
| **ຕົວຊີ້ວັດ 12** | **ອາຈານສອນມີຄວາມສາມາດໃນການຖ່າຍທອດຄວາມຮູ້ຄວາມສາມາດຕາມຫຼັກສູດຢ່າງເຂັ້ມງວດ** |
| ຈຸດດີ | - ຄູອາຈານມີຄວາມຮູ້ຄວາມສາມາດໃນການຈັດຕັ້ງປະຕິບັດຫຼັກສູດ.<br>- ຄູ-ອາຈານສອນໄດ້ສຳເລັດການຮຽນ-ການສອນຕາມຫຼັກສູດ. |
| ຂໍ້ຄົງຄ້າງ | - ວິທີການປະເມີນນັກຮຽນ ຂອງອາຈານສອນ ຍັງບໍ່ທັນເປັນລະບົບດີ. |
| ຂໍ້ສະເໜີແນະ | - ໃຫ້ມີວິທີການປະເມີນນັກຮຽນ ຂອງອາຈານສອນຢ່າງຄັກແນ່. |
| ຂໍ້ມູນຫຼັກຖານ | - ຂໍ້ຕົກລົງຂອງຜູ້ອຳນວຍການວດສ.<br>- ໜັງສືແຕ່ງຕັ້ງຂອງຜູ້ອຳນວຍການ ວດສ ວ່າດ້ວຍຄະນະຮັບຊອບເຄືອຂ່າຍ.<br>- ໜັງສືແຕ່ງຕັ້ງຂອງຜູ້ອຳນວຍການ ວດສ ວ່າດ້ວຍຜູ້ເຂົ້າຮ່ວມກອງປະຊຸມແນະນຳ ແລະ ເຜີຍແຜ່ກ່ຽວກັບການພັດທະນາແຫຼ່ງການຮຽນ-ການສອນໃຫ້ໄດ້ຄຸນະພາບແກ່ຄູສອນວດສ ແລະ ການສ້າງເອກະສານແບບ E-lesson.<br>- ແຜນການສິດສອນພ້ອມທັງໂຄງຮ່າງລາຍວິຊາຂອງອາຈານສອນແຕ່ລະຄົນ.<br>- ບົດສອນ.<br>- ບົດປະກອບການບັນຍາຍການສອນ.<br>- ຮູບພາບສື່ທີ່ນຳໃຊ້ເຂົ້າໃນການຈັດການຮຽນ-ການສອນ.<br>- ບົດກວດກາ ແລະ ບົດສອບເສັງ. |
| **ຕົວຊີ້ວັດ 13** | **ຈຳນວນອາຈານສອນຕ້ອງພຽງພໍໃນການຈັດຕັ້ງປະຕິບັດຫຼັກສູດ ແລະ ສອດຄ່ອງກັບຈຳນວນນັກສຶກສາ.** |
| ຈຸດດີ | - ມີຈຳນວນຄູອາຈານທີ່ພຽງພໍໃນການຈັດຕັ້ງປະຕິບັດຫຼັກສູດ.<br>- ຄູ-ອາຈານສອນສຳເລັດການຮຽນ-ການສອນຕາມຫຼັກສູດ.<br>- ມີຈຳນວນຄູອາຈານພຽງພໍ ແລະ ສອດຄ່ອງກັບຈຳນວນນັກສຶກສາ. |
| ຂໍ້ຄົງຄ້າງ | - ອັດຕາສ່ວນຂອງນັກສຶກສາຕໍ່ອາຈານສອນຍັງບໍ່ທັນເໝາະສົມເທົ່າທີ່ຄວນ. |
| ຂໍ້ສະເໜີແນະ | - ອັດຕາສ່ວນໂດຍລວມຂອງນັກສຶກສາຕໍ່ອາຈານສອນຄວນປັບໃຫ້ເໝາະສົມ. |
| ຂໍ້ມູນຫຼັກຖານ | - ສະຖິຕິຄູອາຈານສອນທັງໝົດ.<br>- ຕາຕະລາງການຈັດການຮຽນ-ການສອນ.<br>- ຕາຕະລາງປຽບທຽບອັດຕາສ່ວນນັກຮຽນຕໍ່ຄູ-ອາຈານ.<br>- ປະຕິທິນການຈັດການຮຽນການສອນຂອງ ວດສ.<br>- ປະຕິທິນການຈັດການຮຽນການສອນຂອງກະຊວງສຶກສາທິການ ແລະ ກິລາ. |
| **ຕົວຊີ້ວັດ 14** | **ອາຈານທີ່ປຶກສາການຂຽນບົດລາຍງານຕ້ອງເໝາະສົມທາງດ້ານຄຸນນະພາບ ແລະ** |

| | ປະລິມານ |
|---|---|
| ຈຸດດີ | - ມີການຈັດຕັ້ງການເປັນອາຈານທີ່ປຶກສາການຂຽນບົດລາຍງານຈົບຊັ້ນຂອງນັກສຶກສາປີສຸດທ້າຍໃນແຕ່ລະສົກຮຽນ.<br>- ອາຈານທີ່ເປິກສາມີຄວາມຮູ້ຄວາມສາມາດໃນການໃຫ້ຄຳແນະນຳຕໍ່ການຂຽນບົດລາຍງານຈົບຊັ້ນ.<br>- ມີການແບ່ງປັນຄູອາຈານເໝາະສົມກັບຈຳນວນນັກສຶກສາ. |
| ຂໍ້ຄົງຄ້າງ | - ນະໂຍບາຍ ຫຼື ຫຼັກການໃນການຈັດແບ່ງອາຈານທີ່ປຶກສາ ບາງຄັ້ງຄາວຍັງບໍ່ໄປຕາມຫຼັກການ. |
| ຂໍ້ສະເໜີແນະ | - ຄວນມີນະໂຍບາຍ ຫຼື ຫຼັກການໃນການຈັດແບ່ງອາຈານທີ່ປຶກສາທີ່ເໝາະສົມ. |
| ຂໍ້ມູນຫຼັກຖານ | - ຂໍ້ຕົກລົງຂອງຜູ້ອຳນວຍການວ່າດ້ວຍການແຕ່ງຄູທີ່ເປິກສາຂອງນັກສຶກສາປີສຸດທ້າຍ.<br>- ລາຍຊື່ຄູທີ່ເປິກສາ ແລະ ກຸ່ມຂຽນບົດລາຍງານຈົບຊັ້ນ.<br>- ບັນຊີລາຍຊື່ຄູທີ່ເປິກສາ ແລະ ກວດບົດວິໄຈຂອງນັກສຶກສາປີສຸທ້າຍ.<br>- ຫົວຂໍ້ບົດວິໄຈຕ່າງໆ. |
| **ຕົວຊີ້ວັດ 15** | **ມີການກຳນົດໜ້າວຽກໃຫ້ພະນັກງານຕາມຕຳແໜ່ງຢ່າງຈະແຈ້ງ** |
| ຈຸດດີ | - ມີການກຳນົດໜ້າວຽກໃຫ້ພະນັກງານຄູອາຈານຕາມຕຳແໜ່ງງານຢ່າງຈະແຈ້ງ.<br>- ມີການມອບໝາຍວຽກໃຫ້ໜ່ວຍງານ ແລະ ບຸກຄົນຮັບຜິດຊອບຢ່າງຈະແຈ້ງ. |
| ຂໍ້ຄົງຄ້າງ | - ບາງວຽກງານຍັງຊັກຊ້າບໍ່ຖ່ວງທັນຕາມເວລາເພາະຄູອາຈານເຮົາເຮັດວຽກສອງຕຳແໜ່ງ ຄື: ເຮັດທັງວຽກວິຊາການ ແລະ ບໍລິຫານໄປພ້ອມກັນ. |
| ຂໍ້ສະເໜີແນະ | - ຄວນມີການແບ່ງວຽກໃຫ້ຮັບຜິດຊອບໂດຍກົງວ່າຈະໃຫ້ເຮັດວຽກວິຊາການ ຫຼື ບໍລິຫານ. |
| ຂໍ້ມູນຫຼັກຖານ | - ຂໍ້ຕົກລົງຂອງຫົວໜ້າກົມສ້າງຄູວ່າດ້ວຍການແຕ່ງຕັ້ງພະນັກງານດຳລົງຕຳແໜ່ງຕ່າງໆ.<br>- ຂໍ້ຕົກລົງແຕ່ງຕັ້ງຂອງຜູ້ອຳນວຍການວິທະຍາໄລຄູ ສະຫວັນນະເຂດວ່າດ້ວຍການແຕ່ງຕັ້ງພະນັກງານດຳລົງຕຳແໜ່ງຕ່າງໆພາຍໃນ ວຄສ.<br>- ໜັງສືແຕ່ງຕັ້ງຂອງທ່ານຫົວໜ້າຫ້ອງການຕ່າງໆ (10 ຫ້ອງການ) ໃນວິທະຍາໄລຄູສະຫວັນນະເຂດວ່າດ້ວຍການແບ່ງໜ້າທີຮັບຜິດຊອບໃຫ້ແກ່ບຸກຄະລາກອນໃນຫ້ອງການ.<br>- ບົດສະຫຼຸບການດຳເນີນວຽກງານຕ່າງໆຂອງແຕ່ລະຫ້ອງການ.<br>- ສະຖິຕິຄູສອນແຍກຕາມວິຊາສະເພາະ.<br>- ຈຳນວນໂມງສອນໃນແຕ່ລະໜ່ວຍງານ.<br>- ບົດສະຫຼຸບແຕ່ລະເດືອນຂອງແຕ່ລະຫ້ອງການ.<br>- ຂໍ້ຕົກລົງກ່ຽວກັບການຍ້ອງຍໍພະນັກງານ.<br>- ບົດປະເມີນລັດຖະກອນຄູ. |
| **ຕົວຊີ້ວັດ 16** | **ມີລະບົບປະເມີນຜົນການສອນຂອງຄູອາຈານທີ່ເໝາະສົມ** |
| ຈຸດດີ | - ມີການປະເມີນຜົນການສອນຂອງຄູອາຈານເປັນແຕ່ລະໄລຍະຄື: ພາກຮຽນທີ 1 ແລະ ພາກຮຽນທີ 2.<br>- ນັກຮຽນໄດ້ປະເມີນຄູສອນຕາມລາຍວິຊາທີ່ສອນ. |

| | |
|---|---|
| | - ຄູສອນໄດ້ປະເມີນກັນເອງ.<br>- ຫົວໜ້າຫ້ອງການ, ຄະນະຫ້ອງການສາຍໄດ້ປະເມີນຄູສອນທີ່ສອນໃຫ້ແຕ່ລະສາຍ. |
| ຂໍ້ຄົງຄ້າງ | - ບາງວິທີການປະເມີນແມ່ນບໍ່ຊັດເຈນ. |
| ຂໍ້ສະເໜີແນະ | - ຄວນມີວິທີການຜັນຂະຫຍາຍຜົນການປະເມີນການສິດສອນ ທີ່ແນໃສ່ປະສິດທິພາບ ແລະ ຜົນການຮຽນຮູ້ |
| ຂໍ້ມູນຫຼັກຖານ | - ແບບຟອມການປະເມີນຄູ - ອາຈານ.<br>- ຕາຕະລາງຕິດຕາມການຂຶ້ນຫ້ອງຂອງຄູ - ອາຈານ.<br>- ຜົນການປະເມີນຄູສອນຈາກນັກສຶກສາໃນແຕ່ລະພາກຮຽນ.<br>- ຜົນການປະເມີນຂອງຄູອາຈານ ແລະ ຫົວໜ້າຫ້ອງການ. |
| **ຕົວຊີ້ວັດ 17** | **ມີແຜນພັດທະນາບຸກຄະລາກອນທີ່ຈະແຈ້ງ** |
| ຈຸດດີ | - ມີແຜນພັດທະນາບຸກຄະລາກອນທີ່ຈະແຈ້ງ.<br>- ມີແຜນກຳນົດໃນການພັດທະນາບຸກຄະລາກອນເປັນແຕ່ລະໄລຍະ. |
| ຂໍ້ຄົງຄ້າງ | -ແຜນຍຸດທະສາດ ສຳລັບການພັດທະນາບຸກຄະລາກອນ ຍັງບໍ່ທັນລະອຽດ |
| ຂໍ້ສະເໜີແນະ | - ຄວນມີແຜນຍຸດທະສາດ ສຳລັບການພັດທະນາບຸກຄະລາກອນ ໃນແຕ່ລະປີຢ່າງລະອຽດ |
| ຂໍ້ມູນຫຼັກຖານ | - ແຜນພັດທະນາບຸກຄະລາກອນຂອງວຄສ.<br>- ຜົນການປະເມີນການປະກັນຄຸນະພາບ.<br>- ບົດບັນທຶກ MoU ກັບບັນດາວິທະຍາໄລ ແລະ ມະຫາວິທະຍາໄລຕ່າງໆທັງພາຍໃນ ແລະ ຕ່າງປະເທດ.<br>- ໜັງສືສະເໜີຂໍທຶນການສຶກສາຈາກພາກສ່ວນຕ່າງໆ.<br>- ແຈ້ງການການໄປຮ່ວມເຝິກອົບຮົມຕ່າງໆທັງພາຍໃນ ແລະ ຕ່າງປະເທດ. |
| **ມາດຕະຖານ IV** | **ຫຼັກສູດ** |
| **ຕົວຊີ້ວັດ 18** | **ສະຖາບັນມີລະບົບພັດທະນາຫຼັກສູດທີ່ເໝາະສົມ** |
| ຈຸດດີ | - ມີຫຼັກສູດປະຕິບັດຕາມກົມສ້າງຄູ.<br>- ມີການປັບຫຼັກສູດໃຫ້ເຂົ້າກັບທ້ອງຖິ່ນຂອງຕົນເອງ.<br>- ມີການເຂົ້າຮ່ວມກອງປະຊຸມການນຳໃຊ້ຫຼັກສູດຂອງກົມສ້າງຄູຢູ່ສະເໝີ.<br>- ມີການເຂົ້າຮ່ວມກອງປະຊຸມປັບປຸງຫຼັກສູດຂອງກົມສ້າງຄູຢູ່ສະເໝີ. |
| ຂໍ້ຄົງຄ້າງ | - ຍັງບໍ່ໄດ້ຮັບອະນຸຍາດສ້າງ ຫຼື ປັບປຸງຫຼັກສູດເປັນຂອງສະຖາບັນຕົວເອງ. |
| ຂໍ້ສະເໜີແນະ | - ຄວນມີການປັບປຸງ ແລະພັດທະນາຫຼັກສູດເປັນແຕ່ລະໄລຍະ. |
| ຂໍ້ມູນຫຼັກຖານ | - ຂໍ້ຕົກລົງຂອງທ່ານລັດຖະມົນຕີວ່າດ້ວຍການນຳໃຊ້ຫຼັກສູດຕ່າງໆ.<br>- ໂຄງສ້າງຫຼັກສູດແຕ່ລະສາຍ.<br>- ຂໍ້ຕົກລົງຂອງຜູ້ອຳນວຍການວ່າດ້ວຍຄະນະຮັບຜິດຊອບ ແລະ ຜູ້ເຂົ້າຮ່ວມກອງປະຊຸມແນະນຳການນຳໃຊ້ຫຼັກສູດໃໝ່.<br>- ຂໍ້ຕົກລົງຂອງຜູ້ອຳນວຍການວ່າດ້ວຍການແຕ່ງຕັ້ງປະທານ, ກຳມະການ ໃນການປັບປຸງຫຼັກສູດ.<br>- ຂໍ້ຕົກລົງຂອງຜູ້ອຳນວຍການວ່າດ້ວຍການແຕ່ງຕັ້ງຄະນະອາຈານເຂົ້າຮ່ວກອງປະຊຸມ |

| | |
|---|---|
| | ການຂຽນຫຼັກສູດການສອນ.<br>- ເນື້ອໃນໂຄງສ້າງຫຼັກສູດຕ່າງໆ. |
| **ຕົວຊີ້ວັດ 19** | **ບັນດາຫຼັກສູດທີ່ຖືກພັດທະນາຂຶ້ນມາໄດ້ກຳນົດຜົນການຮຽນຮູ້ຢ່າງຈະແຈ້ງ ແລະ ສອດຄ່ອງກັບຂອບຄຸນວຸດທິແຫ່ງຊາດ** |
| ຈຸດດີ | - ແຕ່ລະຫຼັກສູດທີ່ຖືກພັດທະນາຂຶ້ນມານັ້ນໄດ້ກຳນົດຜົນຮຽນຮູ້ຢ່າງຈະແຈ້ງ.<br>- ຫຼັກສູດທີ່ພັດທະນາຂຶ້ນມາສອດຄ່ອງກັບຂອບຄຸນວຸດທິແຫ່ງຊາດ ແລະ ມາດຕະຖານຫຼັກສູດເຊິ່ງການພັດທະນາຫຼັກສູດແມ່ນໄດ້ປະຕິບັດຕາມກົມສ້າງຄູກຳນົດ. |
| ຂໍ້ຄົງຄ້າງ | - ນຳໃຊ້ຫຼັກສູດສ່ວນກາງຂອງກົມສ້າງຄູ. |
| ຂໍ້ສະເໜີແນະ | - ຢາກລອງພັດທະນາຫຼັກສູດ ແລະ ນຳໃຊ້ຫຼັກສູດຂອງຕົນເອງ. |
| ຂໍ້ມູນຫຼັກຖານ | - ລາຍຊື່ຫຼັກສູດແຕ່ລະວິຊາ |
| **ຕົວຊີ້ວັດ 20** | **ບັນດາຫຼັກສູດທີ່ຖືກພັດທະນາຂຶ້ນມາສອດຄ່ອງກັບສະພາບຄວາມເປັນຈິງຂອງທ້ອງຖິ່ນ, ຕະຫຼາດແຮງງານ ແລະ ການພັດທະນາຊັບພະຍາກອນມະນຸດຂອງປະເທດ** |
| ຈຸດດີ | - ບັນດາຫຼັກສູດທີ່ຖືກພັດທະນາຂຶ້ນມາສອດຄ່ອງກັບສະພາບຄວາມເປັນຈິງຂອງທ້ອງຖິ່ນ.<br>- ບັນດາຫຼັກສູດທີ່ຖືກພັດທະນາຂຶ້ນມາສອດຄ່ອງກັບຕະຫຼາດແຮງງານ.<br>- ບັນດາຫຼັກສູດທີ່ຖືກພັດທະນາຂຶ້ນມາສອດຄ່ອງກັບການພັດທະນາຊັບພະຍາກອນມະນຸດຂອງປະເທດ. |
| ຂໍ້ຄົງຄ້າງ | - ບໍ່ໄດ້ມີການສຶກສາຄວາມພໍໃຈຂອງຜູ້ຈ້າງງານຕໍ່ນັກສຶກສາທີ່ຈົບໄປ. |
| ຂໍ້ສະເໜີແນະ | - ຄວນມີບົດສຶກສາຄວາມພໍໃຈຂອງຜູ້ຈ້າງງານຕໍ່ນັກສຶກສາທີ່ຈົບໄປ. |
| ຂໍ້ມູນຫຼັກຖານ | - ຊື່ຫຼັກສູດແຕ່ລະລະບົບ, ແຕ່ລະສາຍ.<br>- ບົດວິພາກການຂໍອະນຸມັດເປີດສອນຫຼັກສູດ (ການເປີດຫຼັກສູດແມ່ນອີງໃສ່ກົມສ້າງຄູເປັນຜູ້ກຳນົດ (ສະຖາບັນບໍ່ສາມາດສ້າງຂຶ້ນເອງໄດ້).<br>- ສະຖິຕິການບັນຈຸເຮັດວຽກຂອງນັກສຶກສາທີ່ຈົບຈາກ ວຄສ ທັງສອງແຂວງ (ແຂວງສະຫວັນນະເຂດ ແລະ ຄຳມ່ວນ). |
| **ຕົວຊີ້ວັດ 21** | **ບັນດາຫຼັກສູດສົ່ງເສີມການຮຽນຮູ້ຕະຫຼອດຊີວິດ ໂດຍສົ່ງເສີມການຮຽນຮູ້ພາສາຕ່າງປະເທດ, ທັກສະໃນການຊອກຄົ້ນຂໍ້ມູນຂ່າວສານ, ການຄົ້ນຄິດດ້ວຍຕົນເອງ, ການສະແດງແນວຄິດ ແລະ ມີຄວາມມັກໃນການຮຽນຮູ້** |
| ຈຸດດີ | - ບັນດາຫຼັກສູດໄດ້ມີການສົ່ງເສີມການຮຽນຮູ້ຕະຫຼອດຊີວິດ.<br>- ບັນດາຫຼັກສູດໄດ້ມີການສົ່ງເສີມການຮຽນຮູ້ພາສາຕ່າງປະເທດ.<br>- ບັນດາຫຼັກສູດໄດ້ມີການສົ່ງເສີມທັກສະໃນການຊອກຄົ້ນຂໍ້ມູນຂ່າວສານ.<br>- ບັນດາຫຼັກສູດໄດ້ມີການສົ່ງເສີມການຄົ້ນຄິດດ້ວຍຕົນເອງ.<br>- ບັນດາຫຼັກສູດໄດ້ມີການສົ່ງເສີມການສະແດງແນວຄິດ.<br>- ບັນດາຫຼັກສູດໄດ້ມີການສົ່ງເສີມໃຫ້ມີຄວາມມັກໃນການຮຽນຮູ້. |
| ຂໍ້ຄົງຄ້າງ | - ຄວນມີການປັບປຸງຫຼັກສູດເປັນແຕ່ລະໄລຍະ. |
| ຂໍ້ສະເໜີແນະ | - ຄວນມີການປະເມີນການຈັດຕັ້ງປະຕິບັດຫຼັກສູດໃນແຕ່ລະສົກຮຽນ. |

| | |
|---|---|
| ຂໍ້ມູນຫຼັກຖານ | - ຂໍ້ຕົກລົງຂອງຜູ້ອຳນວຍການວ່າດ້ວຍຜູ້ເຂົ້າຮ່ວມກອງປະຊຸມແນະນຳ ແລະ ເຜີຍແຜ່ການນຳໃຊ້ຫຼັກສູດ.<br>- ບົດໂຄງການບຳລຸງນັກຮຽນອ່ອນ.<br>- ບົດໂຄງທັດສະນະສຶກສານອກສະຖານ.<br>- ບົດໂຄງການເປີດການຮຽນ-ການສອນເພີ່ມພາສາອັງກິດພາກພັກແລ້ງ.<br>- ຕາຕະລາງສອນເພີ່ມພາສາອັງກິດພາກພັກແລ້ງ.<br>- ໜັງສືເຊີນຂອງປະເທດໄທ, ຫວຽດນາມ ເຂົ້າຮ່ວມແລກປ່ຽນທາງດ້ານວັດທະນະທຳ.<br>- ຮູບພາບຂອງນັກສຶກສານຳໃຊ້ຫ້ອງທົດລອງ, ຫ້ອງຟັງສຽງ, ຫ້ອງເຝິກສອນ.....<br>- ຮູບພາບຂອງນັກສຶກສາເຮັດກິດຈະກຳເສີມສວຍ, ຕັດຜົມ, ປູກຝັງ, ລ້ຽງສັດ, ເຮັດດິນປູ່ອກ, ເຮັດໂຕໜອນປູທາງ,<br>- ໜັງສືລາຍງານພາກສະໜາມຂອງຄູນຳພາ.<br>- ບົດລາຍງານຂອງນັກສຶກສາລົງພາກສະໜາມ. |
| **ຕົວຊີ້ວັດ 22** | **ສະຖາບັນມີຂະບວນການທົບທວນຫຼັກສູດ ໂດຍການມີສ່ວນຮ່ວມທັງພາຍໃນ ແລະ ພາຍນອກ** |
| ຈຸດດີ | - ສະຖາບັນໄດ້ມີການຈັດກອງປະຊຸມເຜີຍແຜ່ການນຳໃຊ້ຫຼັກສູດ.<br>- ສະຖາບັນໄດ້ມີສ່ວນຮ່ວມໃນການທົບທວນຫຼັກສູດຂອງກົມສ້າງຄູ.<br>- ສະຖາບັນໄດ້ໄປຮ່ວມຂະບວນການທົບທວນຫຼັກສູດທີ່ກົມສ້າງຄູສ້າງຄູຈັດຂຶ້ນ. |
| ຂໍ້ຄົງຄ້າງ | - ບາງຫຼັກສູດບໍ່ເຫດເໝາະກັບສາຍວິຊາທີ່ຮຽນ. |
| ຂໍ້ສະເໜີແນະ | - ຄວນມີການປັບໃຫ້ເຫດເໝາະກັບສາຍວິຊາຮຽນ. |
| ຂໍ້ມູນຫຼັກຖານ | - ຂໍ້ຕົກລົງຂອງຜູ້ອຳນວຍການວ່າດ້ວຍຜູ້ເຂົ້າຮ່ວມກອງປະຊຸມທົບທວນຫຼັກສູດ.<br>- ໜັງສືແຈ້ງການ ຂອງກົມສ້າງຄູ ເຖິງຜູ້ອຳນວຍການ ເລື່ອງການເຂົ້າຮ່ວມປັບປຸງຫຼັກສູດ.<br>- ໜັງສືແຈ້ງການຫ້ອງການ ກະຊວງສຶກສາທິການ ແລະ ກິລາ ເລື່ອງ ການປະຕິບັດຫຼັກສູດ ແລະ ປຶ້ມຄູ່ມື ການຮຽນ-ການສອນຂອງແຕ່ລະວິຊາ. |
| **ມາດຕະຖານ V** | **ປະສິດທິຜົນຂອງການຮຽນ-ການສອນ** |
| **ຕົວຊີ້ວັດ 23** | **ສະຖາບັນມີກົນໄກເພື່ອຕິດຕາມການຮຽນ-ການສອນ ແລະ ຮັບຟັງຄຳຄິດຄຳເຫັນຈາກພາກສ່ວນຕ່າງໆ ກ່ຽວກັບປະສິດທິຜົນຂອງການຮຽນ-ການສອນ** |
| ຈຸດດີ | - ສະຖາບັນໄດ້ມີການຕິດຕາມການຮຽນ-ການສອນຂອງຄູ ແລະ ນັກຮຽນ.<br>- ສະຖາບັນໄດ້ມີການຮັບຟັງຄຳຄິດຄຳເຫັນຈາກພາກສ່ວນຕ່າງໆ ກ່ຽວກັບປະສິດທິຜົນຂອງການຮຽນ-ການສອນ. |
| ຂໍ້ຄົງຄ້າງ | - ລະບົບຕິດຕາມການຮຽນ-ການສອນຂອງຄູ ແລະ ນັກຮຽນຍັງບໍ່ໄດ້ດີ ແລະ ຊັດເຈນເທົ່າທີ່ຄວນ. |
| ຂໍ້ສະເໜີແນະ | - ຄວນພັດທະນາລະບົບຕິດຕາມການຮຽນ-ການສອນຂອງຄູ ແລະ ນັກຮຽນໃຫ້ຊັດເຈນຂຶ້ນ. |
| ຂໍ້ມູນຫຼັກຖານ | - ຂໍ້ຕົກລົງຂອງຜູ້ອຳນວຍການວ່າດ້ວຍຄະນະຮັບຜິດຊອບການຕິດຕາມ, ປະເມີນຜົນການຮຽນ-ການສອນ ແລະ ຕິດຕາມປະເມີນການປະຕິບັດຫຼັກສູດການຮຽນ-ການສອນ |

| | |
|---|---|
| | ຂອງຄູ-ອາຈານໃນແຕ່ລະສົກຮຽນ.<br>- ບົດສະຫຼຸບການຈັດຕັ້ງປະຕິບັດວຽກງານວິຊາການແຕ່ລະສົກຮຽນ.<br>- ຕາຕະລາງຕິດຕາມການຂຶ້ນຫ້ອງສອນຂອງຄູອາຈານ. |
| **ຕົວຊີ້ວັດ 24** | **ການຮຽນ-ການສອນນຳໃຊ້ເຕັກໂນໂລຊີ, ສື່ຕ່າງໆ ແລະ ຮູບແບບເອົານັກສຶກສາເປັນໃຈກາງ** |
| ຈຸດດີ | - ສະຖາບັນມີເຕັກໂນໂລຊີທີ່ຫຼາກຫຼາຍ ແລະ ທັນສະໄໝພໍສົມຄວນ.<br>- ສະຖາບັນມີຄວາມສະດວກໃນການນຳໃຊ້ສື່ຕ່າງໆທີ່ເໝາະສົມ ແລະ ທັນສະໄໝພໍສົມຄວນ.<br>- ສະຖາບັນໄດ້ຖືເອົາການຈັດການຮຽນ-ການສອນແບບເອົານັກຮຽນເປັນໃຈກາງເປັນຫຼັກ. |
| ຂໍ້ຄົງຄ້າງ | - ຄູ-ອາຈານບາງຄົນຍັງນຳໃຊ້ເຕັກໂນໂລຊີ, ສື່ຕ່າງໆ ແລະ ຮູບແບບເອົານັກສຶກສາເປັນໃຈກາງບໍ່ຫຼາຍ. |
| ຂໍ້ສະເໜີແນະ | - ຄວນຈັດຝຶກອົບຮົມວິທີການນຳໃຊ້ເຕັກໂນໂລຊີ, ສື່ຕ່າງໆ ແລະ ຮູບແບບເອົານັກສຶກສາເປັນໃຈກາງໃນແຕ່ລະສົກຮຽນ. |
| ຂໍ້ມູນຫຼັກຖານ | - ຂໍ້ຕົກລົງຂອງຜູ້ອຳນວຍການວ່າດ້ວຍການນຳໃຊ້ Smart board.<br>- ຂໍ້ຕົກລົງຂອງຜູ້ອຳນວຍການວ່າດ້ວຍການນຳໃຊ້ຫ້ອງທົດລອງ.<br>- ຂໍ້ຕົກລົງຂອງຜູ້ອຳນວຍການວ່າດ້ວຍການນຳໃຊ້ຫ້ອງຟັງສຽງ.<br>- ຂໍ້ຕົກລົງຂອງຜູ້ອຳນວຍການວ່າດ້ວຍການນຳໃຊ້ຫ້ອງຄອມພິວເຕີ.<br>- ໃບສັນຍາການເຊົ່າອິນເຕີເນັດ.<br>- ແຜນຜັງລະບົບການແຈກຢາຍອິນເຕີເນັດໃຫ້ແຕ່ລະຫ້ອງການ. |
| **ຕົວຊີ້ວັດ 25** | **ມີການຈັດສັນສະຖານທີ່ການລົງເຝິກງານຂອງນັກສຶກສາຢ່າງເໝາະສົມ ແລະ ພຽງພໍ** |
| ຈຸດດີ | - ມີສະຖານທີ່ພຽງພໍສຳລັບນັກສຶກສາລົງເຝິກງານໃນທຸກສາຍທຸກສົກຮຽນ.<br>- ມີສະຖານທີ່ເໝາະສົມ ແລະ ສະດວກສະບາຍສຳລັບນັກນັກສຶກສາລົງເຝິກງານ.<br>- ສະຖານທີ່ສະດວກສະບາຍຕໍ່ຄູອາຈານໃນການລົງຊຸກຍູ້, ຕິດຕາມການໃຫ້ຄະແນນ. |
| ຂໍ້ຄົງຄ້າງ | - ບາງພື້ນທີ່ທີ່ລົງເຝິກງານຍັງເປັນເຂດທຸລະກັນດານ. |
| ຂໍ້ສະເໜີແນະ | - ຄວນຕິດຕາມເບິ່ງຄືນສະຖານທີ່ ຄວນມີການເລືອກເຂດທີ່ເໝາະສົມ. |
| ຂໍ້ມູນຫຼັກຖານ | - ແຜນເຝິກຫັດວິຊາຊີບປະຈຳແຕ່ລະສົກຮຽນ.<br>- ປະຕິທິນເຄື່ອນໄຫວວຽກງານເຝິກຫັດວິຊາຊີບ.<br>- ຂໍ້ຕົກລົງຂອງຜູ້ອຳນວຍການວ່າດ້ວຍການແຕ່ງຕັ້ງຄະນະຄູອາຈານລົງເກັບກຳຂໍ້ມູນສະຖານທີ່ເອົານັກສຶກສາຄູລົງເຝິກຫັດ.<br>- ຂໍ້ຕົກລົງຂອງຜູ້ອຳນວຍການວ່າດ້ວຍການແຕ່ງຕັ້ງຄະນະຄູອາຈານນິເທດວຽກງານເຝິກຫັດວິຊາຊີບ.<br>- ຂໍ້ຕົກລົງຂອງຜູ້ອຳນວຍການວ່າດ້ວຍການແຕ່ງຕັ້ງຄະນະຄູອາຈານລົງຊຸກຍູ້ ແລະ ຕິດຕາມວຽກງານເຝິກຫັດ.<br>- ຂໍ້ຕົກລົງຂອງຜູ້ອຳນວຍການວ່າດ້ວຍການແຕ່ງຕັ້ງຄະນະຄູອາຈານລົງຕິດຕາມ, ກວດກາ, ປະເມີນ ແລະ ໃຫ້ຄະແນນນັກເຝິກຫັດ. |

| ມາດຕະຖານ VI | ການສົ່ງເສີມນັກສຶກສາ |
|---|---|
| **ຕົວຊີ້ວັດ 26** | **ມີລະບຽບຫຼັກການ, ມາດຕະຖານຈະແຈ້ງໃນການຮັບນັກສຶກສາເຂົ້າຮຽນຢູ່ສະຖາບັນ** |
| ຈຸດດີ | - ມີມາດຕະຖານ ແລະ ເງື່ອນໄຂຂອງຜູ້ທີ່ຈະເຂົ້າຮຽນລະອຽດ.<br>- ວິທີການຄັດເລືອກແມ່ນມີຄວາມສອດຄ່ອງ ແລະ ເໝາະສົມ. |
| ຂໍ້ຄົງຄ້າງ | - ນັກສຶກສາໂຄຕາຈາກເມືອງແມ່ນມີລະດັບຄວາມຮູ້ບໍ່ສອດຄ່ອງ. |
| ຂໍ້ສະເໜີແນະ | - ຄວນມີການຄັດເລືອກໃຫ້ເໝາະສົມ ແລະ ສອດຄ່ອງຕາມລະດັບຄວາມຮູ້ຕົວຈິງ. |
| ຂໍ້ມູນຫຼັກຖານ | - ແຈ້ງການຂອງກະຊວງສຶກສາ ເລື່ອງການສອບເສັງຄັດເລືອກເອົານັກຮຽນ.<br>- ແຈ້ງການຂອງກົມສ້າງຄູ ເລື່ອງການສອບເສັງຄັດເລືອກເອົານັກຮຽນຄູ ແລະ ການຮັບເອົານັກຮຽນຄູ.<br>- ຂໍ້ຕົກລົງຂອງຜູ້ອຳນວຍການວ່າດ້ວຍການແຕ່ງຕັ້ງຄະນະຮັບນັກສຶກສາໃໝ່.<br>- ແຜນແບ່ງປັນນັກຮຽນເຂົ້າຮຽນຄູຕາມຫຼັກສູດສາຍປົກກະຕິ ແລະ ພະນັກງານຄູສອນຂອງກົມສ້າງຄູ.<br>- ແຈ້ງການຂອງຫ້ອງການກະຊວງສຶກສາທິການ ແລະ ກິລາ ເລື່ອງເງື່ອນໄຂຜູ້ເຂົ້າຮຽນຫຼັກສູດຕໍ່ເນື່ອງພັກແລ້ງ ສາຍຄູ ອະນຸບານ ແລະ ປະຖົມ.<br>- ຂໍ້ຕົກລົງຂອງຜູ້ອຳນວຍການ ວ່າດ້ວຍຄະນະຮັບຜິດຊອບການສອບເສັງຄັດເລືອກນັກຮຽນເຂົ້າຮຽນ ທີ່ ວິທະຍາໄລຄູ ສະຫວັນນະເຂດ.<br>- ແຈ້ງການແນະນຳເພີ່ມເຕີມຂອງລັດຖະມົນຕີກະຊວງສຶກສາທິການ ແລະ ກິລາ ເລື່ອງການຄັດເລືອກນັກຮຽນເຂົ້າຮຽນຄູ ແຕ່ລະສົກຮຽນ.<br>- ໜັງສືລາຍງານຂອງວິທະຍາໄລຄູ ເຖິງຫົວໜ້າກົມສ້າງຄູ ເລື່ອງການຮັບນັກສຶກສາໃໝ່ເຂົ້າຮຽນ ວິທະຍາໄລຄູ ສະຫວັນນະເຂດແຕ່ລະສົກຮຽນ.<br>- ໃບນຳສົ່ງນັກຮຽນຂອງບັນດາພະແນກສຶກສາແຂວງ ເຂົ້າຮຽນໃນຕາມຜົນການຊຸບຊ້ອນເຂົ້າ ວິທະຍາໄລຄູ ສະຫວັນນະເຂດ.<br>-ໜັງສືແຈ້ງການປະຊາສຳພັນທາງວິທະຍຸ, ໂທລະພາບ, ເວັບໄຊ ແລະ Facebook ກ່ຽວກັບເງື່ອນໄຂແລະມາດຖານຂອງຜູ້ທີ່ຈະເຂົ້າຮຽນວິທະຍາໄລຄູສະຫວັນນະເຂດ. |
| **ຕົວຊີ້ວັດ 27** | **ສະຖາບັນເຫັນຄວາມສຳຄັນ ແລະ ມີກົນໄກໃນການໃຫ້ຄຳປຶກສາທາງດ້ານວິຊາການ ແລະ ບັນຫາອື່ນໆ** |
| ຈຸດດີ | - ມີການໃຫ້ຄຳເປິກສາດ້ານວິຊາການ ແລະ ບັນຫາອື່ນໆຕໍ່ນັກຮຽນ-ນັກສຶກສາ.<br>- ມີການສົ່ງເສີມຜູ້ຮຽນ.<br>- ມີຄູແນະແນວໃຫ້ນັກສຶກສາໃໝ່.<br>- ມີຄູທີ່ເປິກສາໃນແຕ່ລະຫ້ອງ.<br>- ມີຄະນະນັກສຶກສາຄອຍໃຫ້ຄວາມຊ່ວຍເຫຼືອແນະນຳນັກສຶກສາຮຸ່ນນ້ອງ. |
| ຂໍ້ຄົງຄ້າງ | - ຄູແນະແນວບໍ່ພຽງພໍ |
| ຂໍ້ສະເໜີແນະ | - ຄວນຈັດເຝິກອົບຮົມໂດຍໃຫ້ຄູແນະແນວເກົ່າເຝິກໃຫ້ຄູໃໝ່ໃນຮຸ່ນຕໍ່ໄປ. |
| ຂໍ້ມູນຫຼັກຖານ | - ຂໍ້ຕົກລົງຂອງຜູ້ອຳນວຍການວ່າດ້ວຍການແຕ່ງຕັ້ງຄູທີ່ປຶກສາ.<br>- ຂໍ້ຕົກລົງຂອງຜູ້ອຳນວຍການວ່າດ້ວຍການແຕ່ງຕັ້ງຄະນະຮັບຜິດຊອບແຕ່ລະຕຶກ.<br>- ຂໍ້ຕົກລົງຂອງຜູ້ອຳນວຍການວ່າດ້ວຍການແຕ່ງຕັ້ງຄະນະນັກສຶກສາ. |

| | |
|---|---|
| | - ຂໍ້ຕົກລົງຂອງຜູ້ອຳນວຍການວ່າດ້ວຍການແຕ່ງຕັ້ງຄະນະຮັບຜິດຊອບ ແລະ ເຂົ້າຮ່ວມກອງປະຊຸມນິເທດກົດລະບຽບໃຫ້ນັກສຶກສາ.<br>- ຂໍ້ຕົກລົງຂອງຫົວໜ້າຫ້ອງການສາຍວ່າດ້ວຍການແຕ່ງຕັ້ງຄູທີ່ປຶກສາແຕ່ລະຫ້ອງ.<br>- ປຶ້ມກົດລະບຽບຂອງນັກສຶກສາວິທະຍາໄລຄູ ສະຫວັນນະເຂດ.<br>- ກົດລະບຽບຂອງຫໍພັກລວມຂອງວິທະຍາໄລຄູ ສະຫວັນນະເຂດ.<br>- ບົດບາດ ແລະ ໜ້າທີ່ຂອງຄູທີ່ປຶກສາ.<br>- ບົດສະຫຼຸບ ແລະ ແຜນການປະຈຳເດືອນວຽກງານຄູປະຈຳຫ້ອງ.<br>- ບົດໂຄງການບຳລຸງນັກຮຽນອ່ອນ.<br>- ຂໍ້ຕົກລົງຍ້ອງຍໍນັກສຶກສາໃນແຕ່ລະສົກຮຽນ.<br>- ຂໍ້ຕົກລົງປະຕິບັດວິໄນຕໍ່ນັກສຶກສາທີ່ຜິດລະບຽບ. |
| **ຕົວຊີ້ວັດ 28** | **ມີແຜນການເຄື່ອນໄຫວນອກຫຼັກສູດ, ໄດ້ຜັນຂະຫຍາຍອອກເປັນແຜນກິດຈະກຳ ແລະ ອຳນວຍຄວາມສະດວກໃຫ້ແກ່ການຈັດຕັ້ງປະຕິບັດ** |
| ຈຸດດີ | -ມີແຜນກິດຈະກຳການເຄື່ອນໄຫວນອກຫຼັກສູດຂອງສະຖາບັນໃນທຸກໆສົກຮຽນ.<br>- ໄດ້ປະຕິບັດຕາມແຜນທັນຕາມເວລາທີ່ໄດ້ກຳນົດໄວ້.<br>- ຄະນະພັກ, ຄະນະອຳນວຍການໄດ້ອຳນວຍຄວາມສະດວກທາງດ້ານງົບປະມານໃນການຈັດຕັ້ງປະຕິບັດຢ່າງເຕັມສ່ວນ.<br>- ມີການເຄື່ອນໄຫວອີງການຈັດຕັ້ງມະຫາຊົນເຊັ່ນ: ຊາວໜຸ່ມ, ເພດຍິງ ແລະ ກຳມະບານ<br>- ມີການພົວພັນລະຫວ່າງສະຖາບັນກັບອະດີດນັກສຶກສາ.<br>- ມີການເຄື່ອນໄຫວກິລາ, ສິລະປະກັບພາຍໃນແຂວງ, ຕ່າງແຂວງ ແລະ ຕ່າງປະເທດ. |
| ຂໍ້ຄົງຄ້າງ | - ແຜນການ ຫຼື ຕາຕະລາງການເຄື່ອນໄຫວຕ່າງໆຍັງບໍ່ທັນລະອຽດ |
| ຂໍ້ສະເໜີແນະ | - ຄວນມີແຜນການ ຫຼື ຕາຕະລາງການເຄື່ອນໄຫວຕ່າງໆໃຫ້ລະອຽດຕື່ມ. |
| ຂໍ້ມູນຫຼັກຖານ | - ຂໍ້ຕົກລົງຂອງຜູ້ອຳນວຍການວ່າດ້ວຍຄະນະຮັບຜິດຊອບວຽກງານກິລາ ແລະ ເຂົ້າຮ່ວມກິລາ.<br>- ໂຄງການຂະບວນການແຂ່ງຂັນກິລາ ແລະ ສິລະປະຫ້ອງການອະນຸບານ-ປະຖົມ.<br>- ໂຄງການຂະບວນການແຂ່ງຂັນກິລາ ແລະ ສິລະປະຫ້ອງການທຳມະຊາດ.<br>- ໂຄງການຂະບວນການແຂ່ງຂັນກິລາ ແລະ ສິລະປະຫ້ອງການວິທະຍາສາດສັງຄົມ.<br>- ໂຄງການຂະບວນການແຂ່ງຂັນກິລາ ແລະ ສິລະປະຫ້ອງການພາສາຕ່າງປະເທດ.<br>- ໂຄງການຂະບວນການແຂ່ງຂັນກິລາ ແລະ ສິລະປະຫ້ອງການກິດຈະການນັກສຶກສາ.<br>- ຂໍ້ຕົກລົງຂອງຜູ້ອຳນວຍການວ່າດ້ວຍການແຕ່ງຕັ້ງຄະນະຮັບຜິດຊອບຂະບວນການຈັດກິດຈະກຳຖາມ-ຕອບຄຳຖາມວິທະຍາສາດທຸກສາຍ.<br>- ໂຄງການຈັດກິດຈະກຳນອກຫຼັກສູດເຊັ່ນ: ສະແດງລະຄອນ ແລະ ຖາມຕອບວິທະຍາສາດທຸກສາຍ.<br>- ຮູບພາບການມອບລາງວັນ ແລະ ການແຂ່ງຂັນກິລາ. |
| **ຕົວຊີ້ວັດ 29** | **ມີການຈັດຕັ້ງນັກຮຽນນັກສຶກສາ ແລະ ໄດ້ເຄື່ອນໄຫວຢ່າງເຕັມສ່ວນຕໍ່ບັນດາກິດຈະກຳຕ່າງໆ ຂອງສະຖາບັນ** |
| ຈຸດດີ | - ມີການແຕ່ງຕັ້ງປະທານ ແລະ ຄະນະນັກສຶກສາ. |

| | |
|---|---|
| | - ນັກສຶກສາໝົດທຸກຄົນໄດ້ມີສ່ວນຮ່ວມໃນການເຄື່ອນໄຫວກິດຈະກຳຕ່າງໆທີ່ທາງສະຖາບັນໄດ້ຈັດຂຶ້ນເຊັ່ນ: ສິລະປະ, ກິລາ, ປູກຝັງລ້ຽງສັດ, ເສີມສວຍ, ຕັດຜົມ, ຜະລິດດິນປູ່ອກ, ຜະລິດໂຕໜອນປູທາງ ແລະ ແຕ່ງກິນ. |
| ຂໍ້ຄົງຄ້າງ | - ການເຄື່ອນໄຫວຕ່າງໆຂອງອົງກອນຕາງໜ້ານັກສຶກສາ ຍັງບໍ່ທັນໄດ້ປະຕິບັດເທື່ອ. |
| ຂໍ້ສະເໜີແນະ | - ຄວນໃຫ້ມີການເຄື່ອນໄຫວຕ່າງໆຂອງອົງກອນຕາງໜ້ານັກສຶກສາ. |
| ຂໍ້ມູນຫຼັກຖານ | - ແຜນອາດລະບົບການຈັດຕັ້ງປະທານ ແລະ ຄະນະນັກສຶກສາ.<br>- ຂໍ້ຕົກລົງແຕ່ງຕັ້ງປະທານ ແລະ ຄະນະນັກສຶກສາ.<br>- ຂໍ້ຕົກລົງຂອງຜູ້ອຳນວຍການ ວ່າດ້ວຍການແບ່ງເຂດຮັບຜິດຊອບສິ່ງແວດລ້ອມຂອງໂຮງຮຽນ.<br>- ໂຄງການ, ແຜນການເຄື່ອນໄຫວກິດຈະກຳຂອງແຕ່ລະຫ້ອງການສາຍ.<br>- ໂຄງການ, ແຜນການຈັດກິດຈະກຳເຄື່ອນໄຫວວຽກງານຕ່າງໆຂອງຫ້ອງການກິດຈະການສຶກສາ. |
| **ຕົວຊີ້ວັດ 30** | **ມີອົງການຈັດຕັ້ງມະຫາຊົນ ແລະ ມີການເຄື່ອນໄຫວຢ່າງເຕັມສ່ວນເຂົ້າໃນກິດຈະກຳຕ່າງໆ** |
| ຈຸດດີ | - ມີການຈັດຕັ້ງອົງການຊາວໜຸ່ມຂອງສະຖາບັນ.<br>- ມີການຈັດຕັ້ງອົງການສະຫະພັນແມ່ຍິງຂອງສະຖາບັນ.<br>- ມີການຈັດຕັ້ງອົງການກຳມະບານຂອງສະຖາບັນ.<br>- ນັກສຶກສາທີ່ເປັນສະມາຊິກຂອງອົງການຈັດຕັ້ງດັ່ງກ່າວໄດ້ເຂົ້າຮ່ວມເຄື່ອນໄຫວທຸກກິດຈະກຳທີ່ທາງສະຖາບັນໄດ້ຈັດຂຶ້ນ. |
| ຂໍ້ຄົງຄ້າງ | - ການຂະຫຍາຍສະມາຊິກອົງການຈັດຕັ້ງມະຫາຊົນຍັງໜ້ອຍ. |
| ຂໍ້ສະເໜີແນະ | - ຄວນຂະຫຍາຍສະມາຊິກຂອງທຸກໆອົງການຈັດຕັ້ງໃຫ້ຫຼາຍຂຶ້ນ. |
| ຂໍ້ມູນຫຼັກຖານ | - ເອກະສານວຽກງານຂອງ3 ອົງການຈັດຕັ້ງ (ຊາວໜຸ່ມ, ກຳມະບານ ແລະ ແມ່ຍິງ).<br>- ກົດລະບຽບຂອງຮາກຖານຊາວໜຸ່ມ, ແມ່ຍິງ ແລະ ກຳມະບານວິທະຍາໄລຄູ ສະຫວັນນະເຂດ.<br>- ປະຕິທິນການເຄື່ອນໄຫວຮາກຖານຊາວໜຸ່ມວິທະຍາໄລຄູ ສະຫວັນນະເຂດ.<br>- ລະບົບການຈັດຕັ້ງຄະນະບໍລິຫານງານຮາກຖານຊາວໜຸ່ມວິທະຍາໄລຄູ ສະຫວັນນະເຂດ.<br>- ລະບົບການຈັດຕັ້ງຄະນະບໍລິຫານງານຮາກຖານແມ່ຍິງວິທະຍາໄລຄູ ສະຫວັນນະເຂດ.<br>- ລະບົບການຈັດຕັ້ງຄະນະບໍລິຫານງານຮາກຖານກຳມະບານວິທະຍາໄລຄູ ສະຫວັນນະເຂດ. |
| **ຕົວຊີ້ວັດ 31** | **ມີການຮ່ວມມືກັບອາດີດນັກສຶກສາທີ່ຈົບຈາກສະຖາບັນໃນຮູບແບບຕ່າງໆ ແລະ ໄດ້ຈັດຕັ້ງປະຕິບັດປົກກະຕິ** |
| ຈຸດດີ | - ມີການປະສານງານກັບອະດີດນັກສຶກສາທີ່ຈົບຈາກສະຖາບັນໃນການເຄື່ອນໄຫວກິດຈະກຳກິລາ ແລະ ງານສະເຫຼີມສະຫຼອງວັນສຳຄັນຕ່າງໆເຊັ່ນ: ວັນຄູແຫ່ງຊາດ, ວັນປີໃໝ່ສາກົນ ແລະ ປີໃໝ່ລາວ, ວັນເປີດສົກຮຽນໃໝ່ຂອງສະຖາບັນ, ວັນເປີດກິດຈະກຳຂອງສະຖາບັນ, ວັນແມ່ຍິງສາກົນ ແລະ ອື່ນໆ.<br>- ໄດ້ປະສານຂໍການຊ່ວຍເຫຼືອສົມທົບທຶນເຊັ່ນ: ການປັວແປງອາຄານສະຖານທີ່ຮຽນ, |

| | |
|---|---|
| | ອຸປະກອນທົດລອງປະກອບການຮຽນ-ການສອນແລະ ສິ່ງອຳນວຍຄວາມສະດວກອື່ນໆ ຕາມຄວາມເໝາະສົມ. |
| ຂໍ້ຄົງຄ້າງ | - ການເຄື່ອນໄຫວກິດຈະກຳໃນຮູບແບບຕ່າງໆລະຫວ່າງສະຖາບັນ ແລະ ອະດີດນັກສຶກສາ ຍັງບໍ່ໄດ້ປະຕິບັດເປັນປົກກະຕິ. |
| ຂໍ້ສະເໜີແນະ | - ຄວນມີການປະສານງານຈັດກິດຈະກຳໃນຮູບແບບຕ່າງໆລະຫວ່າງສະຖາບັນ ແລະ ອະດີດນັກສຶກສາໃຫ້ເປັນປົກກະຕິ. |
| ຂໍ້ມູນຫຼັກຖານ | - ຂໍ້ຕົກລົງຂອງຜູ້ອຳນວຍການວ່າດ້ວຍການແຕ່ງຕັ້ງຄະນະຮັບຜິດຊອບກິດຈະກຳກິລາ ແລະ ງານສະເຫຼີມສະຫຼອງວັນຄູແຫ່ງຊາດ.<br>- ຂໍ້ຕົກລົງຂອງຜູ້ອຳນວຍການວ່າດ້ວຍການແຕ່ງຕັ້ງຄະນະຮັບຜິດຊອບກິດຈະກຳກິລາ ແລະ ງານສະເຫຼີມສະຫຼອງວັນປີໃໝ່ສາກົນ ແລະ ປີໃໝ່ລາວ.<br>- ຂໍ້ຕົກລົງຂອງຜູ້ອຳນວຍການວ່າດ້ວຍການແຕ່ງຕັ້ງຄະນະຮັບຜິດຊອບກິດຈະກຳກິລາ ແລະ ງານສະເຫຼີມສະຫຼອງວັນເປີດສົກຮຽນໃໝ່ຂອງສະຖາບັນ.<br>- ຂໍ້ຕົກລົງຂອງຜູ້ອຳນວຍການວ່າດ້ວຍການແຕ່ງຕັ້ງຄະນະຮັບຜິດຊອບກິດຈະກຳກິລາ ແລະ ງານສະເຫຼີມສະຫຼອງວັນເປີດກິດຈະກຳຂອງສະຖາບັນ.<br>- ຂໍ້ຕົກລົງຂອງຜູ້ອຳນວຍການວ່າດ້ວຍການແຕ່ງຕັ້ງຄະນະຮັບຜິດຊອບກິດຈະກຳກິລາ ແລະ ງານສະເຫຼີມສະຫຼອງວັນແມ່ຍິງສາກົນ.<br>- ຮູບພາບການເຄື່ອນໄຫວກິລາ ແລະ ກິດຈະກຳຕ່າງໆຂອງອະດີດນັກສຶກສາ.<br>- ຮູບພາບການຂຶ້ນເລົ່າປະຫວັດສະໄໝຮຽນຢູ່ທີ່ວິທະຍາໄລຄູ ສະຫວັນນະເຂດ.<br>- ຮູບພາບການມອບທຶນສົມທົບຕ່າງໆ.<br>- ຮູບພາບການມອບສິ່ງທີ່ລະລຶກຕ່າງໆ. |
| **ຕົວຊີ້ວັດ 32** | **ເຄືອຄ່າຍກັບຜູ້ປະກອບການ (ຫົວໜ່ວຍທຸລະກິດອື່ນໆ) ແລະ ມີການເຄື່ອນໄຫວເປັນປົກກະຕິເພື່ອຊ່ວຍນັກສຶກສາທີ່ຮຽນຈົບໃໝ່ໃນການຊອກວຽກເຮັດງານທຳຫຼືເຄືອຄ່າຍການປະສານງານ, ຕິດຕາມ ແລະ ເກັບກຳຂໍ້ມູນຜູ້ສຳເລັດການສຶກສາເຄືອຄ່າຍກັບຜູ້ປະກອບການ (ຫົວໜ່ວຍທຸລະກິດອື່ນໆ) ແລະ ມີການເຄື່ອນໄຫວເປັນປົກກະຕິເພື່ອຊ່ວຍນັກສຶກສາທີ່ຮຽນຈົບໃໝ່ໃນການຊອກວຽກເຮັດງານທຳຫຼືເຄືອຄ່າຍການປະສານງານ, ຕິດຕາມ ແລະ ເກັບກຳຂໍ້ມູນຜູ້ສຳເລັດການສຶກສາ** |
| ຈຸດດີ | - ໄດ້ມີການຕິດຕາມນັກສຶກສາທີ່ຮຽນຈົບໃນການຊອກວຽກເຮັດງານທຳທັງສອງແຂວງ: ສະຫວັນນະເຂດ ແລະ ຄຳມ່ວນ.<br>- ມີສະຖິຕິ ແລະ ຂໍ້ມູນນັກສຶກສາທີ່ສຳເລັດການສຶກສາທັງສອງແຂວງ: ສະຫວັນນະເຂດ ແລະ ຄຳມ່ວນ. |
| ຂໍ້ຄົງຄ້າງ | - ຍັງບໍ່ມີເຄືອຄ່າຍກັບຜູ້ປະກອບການ ຫຼື ຫົວໜ່ວຍທຸລະກິດອື່ນ ເພາະເປັນສະຖາບັນສ້າງຄູ. |
| ຂໍ້ສະເໜີແນະ | - ຄວນມີເຄືອຄ່າຍກັບຜູ້ປະກອບການ ຫຼື ຫົວໜ່ວຍທຸລະກິດ ຖ້າເປີດສອນສາຍວິຊາຊີບອື່ນ. |
| ຂໍ້ມູນຫຼັກຖານ | - ຂໍ້ຕົກລົງຂອງຜູ້ອຳນວຍການວິທະຍາໄລຄູ ສະຫວັນນະເຂດວ່າດ້ວຍການແຕ່ງຕັ້ງຄະນະຮັບຜິດຊອບລົງເກັບກຳສະຖິຕິ ແລະ ຂໍ້ມູນນັກສຶກສາທີ່ສຳເລັດການສຶກສາທັງ |

| | |
|---|---|
| | ສອງແຂວງ: ສະຫວັນນະເຂດ ແລະ ຄໍາມ່ວນ.<br>- ສະຖິຕິ ແລະ ຂໍ້ມູນນັກສຶກສາທີ່ສໍາເລັດການສຶກສາທັງສອງແຂວງ: ສະຫວັນນະເຂດ ແລະ ຄໍາມ່ວນ.<br>- ບົດສະຫຼູບຜົນສໍາເລັດຂອງການສ້າງຄູໃນສົກຮຽນຜ່ານມາ |
| **ມາດຕະຖານ VII** | **ສະພາບແວດລ້ອມ ແລະ ແຫຼ່ງການຮຽນຮູ້** |
| **ຕົວຊີ້ວັດ 33** | **ມີນະໂຍບາຍ, ລະບຽບການ ແລະ ຂັ້ນຕອນການຄຸ້ມຄອງ-ບໍລິຫານພະນັກງານຂັ້ນຕ່າງໆທີ່ຈະແຈ້ງ** |
| ຈຸດດີ | - ມີລະບຽບ, ຂໍ້ກໍານົດຊົ່ວຄາວຂອງສະຖາບັນ.<br>- ມີການປັບປຸງລະບຽບ, ຂໍ້ກໍານົດໃຫ້ເຂົ້າກັບສະພາບໃນປະຈຸບັນໃນທຸກໆສົກຮຽນ.<br>- ມີນະໂຍບາຍໃນການຄຸ້ມຄອງ ແລະ ຊ່ວຍເຫຼືອພະນັກງານເຊັ່ນ: ໄປຮ່ວມກອງປະຊຸມຕ່າງໆທັງພາຍໃນ ແລະ ຕ່າງປະເທດ, ການໄປຍົກລະດັບທັງພາຍໃນ ແລະ ຕ່າງປະເທດ, ການແຕ່ງງານ, ເກີດລູກ, ເຈັບເປັນ ຫຼື ເສຍຊີວິດ. |
| ຂໍ້ຄົງຄ້າງ | - ນະໂຍບາຍບາງຢ່າງຍັງບໍ່ສົມດຸນ ແລະ ເໝາະສົມກັບສະພາບເສດຖະກິດໃນປະຈຸບັນ. |
| ຂໍ້ສະເໜີແນະ | - ຄວນປັບນະໂຍບາຍໃຫ້ສົມດຸນ ແລະ ເໝາະສົມກັບສະພາບເສດຖະກິດໃນປະຈຸບັນ. |
| ຂໍ້ມູນຫຼັກຖານ | - ລະບຽບ, ຂໍ້ກໍານົດຊົ່ວຄາວຂອງສະຖາບັນໃນແຕ່ລະສົກຮຽນ.<br>- ບົດສະຫຼູບລາຍຈ່າຍນະໂຍບາຍຕ່າງໆໃນແຕ່ລະສົກຮຽນ. |
| **ຕົວຊີ້ວັດ 34** | **ສະຖາບັນມີສິ່ງອໍານວຍຄວາມສະດວກທີ່ພຽງພໍເຊັ່ນ: ອາຄານ, ຫ້ອງຮຽນ, ຫ້ອງການ, ຫ້ອງປະຊຸມ, ສະໂມສອນ, ຫ້ອງປະຖົມພະຍາບານຂັ້ນພື້ນຖານ, ຫ້ອງນໍ້າ, ລະບົບໄຟຟ້າ, ນໍ້າປະປາ ຫຼື ລະບົບນໍ້າສະອາດ ແລະ ເຄື່ອງມືຮັບໃຊ້ທີ່ຈໍາເປັນອື່ນໆ** |
| ຈຸດດີ | - ສະຖາບັນມີເນື້ອທີ່ ແລະ ສະຖານທີ່ກວ້າງຂວາງ.<br>- ສະຖາບັນມີສິ່ງອໍານວຍຄວາມສະດວກທີ່ພຽງພໍໃນການຈັດການຮຽນ-ການສອນ.<br>- ມີອາຄານສະຖານທີ່ທີ່ພຽງພໍໃນການຈັດການຮຽນ-ການສອນ.<br>- ມີຫ້ອງຮຽນທີ່ກວ້າງໃຫຍ່ ແລະ ເໝາະສົມສໍາລັບໃນການຈັດການຮຽນ-ການສອນ.<br>- ມີຫ້ອງການພຽງພໍສໍາລັບພະນັກງານຄູອາຈານ.<br>- ມີຫ້ອງປະຊຸມສອງຫ້ອງທີ່ສາມາດຮອງຮັບກອງປະຊຸມໃຫຍ່ ແລະ ນ້ອຍຕາມຄວາມເໝາະສົມ.<br>- ມີສະໂມສອນສອງຫຼັງທັງໃຫຍ່ ແລະ ນ້ອຍເຊິ່ງສາມາມຮອງຮັບຈໍານວນຄົນໄດ້ຫຼາຍ.<br>- ມີຫ້ອງນໍ້າໃນແຕ່ລະຫ້ອງການ, ໃນແຕ່ລະຕຶກຂອງສາຍຮຽນໃຫ້ແກ່ນັກສຶກສາ ແລະ ຄູອາຈານ.<br>- ແຕ່ລະຕຶກມີໄຟຟ້າ ລະ ນໍ້າປະປາໃຊ້.<br>- ມີເຄື່ອງມືຮັບໃຊ້ໃນການຈັດການຮຽນ-ການສອນເຊັ່ນ: ຄອມພິວເຕີ, ເຄື່ອງປິ່ນເຕີ, ເຄື່ອງສະແກນ, ຈັກໂຟໂຕກ໋ອບປີ, ຕິດຕັ້ງລະບົບອິນເຕີເນັດໃຫ້ທຸກໆຫ້ອງການ. |
| ຂໍ້ຄົງຄ້າງ | - ສະຖາບັນເຮົາຍັງບໍ່ມີຫ້ອງປະຖົມພະຍາບານຂັ້ນພື້ນຖານ. |
| ຂໍ້ສະເໜີແນະ | - ຄວນຈັດຕັ້ງປະຕິບັດຫ້ອງປະຖົມພະຍາບານຂັ້ນພື້ນຖານ ແລະ ບັນຈຸຮັບເອົາພະຍາບານມາປະຈໍາຢູ່ສູນ. |
| ຂໍ້ມູນຫຼັກຖານ | - ແຜນທີ່ເນື້ອທີ່ຂອງວິທະຍາໄລຄູ ສະຫວັນນະເຂດ. (ໃບຕາດິນກໍາລັງແລ່ນເອກະສານ) |

| | |
|---|---|
| | - ບັນຊີສັບສິນວັດສະດຸອຸປະກອນ (ສະຫຼຸບລວມແຕ່ລະຊະນິດ).<br>- ບົດລາຍງານການບູລະນະສ້ອມແປງຊັບສິນວັດສະດຸອຸປະກອນຂອງຂະແໜງການສຶກສາຂອງ ວຄສ ໃນແຕ່ລະສົກ.<br>- ແຜນອາດການແຈກຢາຍເຄືອຂ່າຍອິນເຕີເນັດໃຫ້ແຕ່ລະຫ້ອງການ. |
| **ຕົວຊີ້ວັດ 35** | **ສະຖາບັນມີລະບົບສຸຂະອະນາໄມ ແລະ ຄວາມປອດໄພສໍາລັບພະນັກງານ, ຄູອາຈານ ແລະ ນັກສຶກສາທີ່ນໍາໃຊ້ສິ່ງອໍານວຍຄວາມສະດວກພາຍໃນສະຖາບັນ** |
| ຈຸດດີ | - ສະຖາບັນມີຫ້ອງນໍ້າພຽງພໍໃຫ້ແກ່ພະນັກງານຄູອານຈານ ແລະ ນັກສຶກສາ.<br>- ຫ້ອງນໍ້າມີຄວາມປອດໄພໃຫ້ແກ່ພະນັກງານຄູອານຈານ ແລະ ນັກສຶກສາ.<br>- ມີຫ້ອງນໍ້າແຍກ ຍິງ-ຊາຍ.<br>- ມີຫ້ອງນໍ້າໃນແຕ່ລະອາຄານຮຽນ ແລະ ຫໍພັກ. |
| ຂໍ້ຄົງຄ້າງ | - ຫ້ອງນໍ້າສໍາລັບນັກສຶກສາຍັງບໍ່ໄດ້ຮັບການເອົາໃຈໃສ່ຮັກສາຄວາມສະອາດເທົ່າທີ່ຄວນ (ຍັງເປື້ອນສົກກະປົກ). |
| ຂໍ້ສະເໜີແນະ | - ຄວນມີວິທີການໃນການຮັກສາບົວລະບັດໃຫ້ສະອາດກວ່ານີ້. |
| ຂໍ້ມູນຫຼັກຖານ | - ບັນຊີຊັບສິນອາຄານ, ສະຖານທີ່, ວັດຖຸອຸປະກອນ ແລະ ວຽກງານສິ່ງແວດລ້ອມ ວຄສ.<br>- ບົດໂຄງການຮັກສາສິ່ງແວດລ້ອມ ວຄສ ໃນແຕ່ລະສົກຮຽນ.<br>- ຂໍ້ຕົກລົງຂອງຜູ້ອໍານວຍການວ່າດ້ວຍການແບ່ງເຂດຮັບຜິດຊອບຄຸ້ມຄອງອາຄານ, ສະຖານທີ່, ວັດຖຸອຸປະກອນ ແລະ ສິ່ງແວດລ້ອມໃຫ້ພາກສ່ວນຕ່າງໆໃນວຄສ ຮັບຜິດຊອບ.<br>- ໜັງສືສັນຍາຜູ້ອໍານວຍການກັບຜູ້ຮັບເໝົາປັວແປງອາຄານສະຖານທີ່ທີ່ ວຄສ. |
| **ຕົວຊີ້ວັດ 36** | **ສະຖາບັນມີລະບົບປ້ອງກັນຄວາມສະຫງົບພາຍໃນສະຖາບັນຂອງຕົນ** |
| ຈຸດດີ | - ສະຖາບັນມີການແຕ່ງຕັ້ງພະນັກງານຄູອາຈານເປັນປ້ອງກັນຂອງໂຮງຮຽນ.<br>- ສະຖາບັນມີການແຕ່ງຕັ້ງນັກສຶກສາເປັນປ້ອງກັນຮ່ວມກັບພະນັກງານຄູອາຈານ.<br>- ມີການຜັດປ່ຽນກັນເວນຍາມຕະຫຼອດ 24 ຊົ່ວໂມງ.<br>- ພະນັກງານຄູອາຈານໄດ້ໄກ້ສິດຕິດແທດກັບນັກສຶກສາທີ່ເປັນປ້ອງກັນຂອງໂຮງຮຽນ.<br>- ມີການແຕ່ງຕັ້ງເວນຍາມຕະຫຼອດປີທັງປົກກະຕິ ແລະ ພັກຮຽນ. |
| ຂໍ້ຄົງຄ້າງ | - ບົດລາຍງານກ່ຽວກັບຄວາມປອດໄພ, ການປ້ອງກັນຄວາມສະຫງົບພາຍໃນສະຖາບັນຈາກໜ່ວຍງານຮັບຜິດຊອບໃນສະຖາບັນຍັງບໍ່ທັນເປັນປົກກະຕິ. |
| ຂໍ້ສະເໜີແນະ | - ໃຫ້ມີການລາຍງານກ່ຽວກັບຄວາມປອດໄພ, ການປ້ອງກັນຄວາມສະຫງົບພາຍໃນສະຖາບັນຈາກໜ່ວຍງານຮັບຜິດຊອບໃນສະຖາບັນເປັນປົກກະຕິ. |
| ຂໍ້ມູນຫຼັກຖານ | - ຂໍ້ຕົກລົງຂອງ ຜອ ວ່າດ້ວຍການແຕ່ງຕັ້ງຄະນະປ້ອງກັນໂຮງຮຽນ.<br>- ຂໍ້ຕົກລົງຂອງ ຜອ ວ່າດ້ວຍການແຕ່ງຕັ້ງຄະນະນັກສຶກສາເປັນປ້ອງກັນໂຮງຮຽນ.<br>- ຂໍ້ຕົກລົງຂອງ ຜອ ວ່າດ້ວຍການແຕ່ງຕັ້ງຄະນະຮັບຜິດຊອບເວນຍາມໃນວຄສ ແຕ່ລະສົກຮຽນ (ມີປຶ້ມບັນທຶກເວນຍາມເປັນລາຍວັນ).<br>- ບົດສະຫຼຸບວຽກງານປ້ອງກັນຄວາມສະຫງົບ. |
| **ຕົວຊີ້ວັດ 37** | **ສະຖາບັນມີການບໍາລຸງຮັກສາ, ສ້ອມແປງ, ຂະຫຍາຍ/ພັດທະນາ ແລະ ປັບປຸງສິ່ງອໍານວຍ** |

| | |
|---|---|
| | **ຄວາມສະດວກຄົບວົງຈອນຂອງຕຶກເປັນແຕ່ລະໄລຍະໂດຍອີງຕາມຄວາມຕ້ອງການໃນປະຈຸບັນ ແລະ ອະນາຄົດ** |
| ຈຸດດີ | - ມີແຜນການບາລຸງຮັກສາ ແລະ ສ້ອມແປງອາຄານສະຖານທີ່ລະອຽດ.<br>- ມີແຜນຂະຫຍາຍ ແລະ ພັດທະນາອາຄານສະຖານທີ່ລະອຽດ.<br>- ມີແຜນຍຸດທະສາດ 5 ປີ, 10 ປີ ໃນການພັດທະນາ ວຄສ.<br>- ມີແຜນພັດທະນາປະຈໍາປີ. |
| ຂໍ້ຄົງຄ້າງ | - ການປັບປຸງປົວແປງສິ່ງອໍານວຍຄວາມສະດວກບາງຢ່າງຂອງສະຖາບັນຍັງບໍ່ເຂົ້າກັບແຜນ. |
| ຂໍ້ສະເໜີແນະ | - ຄວນທົບທວນເບິ່ງຄືນແຜນຍຸດທະສາດ, ແຜນພັດທະນາປະຈໍາປີ, ແລະ ແຜນນໍາໃຊ້ສິ່ງອໍານວຍຄວາມສະດວກຂອງສະຖາບັນໃຫ້ຈະແຈ້ງຕື່ມ. |
| ຂໍ້ມູນຫຼັກຖານ | - ວິໄສທັດຂອງ ວຄສ ແຕ່ປີ 2016 ຮອດປີ 2020.<br>- ແຜນຍຸດທະສາດ 5 ປີ, 10 ປີ.<br>- ແຜນພັດທະນາປະຈໍາປີ.<br>- ບົດລາຍງານການສ້ອມແປງວັດສະດຸສັບສິນຕ່າງໆໃນວຄສ.<br>- ບົດສະຫຼຸບການກໍ່ສ້າງອາຄານສະຖານທີ່ຕ່າງໆໃນວຄສ.<br>- ບົດສະຫຼຸບການກໍ່ສ້າງທາງ ວຄສ. |
| **ຕົວຊີ້ວັດ 38** | **ສະຖາບັນມີແຫຼ່ງຮຽນຮູ້ທີ່ພຽງພໍຢູ່ໃນສະຖາບັນຕົນເອງເຊັ່ນ: ຫ້ອງສະມຸດ, ຫ້ອງທົດລອງ, ຫ້ອງຄອມພິວເຕີ, ສື່ທາງເອເລັກໂຕຼນິກ ແລະ ອື່ນໆ ເພື່ອຮັບໃຊ້ການຮຽນ-ການສອນ, ການຄົ້ນຄ້ວາວິທະຍາສາດ ແລະ ກິດຈະກໍາຂອງສະຖາບັນ** |
| ຈຸດດີ | - ມີຫ້ອງສະຫມຸດທີ່ກວ້າງຂວາງແລະ ນັກສຶກສາສາມາດນໍາໃຊ້ອິນເຕີເນັດໄດ້ເພື່ອຊອກຫາຂໍ້ມູນ.<br>- ຫ້ອງສະໝຸດມີປຶ້ມ ແລະ ເອກະສານພຽງພໍໃຫ້ນັກຮຽນຄົ້ນຄວ້າ.<br>- ມີຫ້ອງທົດລອງ.<br>- ມີຫ້ອງ Lab, ຫ້ອງຄອມພິວເຕີ 3 ຫ້ອງສາມາດຮອງຮັບນັກຮຽນໄດ້.<br>- ມີສື່ເອເລັກໂຕຼນິກທີ່ທັນສະໄໝເຊັ່ນ: ຫ້ອງຟັງສຽງ, ຫ້ອງ Smart board, ຫ້ອງທົດລອງ ແລະ ອື່ນໆ. |
| ຂໍ້ຄົງຄ້າງ | - ການຈັດລະບຽບຫ້ອງສະໝຸດແມ່ນຍັງເຮັດບໍ່ໄດ້ດີ. |
| ຂໍ້ສະເໜີແນະ | - ຄວນມີການຖອດຖອນບົດຮຽນກັບມະຫາວິທະຍາໄລຕ່າງປະເທດ (ປະເທດໄທ ຫຼື ຫວຽດນາມ). |
| ຂໍ້ມູນຫຼັກຖານ | - ຮູບພາບຫໍສະໝຸດ, ຮູບພາບຫ້ອງທົດລອງວິທະຍາສາດ, ຮູບພາບຫ້ອງຄອມພິວເຕີ ແລະ ຮູບພາບຫ້ອງຟັງສຽງໃນວຄສ.<br>- ບັນຊີອຸປະກອນຫ້ອງທົດລອງວິທະຍາສາດ ແລະ ຫ້ອງຟັງສຽງ ວຄສ.<br>- ບັນຊີປຶ້ມໃນຫ້ອງສະໝຸດ.<br>- ບັນຊີຊັບສິນວັດສະດຸອຸປະກອນ.<br>- ຕາຕະລາງບໍລິການຫ້ອງທົດລອງວິທະຍາສາດ, ຕາຕະລາງຈັດການຮຽນ - ການສອນວິຊາຄອມພິວເຕີ - ICT ແລະ ຕາຕະລາງບໍລິການຫ້ອງຟັງສຽງ. |

| | |
|---|---|
| | - ກົດລະບຽບການນຳໃຊ້ Computer, Internet ແລະ ອຸປະກອນ ICT ຂອງ ວຄສ.<br>- ບົດສະຫຼຸບ ແລະ ແຜນການການປະຕິບັດວຽກງານໃນຫ້ອງສະໝຸດ.<br>- ກົດລະບຽບຂອງການນຳໃຊ້ຫ້ອງສະໝຸດ.<br>- ຕາຕະລາງສັງລວມປຶ້ມຫ້ອງສະໝຸດ ວຄສ.<br>- ເອກະສານປະກອບການຮຽນ-ການສອນໄຟຣເອເລັກໂຕຣນິກຂອງຄູອາຈານ.<br>- ສະຖິຕິນັກຮຽນເຂົ້າຊົມໃຊ້ຫ້ອງສະໝຸດໃນແຕ່ລະສົກຮຽນ. |
| **ຕົວຊີ້ວັດ 39** | **ບັນດາແຫຼ່ງຮຽນຮູ້ທີ່ມີພຽງພໍແລ້ວຍັງຕ້ອງມີການປັບປຸງຕະຫຼອດເວລາໃນຮູບແບບຕ່າງໆ ເພື່ອໃຫ້ບໍລິການນັກສຶກສາ, ຄູອາຈານ ແລະ ພະນັກງານອື່ນໆໄດ້ນຳໃຊ້ແນ່ໃສ່ສະໜັບສະໜູນການຮຽນ-ການສອນ** |
| ຈຸດດີ | - ມີການປັບປຸງ ແລະ ພັດທະນາບັນດາແຫຼ່ງການຮຽນຮູ້ຕ່າງໆໃນສະຖາບັນເປັນແຕ່ລະໄລຍະ.<br>- ມີແຜນເພີ້ມແຫຼ່ງການຮຽນຮູ້ໃຫ້ຫຼາກຫຼາຍໃນການຈັດການຮຽນການສອນ. |
| ຂໍ້ຄົງຄ້າງ | - ລາຍງານການປະເມີນການນຳໃຊ້ບັນດາແຫຼ່ງຮຽນຮູ້ໂດຍນັກສຶກສາ, ຄູອາຈານ, ພະນັກງານອື່ນໆຍັງບໍ່ປົກກະຕິ ແລະ ຕໍ່ເນື່ອງ. |
| ຂໍ້ສະເໜີແນະ | - ຄວນມີການລາຍງານການປະເມີນການນຳໃຊ້ບັນດາແຫຼ່ງຮຽນຮູ້ໂດຍນັກສຶກສາ, ຄູອາຈານ, ພະນັກງານອື່ນໆໃຫ້ປົກກະຕິ ແລະ ຕໍ່ເນື່ອງ. |
| ຂໍ້ມູນຫຼັກຖານ | - ບົດລາຍງານການບູລະນະສ້ອມແປງສັບສິນວັດສະດຸອຸປະກອນຂອງວຄສ.<br>- ບົດວິໄຈການນຳໃຊ້ຄອມພິວເຕີ ແລະ ອິນເຕີເນັດຂອງພະນັກງານ ແລະ ຄູສອນໃນວຄສ.<br>- ໂຄງການປັບປຸງ ແລະ ພັດທະນາແຫຼ່ງການຮຽນຮູ້ຕ່າງໆ.<br>- ບົດສະຫຼູບການຊື້ວັດສະດຸອຸປະກອນເຂົ້າຫ້ອງຮຽນ.<br>- ໃບສັນຍາເຊົ່າອິນເຕີເນັດ. |
| **ຕົວຊີ້ວັດ 40** | **ມີແຜນປັບປຸງ ແລະ ພັດທະນາແຫຼ່ງຮຽນຮູ້ທີ່ຈະແຈ້ງພ້ອມທັງພະນັກງານເໝາະສົມ ແລະ ມີປະສິບການເພື່ອຄຸ້ມຄອງຕິດຕາມການນຳໃຊ້ບັນດາແຫຼ່ງຮຽນຮູ້ຕ່າງໆ** |
| ຈຸດດີ | - ມີແຜນການປັບປຸງ ແລະ ພັດທະນາແຫຼ່ງການຮຽນຮູ້ຄອມພິວເຕີ.<br>- ມີແຜນການເຝິກອົບຮົມການປ້ອນຂໍ້ມູນ ແລະ ເວັບໄຊ.<br>- ມີໂຄງການຂະຫຍາຍເຄືອຂ່າຍໃສ່ສະໂມສອນ ແລະ ຫໍສະໝຸດ |
| ຂໍ້ຄົງຄ້າງ | - ແຜນການປັບປຸງ ແລະ ພັດທະນາແຫ່ງຮຽນຮູ້ຕ່າງໆ ພ້ອມທັງບຸກຄະລາກອນທີ່ຮັບຜິດຊອບຍັງບໍ່ສອດຄ່ອງ. |
| ຂໍ້ສະເໜີແນະ | - ຄວນມີ ແຜນການປັບປຸງ ແລະ ພັດທະນາແຫ່ງຮຽນຮູ້ຕ່າງໆ ພ້ອມທັງບຸກຄະລາກອນທີ່ຮັບຜິດຊອບໃຫ້ມີຄວາມສອດຄ່ອງຕື່ມ. |
| ຂໍ້ມູນຫຼັກຖານ | - ແຜນການປັບປຸງ ແລະ ພັດທະນາແຫຼ່ງການຮຽນຮູ້ຄອມພິວເຕີ<br>- ແຜນການເຝິກອົບຮົມການປ້ອນຂໍ້ມູນ ແລະ ເວັບໄຊ<br>- ບົດໂຄງການຂະຫຍາຍເຄືອຂ່າຍໃສ່ສະໂມສອນ ແລະ ຫໍສະໝຸດ<br>- ໂຄງການຂະຫຍາຍຫ້ອງສູນການຮຽນຮູ້ Computer ແລະ Internet ໃນຫໍສະໝຸດເພື່ອຮັບໃຊ້ເຂົ້າໃນການຮຽນ - ການສອນ |

| | |
|---|---|
| | - ບົດລາຍງານການຈັດຕັ້ງປະຕິບັດແຜນປັບປຸງແຫຼ່ງການຮຽນຮູ້ຕ່າງໆ<br>- ຂໍ້ຕົກລົງຂອງ ຜອ ວດສ ວ່າດ້ວຍການແຕ່ງຕັ້ງຜູ້ຮັບຜິດຊອບຫ້ອງທົດລອງພູມສາດ<br>- ປະຫວັດຫຍໍ້ຂອງຜູ້ຮັບຜິດຊອບຫ້ອງທົດລອງວິທະຍາສາດ<br>- ຕາຕະລາງບໍລິການຫ້ອງທົດລອງວິທະຍາສາດ<br>- ບົດລາຍງານການນິເທດການນໍາໃຊ້ຫ້ອງທົດລອງວິທະຍາສາດ |
| **ມາດຕະຖານ VIII** | **ລະບົບຂໍ້ມູນຂ່າວສານ** |
| **ຕົວຊີ້ວັດ 41** | **ສະຖາບັນມີລະບົບຂໍ້ມູນເພື່ອບໍລິຫານ ແລະ ຄຸ້ມຄອງໃນສະຖາບັນທີ່ມີປະສິດທິພາບ, ທັນກັບສະພາບການ ແລະ ຮັບປະກັນຄວາມປອດໄພ** |
| ຈຸດດີ | - ມີລະບົບຖານຂໍ້ມູນ TEMIS ວິທະຍາໄລຄູ ສະຫວັນນະເຂດ.<br>- ມີລະບົບເກັບມ້ຽນເອກະສານ.<br>- ມີການສຳຮອງຂໍ້ມູນໃນຫຼາຍຮູບແບບ.<br>- ມີການພັດທະນາບັນດາໂປຣແກຣມຕ່າງໆນໍາໃຊ້ພາຍໃນສະຖາບັນ. |
| ຂໍ້ຄົງຄ້າງ | -ບາງຄັ້ງລະບົບເຄືອຂ່າຍເກີດການຂັດຂ້ອງ ເນື່ອງຈາກຜົນກະທົບຈາກໄພທຳມະຊາດເປັນສ່ວນຫຼາຍ ພາໃຫ້ ສູນເສຍງົບປະມານໃນການສ້ອມແປງ. |
| ຂໍ້ສະເໜີແນະ | - ຄະນະຮັບຜິດຊອບຈະສຶກສາຫາສາເຫດ ແລະ ວິທີປ້ອງກັນການລັດວົງຈອນຂອງກະແສໄຟຟ້າ,ຂຶ້ນແຜນງົບປະມານຊື້ອຸປະກອນປ້ອງກັນມາຕິດຕັ້ງໃສ່ລະບົບເຄືອຂ່າຍທົ່ວສະຖາບັນ ເພື່ອຮັບປະກັນຄວາມປອດໄພຂອງລະບົບ ພ້ອມກັນນັ້ນ ກໍຈະຈັດເຝິກອົບຮົມໃຫ້ພະນັກງານ, ຄູ-ອາຈານກ່ຽວກັບການປັບປຸງ ແລະ ພັດທະນາລະບົບຖານຂໍ້ມູນ. |
| ຂໍ້ມູນຫຼັກຖານ | - ໂຄງຮ່າງການຈັດຕັ້ງລະບົບຖານຂໍ້ມູນ TEMIS ວິທະຍາໄລຄູ ສະຫວັນນະເຂດ.<br>- ຂໍ້ຕົກລົງຂອງຜູ້ອຳນວຍການ ວ່າດ້ວຍຜູ້ເຂົ້າຮ່ວມການສ້າງລະບົບເກັບມ້ຽນເອກະສານໃນວິທະຍາໄລຄູ ສະຫວັນນະເຂດ.<br>- ຂໍ້ຕົກລົງຂອງຜູ້ອຳນວຍການ ວ່າດ້ວຍຄະນະຮັບຜິດຊອບຖານຂໍ້ມູນTEMIS ຂອງວິທະຍາໄລຄູ ສະຫວັນນະເຂດ.<br>-ການເກັບຮັກສາຖານຂໍ້ມູນທີ່ເປັນຟາຍເອເລັກໂຕຣນິກ ແລະ ເອກະສານມີຢູ່ໃນ Hard disk External.<br>- ລາຍການ ຊອບແວຣ໌ຄອມ ແລະ ລະບົບຖານຂໍ້ມູນທີ່ໃຊ້ໃນວິທະຍາໄລຄູ ສະຫວັນນະເຂດ.<br>- ໂຄງການພັດທະນາໂປຣແກຣມຕ່າງໆຂອງ ວດສ.<br>- ຂໍ້ຕົກລົງຂອງ ຜ ອ ວ່າດ້ວຍການເຂົ້າເຝິກອົບຮົມໂປຣແກຣມຕ່າງໆ. |
| **ຕົວຊີ້ວັດ 42** | **ສະຖາບັນມີຂໍ້ມູນປະຫວັດນັກສຶກສາ (ເຊັ່ນ: ຈຳນວນນັກສຶກສາເຂົ້າຮຽນ, ອັດຕາການປະລະການສຶກສາ, ຈຳນວນຜູ້ສຳເລັດການສຶກສາ, ອັດຕາຜູ້ສຶກສາຕໍ່ ແລະ ການກ້າວໄປສູ່ການຊອກວຽກເຮັດງານທຳ) ແລະ ຖານຂໍ້ມູນຂອງຄູອາຈານ, ພະນັກງານບໍລິຫານ** |
| ຈຸດດີ | - ມີຂໍ້ມູນປະຫວັດນັກສຶກສາໃນແຕ່ລະສົກຮຽນ.<br>- ມີສະຖິຕິຈຳນວນນັກນັກສຶກສາທີ່ເຂົ້າຮຽນໃນແຕ່ລະສົກຮຽນ.<br>- ມີສະຖິຕິການປະລະການຮຽນຂອງນັກສຶກສາໃນແຕ່ລະສົກຮຽນ. |

| | |
|---|---|
| | - ມີສະຖິຕິຈຳນວນນັກສຶກສາທີ່ທີ່ສຳເລັດການຮຽນໃນແຕ່ລະສົກຮຽນ.<br>- ມີສະຖິຕິຈຳນວນນັກສຶກສາທີ່ມາສຶກສາຍົກລະດັບຕໍ່ໃນແຕ່ລະສົກຮຽນ.<br>- ມີຖານຂໍ້ມູນພະນັກງານຄູອາຈານທັງໝົດ. |
| ຂໍ້ຄົງຄ້າງ | - ຍັງບໍ່ມີການຕິດຕາມການຊອກວຽກເຮັດງານທຳຂອງນັກສຶກສາທີ່ຮຽນຈົບເທົ່າທີ່ຄວນ. |
| ຂໍ້ສະເໜີແນະ | - ຄວນມີການຕິດຕາມການຊອກວຽກເຮັດງານທຳຂອງນັກສຶກສາທີ່ຮຽນຈົບໄປ. |
| ຂໍ້ມູນຫຼັກຖານ | - ຂໍ້ຕົກລົງຂອງລັດຖະມົນຕີ ວ່າດ້ວຍການອະນຸມັດນັກສຶກສາເຂົ້າຮຽນຄູ ທີ່ວິທະຍາໄລຄູສະຫວັນນະເຂດໃນແຕ່ລະສົກຮຽນ.<br>- ຂໍ້ຕົກລົງຂອງລັດຖະມົນຕີ ວ່າດ້ວຍການອະນຸມັດໃຫ້ຄູສອນເຂົ້າຮຽນໃນໄລຍະພັກທ້າຍປີຮຽນ ທີ່ວິທະຍາໄລຄູ ສະຫວັນນະເຂດໃນແຕ່ລະສົກຮຽນ.<br>- ຂໍ້ຕົກລົງຂອງລັດຖະມົນຕີ ວ່າດ້ວຍການອອກໃບປະກາສະນິຍະບັດຄູທີ່ຮຽນຈົບຫຼັກສູດສ້າງຄູ ຈາກວິທະຍາໄລຄູ ສະຫວັນນະເຂດໃນແຕ່ລະສົກຮຽນ.<br>- ຂໍ້ມູນປະຫວັດນັກສຶກສາໃນແຕ່ລະສົກຮຽນ.<br>- ສະຖິຕິຈຳນວນນັກນັກສຶກສາທີ່ເຂົ້າຮຽນໃນແຕ່ລະສົກຮຽນ.<br>- ສະຖິຕິການປະລະການຮຽນຂອງນັກສຶກສາໃນແຕ່ລະສົກຮຽນ.<br>- ສະຖິຕິຈຳນວນນັກສຶກສາທີ່ທີ່ສຳເລັດການຮຽນໃນແຕ່ລະສົກຮຽນ.<br>- ສະຖິຕິຈຳນວນນັກສຶກສາທີ່ມາສຶກສາຍົກລະດັບຕໍ່ໃນແຕ່ລະສົກຮຽນ.<br>- ຖານຂໍ້ມູນພະນັກງານຄູອາຈານທັງໝົດ. |
| **ຕົວຊີ້ວັດ 43** | **ສະຖາບັນມີລະບົບຂໍ້ມູນ ແລະ ຖານຂໍ້ມູນລາຍການຊັບສິນ ແລະ ເຄື່ອງໃນສາງທີ່ເປັນຂອງສະຖາບັນຖືກເກັບຮັກສາໄວ້** |
| ຈຸດດີ | - ມີລະບົບຂໍ້ມູນເປັນຂອງຕົວເອງ.<br>- ມີຖານຂໍ້ມູນລາຍການຊັບສິນ ແລະ ເຄື່ອງໃນສາງເປັນຂອງສະຖາບັນ. |
| ຂໍ້ຄົງຄ້າງ | - ການລາຍງານບັນຊີຊັບສິນ ຍັງບໍ່ທັນທົ່ວເຖິງໝົດທຸກຄົນ |
| ຂໍ້ສະເໜີແນະ | -ໃຫ້ມີການລາຍງານບັນຊີຊັບສິນ ທົ່ວເຖິງໝົດທຸກຄົນ |
| ຂໍ້ມູນຫຼັກຖານ | - ຖານຂໍ້ມູນລາຍການຊັບສິນຂອງ ວຄສ.<br>- ບັນຊີຊັບສິນວັດສະດຸອຸປະກອນ (ສະຫຼຸບລວມແຕ່ລະຊະນິດ). |
| **ມາດຕະຖານ IX** | **ລະບົບການປະກັນຄຸນນະພາບພາຍໃນ** |
| **ຕົວຊີ້ວັດ 44** | **ສະຖາບັນມີນະໂຍບາຍ, ຍຸດທະສາດ, ແຜນການ-ແຜນງານ ແລະ ຂັ້ນຕອນການປະກັນຄຸນນະພາບທີ່ຈະແຈ້ງ** |
| ຈຸດດີ | - ມີນະໂຍບາຍໃຫ້ແກ່ຄະນະຮັບຜິດຊອບວຽກງານປະກັນຄຸນນະພາບພາຍໃນ.<br>- ມີການກຳນົດແຜນການ-ແຜນງານປະກັນຄຸນະພາບໃນແຕ່ລະສົກຮຽນ.<br>- ມີຂັ້ນຕອນໃນການຈັດຕັ້ງປະຕິບັດວຽກງານປະກັນຄຸນະພາບໃນແຕ່ລະສົກຮຽນ. |
| ຂໍ້ຄົງຄ້າງ | - ທິດທາງໃນໄລຍະສັ້ນ ແລະ ໄລຍະຍາວ ຍັງບໍ່ທັນລະອຽດ ເພາະວ່າອີງໃສ່ ປື້ມຄູ່ມື |
| ຂໍ້ສະເໜີແນະ | - ຄວນມີທິດທາງໃນໄລຍະສັ້ນ ແລະ ໄລຍະຍາວທີ່ຈະແຈ້ງ |
| ຂໍ້ມູນຫຼັກຖານ | - ຂໍ້ຕົກລົງຂອງຜູ້ອຳນວຍການ ວ່າດ້ວຍຄະນະຮັບຜິດຊອບວຽກງານປະກັນຄຸນະພາບພາຍໃນສະຖາບັນ. |

| | |
|---|---|
| | - ຂໍ້ຕົກລົງຂອງຜູ້ອໍານວຍການ ວ່າດ້ວຍຜູ້ເຂົ້າຮ່ວມປະກັນຄຸນະພາບພາຍໃນສະຖາບັນ.<br>- ແຜນການຈັດຕັ້ງປະຕິບັດລະບົບປະກັນຄຸນນະພາບພາຍໃນ ວຄສ.<br>- ບົດລາຍງານການປະເມີນຕົນເອງໃນແຕ່ລະສົກຮຽນ. |
| **ຕົວຊີ້ວັດ 45** | **ສະຖາບັນຈັດການເຜີຍແຜ່ ແລະ ເຝິກອົບຮົມກ່ຽວກັບວຽກງານປະກັນຄຸນນະພາບໃຫ້ພະນັກງານ ແລະ ນັກສຶກສາໃຫ້ມີຄວາມຮູ້ ແລະ ຄວາມເຂົ້າໃຈຢ່າງເປັນປົກກະຕິ** |
| ຈຸດດີ | - ມີການເຜີຍແຜ່ວຽກງານປະກັນຄຸນນະພາບໃຫ້ພະນັກງານຄູອາຈານພາຍໃນສະຖາບັນ.<br>- ມີການຈັດເຝິກອົບຮົມວຽກງານປະກັນຄຸນນະພາບໃຫ້ແກ່ພະນັກງານຄູອາຈານພາຍໃນສະຖາບັນໃຫ້ມີຄວາມຮູ້ ແລະ ຄວາມເຂົ້າໃຈໃນແຕ່ລະສົກຮຽນ. |
| ຂໍ້ຄົງຄ້າງ | - ການເຜີຍແຜ່ຂໍ້ມູນ ຫຼື ແຜນການຝຶກອົບຮົມດ້ານການປະກັນຄຸນນະພາບຍັງບໍ່ທັນກວ້າງຂວາງ |
| ຂໍ້ສະເໜີແນະ | -ຄວນມີການເຜີຍແຜ່ຂໍ້ມູນ ຫຼື ແຜນການຝຶກອົບຮົມດ້ານການປະກັນຄຸນນະພາບໃຫ້ກວ້າງຂວາງ |
| ຂໍ້ມູນຫຼັກຖານ | - ແຜນການຈັດຕັ້ງປະຕິບັດການປະກັນຄຸນະພາບພາຍໃນສະຖາບັນ.<br>- ຄູມືປະກັນຄຸນະພາບສະຖາບັນການສຶກສາຊັ້ນສູງ (ອີງຕາມຄູ່ມືປະກັນຄຸນະພາບສະຖາບັນການສຶກສາຊັ້ນສູງສຶກສາທິການ ແລະ ກິລາ 2014)<br>- ຂໍ້ຕົກລົງຂອງ ຜອ ວ່າດ້ວຍການເຂົ້າຮ່ວມກອງປະຊຸມປະເມີນຄຸນະພາບພາຍໃນສະຖາບັນ.<br>- ບົດລາຍງານການປະເມີນຕົນເອງໃນແຕ່ລະສົກຮຽນ. |
| **ຕົວຊີ້ວັດ 46** | **ຜົນຂອງການປະເມີນຕົນເອງໄດ້ຖືກນໍາໃຊ້ ແລະ ຜັນຂະຫຍາຍເຂົ້າໃນແຜນການພັດທະນາ** |
| ຈຸດດີ | - ໄດ້ນໍາໃຊ້ຜົນຂອງການປະເມີນເຂົ້າໃນແຜນການພັດທະນາ ວຄສ ໃນສົກຮຽນຕໍ່ໄປ.<br>- ໄດ້ມີການເຜີຍແຜ່ແຜນການພັດທະນາ ວຄສ ໃນສົກຮຽນຕໍ່ໄປໃຫ້ແກ່ບັນດາພະນັກງານ, ຄູອາຈານໃນສະຖາບັນ. |
| ຂໍ້ຄົງຄ້າງ | - ເອກະສານລາຍງານຄວາມຄືບໜ້າ ແລະ ຜົນໄດ້ຮັບຂອງການປະຕິບັດແຜນການຈັດຕັ້ງປະຕິບັດຜົນການປະເມີນຕົນເອງ ຍັງບໍ່ທັນເຜີຍແຜ່ໃຫ້ແກ່ນັກສຶກສາໄດ້ຮັບຮູ້. |
| ຂໍ້ສະເໜີແນະ | - ຄວນເຜີຍແຜ່ໃຫ້ແກ່ນັກສຶກສາໄດ້ຮັບຮູ້. |
| ຂໍ້ມູນຫຼັກຖານ | - ແຜນການຈັດຕັ້ງປະຕິບັດການປະກັນຄຸນະພາບພາຍໃນສະຖາບັນ<br>- ບົດສະຫຼຸບຜົນການປະເມີນການກວດກາຄຸນະພາບພາຍໃນ |
| **ຕົວຊີ້ວັດ 47** | **ສະຖາບັນມີການທົບທວນ, ຕິດຕາມ ແລະ ປັບປຸງວຽກງານປະກັນຄຸນນະພາບຢ່າງເປັນປົກກະຕິ ແລະ ຕໍ່ເນື່ອງ** |
| ຈຸດດີ | - ໄດ້ມີການທົບທວນວຽກງານປະກັນຄຸນນະພາບໃນແຕ່ລະສົກຮຽນ.<br>- ໄດ້ມີການຕິດຕາມວຽກງານປະກັນຄຸນນະພາບໃນແຕ່ລະສົກຮຽນ.<br>- ໄດ້ມີການປັບປຸງວຽກງານປະກັນຄຸນນະພາບໃນແຕ່ລະສົກຮຽນ. |
| ຂໍ້ຄົງຄ້າງ | - ບົດບັນທຶກການທົບທວນ, ຕິດຕາມ ແລະ ຂະບວນການປະກັນຄຸນນະພາບຕ່າງໆຖືກຈັດຕັ້ງປະຕິບັດ ຍັງບໍ່ທັນເຜີຍແຜ່ຢ່າງກວ້າງຂວາງ. |

| | |
|---|---|
| ຂໍ້ສະເໜີແນະ | - ຄວນໃຫ້ມີບົດບັນທຶກການທົບທວນ, ຕິດຕາມ ແລະ ຂະບວນການປະກັນຄຸນນະພາບຕ່າງໆຖືກຈັດຕັ້ງປະຕິບັດ ເຜີຍແຜ່ຢ່າງກວ້າງຂວາງ. |
| ຂໍ້ມູນຫຼັກຖານ | - ໂຄງການດຳເນີນວຽກງານປະເມີນການກວດກາຄຸນະພາບພາຍໃນ.<br>- ຂໍ້ຕົກລົງຜູ້ເຂົ້າຮ່ວມວຽກງານປະເມີນການກວດກາຄຸນະພາບພາຍໃນ.<br>- ບົດບັນທຶກການດຳເນີນເກັບກຳຂໍ້ມູນວຽກງານປະກັນຄຸນະພາບ.<br>- ສະຫຼຸບຜົນການປະເມີນການກວດກາຄຸນະພາບພາຍໃນ. |
| **ຕົວຊີ້ວັດ 48** | **ມີນະໂຍບາຍ, ຍຸດທະສາດ ແລະ ລະບຽບການທີ່ສົ່ງເສີມຄູອາຈານ ແລະ ນັກສຶກສາດຳເນີນການຄົ້ນຄ້ວາວິໄຈ ແລະ ການໃຫ້ບໍລິການດ້ານວິຊາການແກ່ສັງຄົມພາຍໃນ ແລະ ສະຖາບັນຕ່າງໆ** |
| ຈຸດດີ | - ມີນະໂຍບາຍສົ່ງເສີມພະນັກງານຄູອາຈານໃນການດຳເນີນການຄົ້ນຄ້ວາວິໄຈທັງພາຍໃນ ແລະ ພາຍນອກ.<br>- ມີແຜນຍຸດທະສາດໃນການສົ່ງເສີມພະນັກງານຄູອາຈານໃນການດຳເນີນການຄົ້ນຄວ້າວິໄຈທັງພາຍໃນ ແລະ ພາຍນອກ.<br>- ມີການໃຫ້ສະຖາບັນການດ້ານວິຊາການແກ່ສັງຄົມພາຍໃນ ແລະ ສະຖາບັນຕ່າງໆ. |
| ຂໍ້ຄົງຄ້າງ | - ນະໂຍບາຍໃນການສົ່ງເສີມ ແລະ ຄຸ້ມຄອງການບໍລິການທາງດ້ານວິຊາການແກ່ສັງຄົມຍັງບໍ່ທັນກວ້າງຂວາງ. |
| ຂໍ້ສະເໜີແນະ | - ຄວນມີນະໂຍບາຍ ແລະ ລະບຽບການໃນການສົ່ງເສີມ ແລະ ຄຸ້ມຄອງການບໍລິການທາງດ້ານວິຊາການແກ່ສັງຄົມໃຫ້ກວ້າງຂວາງ. |
| ຂໍ້ມູນຫຼັກຖານ | - ນະໂຍບາຍຂໍ້ກຳນົດຂອງ ວຄສ ໃນແຕ່ລະສົກຮຽນ.<br>- ໂຄງການເຝິກອົບຮົມທາງດ້ານວິຊາການຕ່າງໆຂອງແຕ່ລະຫ້ອງການ.<br>- ຂໍ້ຕົກລົງຂອງ ຜອ ວ່າດ້ວຍການແຕ່ງຕັ້ງວິທະຍາກອນ ແລະ ສຳມະນາກອນເຂົ້າຮ່ວມເຝິກອົບຮົມຫົວຂໍ້ຕ່າງໆ.<br>- ບົດສະຫຼຸບລາຍງານຜົນຂອງການເຝິກອົບຮົມໃນຫົວຂໍ້ຕ່າງໆ.<br>- ບັນຊີລົງທະບຽນວິທະຍາກອນ ແລະ ສຳມະນາກອນເຂົ້າຮ່ວມເຝິກອົບຮົມຫົວຂໍ້ຕ່າງໆ. |
| **ມາດຕະຖານ X** | **ການຄົ້ນຄວ້າວິທະຍາສາດ ແລະ ການບໍລິການວິຊາການ** |
| **ຕົວຊີ້ວັດ 49** | **ມີການຄົ້ນຄວ້າວິທະຍາສາດເປັນປົກກະຕິ ແລະ ໄດ້ເຜີຍແຜ່ຜົນງານການຄົ້ນຄວ້າໃຫ້ສັງຄົມໄດ້ຮັບຮູ້** |
| ຈຸດດີ | - ໄດ້ມີການຄົ້ນຄວ້າວິໄຈພາຍໃນສະຖາບັນໃນແຕ່ລະສົກຮຽນ.<br>- ໄດ້ມີການເຜີຍແຜ່ຜົນງານການຄົ້ນຄ້ວາວິໄຈໃຫ້ສັງຄົມໄດ້ຮັບຮູ້ທັງພາຍໃນ ແລະ ຕ່າງປະເທດ.<br>- ໄດ້ມີການເຂົ້າຮ່ວມການຄົ້ນຄ້ວາ ແລະ ເຜີຍແຜ່ຜົນງານການວິໄຈທັງພາຍໃນ ແລະ ຕ່າງປະເທດ. |
| ຂໍ້ຄົງຄ້າງ | - ບັນດາບົດຄວາມການຄົ້ນຄວ້າວິໄຈທີ່ຖືກພິມເຜີຍແຜ່ຍັງບໍ່ທັນຫຼາຍ. |
| ຂໍ້ສະເໜີແນະ | - ຄວນມີວິທີການຕ່າງໆເພື່ອເຮັດໃຫ້ບັນດາບົດຄວາມການຄົ້ນຄວ້າວິໄຈທີ່ຖືກພິມເຜີຍແຜ່ໃຫ້ຫຼາຍຂຶ້ນ. |

| | |
|---|---|
| ຂໍ້ມູນຫຼັກຖານ | - ແຜນການດຳເນີນວຽກງານການຄົ້ນຄວ້າວິໄຈໃນແຕ່ລະສົກຮຽນ.<br>- ໂຄງການຄົ້ນຄວ້າວິໄຈພາຍໃນສະຖາບັນໃນແຕ່ລະສົກຮຽນ.<br>- ໜັງສືສະເໜີເປີດກອງປະຊຸມວຽກງານຄົ້ນຄວ້າວິໄຈພາຍໃນສະຖາບັນ.<br>- ບັນດາບົດວິໄຈພາຍໃນສະຖາບັນຂອງແຕ່ລະກຸ່ມ ແລະ ບຸກຄົນ.<br>- ໃບຢັ້ງຢືນການເຂົ້າຮ່ວມຄົ້ນຄ້ວາ ແລະ ເຜີຍແຜ່ຜົນງານການວິໄຈທັງພາຍໃນ ແລະ ຕ່າງປະເທດ. |
| **ຕົວຊີ້ວັດ 50** | **ມີການບໍລິການທາງດ້ານວິຊາການໃຫ້ແກ່ສັງຄົມເປັນປົກກະຕິ** |
| ຈຸດດີ | - ມີການຈັດກອງປະຊຸມເຝິກອົບຮົມທາງດ້ານວິຊາການໃຫ້ແກ່ສັງຄົມພາຍໃນແຂວງ.<br>- ໄດ້ມີການເຊີນພາກສ່ວນຕ່າງໆທີ່ກ່ຽວຂ້ອງເຂົ້າຮ່ວມກອງປະຊຸມເຝິກອົບຮົມທາງດ້ານວິຊາການທີ່ທາງສະຖາບັນໄດ້ຈັດຂຶ້ນ. |
| ຂໍ້ຄົງຄ້າງ | - ການໃຫ້ບໍລິການທາງດ້ານວິຊາການແກ່ສັງຄົມຍັງມີໜ້ອຍ ແລະ ບໍ່ເປັນປົກກະຕິ. |
| ຂໍ້ສະເໜີແນະ | - ຄວນຈັດກອງປະຊຸມເຝິກອົບຮົມທາງດ້ານວິຊາການໃຫ້ແກ່ສັງຄົມໃຫ້ຫຼາຍຂຶ້ນ ແລະ ໃຫ້ເປັນປົກກະຕິ. |
| ຂໍ້ມູນຫຼັກຖານ | - ໜັງສືສະເໜີຂໍວິທະຍາກອນໄປເຝິກອົບຮົມໃຫ້ສະຖາບັນອື່ນ.<br>- ໜັງສືເຊີນອາຈານສອນຈາກວິທະຍາໄລຄູ ສະຫວັນນະເຂດໄປສອນໃນສະຖາບັນອື່ນ.<br>- ຂໍ້ຕົກລົງຂອງລັດຖະມົນຕີວ່າດ້ວຍການແຕ່ງຕັ້ງທີມຄູເຝິກຂັ້ນກະຊວງ.<br>- ໂຄງການເຝິກອົບຮົມທາງດ້ານວິຊາການຕ່າງໆຂອງແຕ່ລະຫ້ອງການ.<br>- ຂໍ້ຕົກລົງຂອງ ຜອ ວ່າດ້ວຍການແຕ່ງຕັ້ງວິທະຍາກອນ ແລະ ສຳມະນາກອນເຂົ້າຮ່ວມເຝິກອົບຮົມຫົວຂໍ້ຕ່າງໆ.<br>- ບົດສະຫຼຸບລາຍງານຜົນຂອງການເຝິກອົບຮົມໃນຫົວຂໍ້ຕ່າງໆ.<br>- ບັນຊີລົງທະບຽນວິທະຍາກອນ ແລະ ສຳມະນາກອນເຂົ້າຮ່ວມເຝິກອົບຮົມຫົວຂໍ້ຕ່າງໆ.<br>- ບົດສະຫຼຸບໂຄງການເຝິກອົບຮົມທາງດ້ານວິຊາການຕ່າງໆ. |

**ຜູ້ອຳນວຍການ** **ວິທະຍາໄລຄູ ສະຫວັນນະເຂດ, ວັນທີ 15 ສິງຫາ 2018**